# ສະພາບເສດຖະກິດ ໃນ ສປປ ລາວ



## LAO PDR ECONOMIC MONITOR



ຫ້ອງການທະນາຄານໂລກ ທີ່ ນະຄອນຫຼວງວຽງຈັນ

ເມສາ 2008

# ຂໍ້ມູນທົ່ວໄປກ່ຽວກັບ ສປປ ລາວ

| ຕົວວັດແທກດ້ານການພັດທະນາ | ສປປ ລາວ | ອາຊີຕາເວັນອອກ-ປາຊີຟິກ | ບັນດາປະເທດລາຍຮັບຕໍ່າ |
|---|---|---|---|
| **2007** | | | |
| ປະຊາກອນ, ກາງປີ (ລ້ານຄົນ) | 5.9 | 1,900 | 2,403 |
| ຍອດຜະລິດຕະພັນພາຍໃນ-GNI (Atlas method, ຕື້ US$) | 3.4 | 3,539 | 1,562 |
| ລາຍຮັບ GNI ຕໍ່ຫົວຄົນ (ວິທີ Atlas, US$) | 580 | 1,863 | 650 |
| ລາຍຮັບ GNI ຕໍ່ຫົວຄົນ (PPP, ສາກົນ - $) | 2,378 | 6,821 | 2,698 |
| ການເຕີບໂຕຂອງ GDP (%) | 7.5 | 9.4 | 8.0 |
| ການເຕີບໂຕຂອງ GDP ຕໍ່ຫົວຄົນ (%) | 5.7 | 8.6 | 6.1 |
| **ລາຄາພາຍໃນ** | **2005** | **2006** | **2007** |
| ລາຄາຊົມໃຊ້ (ການປ່ຽນແປງຕໍ່ປີ, %) | 10.5 | 6.8 | 4.5 |
| ລາຄາ GDP (deflator) | 8.0 | 4.7 | 4.1 |
| ອັດຕາແລກປ່ຽນ (ສະເລ່ຍທ້າຍເດືອນ, ກີບຕໍ່ໂດລາ US$) | 10,636 | 10,061 | 9,622 |
| **ໂຄງສ້າງເສດຖະກິດ** | | | |
| GDP (ລ້ານ US$) | 2,887 | 3,455 | 4,053 |
| *ກະສິກໍາ (% ຂອງ GDP)* | 44.3 | 42.0 | 40.3 |
| *ອຸດສາຫະກໍາ (% ຂອງ GDP)* | 30.0 | 32.5 | 34.1 |
| *ການບໍລິການ (% ຂອງ GDP)* | 25.7 | 25.5 | 25.6 |
| **ດຸນດ່ຽງການຊໍາລະກັບຕ່າງປະເທດ (BoP) ແລະ ການຄ້າ** | | *(ລ້ານ US$)* | |
| ການສົ່ງອອກສິນຄ້າ (fob) | 648 | 1,029 | 1,053 |
| ການນໍາເຂົ້າສິນຄ້າ (cif) | 1,059 | 1,397 | 1,969 |
| ການສົ່ງອອກສິນຄ້າ ແລະ ບໍລິການ | 870 | 1,269 | 1,327 |
| ການນໍາເຂົ້າສິນຄ້າ ແລະ ບໍລິການ | 1,120 | 1,466 | 2,046 |
| ດຸນດ່ຽງການຄ້າ (ສິນຄ້າ ແລະ ບໍລິການ) | -250 | -197 | -719 |
| ດຸນດ່ຽງບັນຊີເດີນສະພັດ - CAB (% ຂອງ GDP) | -11.7 | -8.8 | -19.1 |
| ດຸນດ່ຽງບັນຊີເດີນສະພັດບໍ່ລວມຊັບພະຍາກອນ - CAB (% ຂອງ GDP) | -9.7 | -7.1 | -8.3 |
| ທຶນສໍາຮອງເງິນຕາຕ່າງປະເທດ, ລວມທັງຄໍາ | 238 | 335 | 539 |
| **ການເງິນຂອງລັດ (ສົກປີງົບປະມານ)** | | *(% ຂອງ GDP)* | |
| ຍອດລາຍຮັບ (ລວມທັງເງິນຊ່ວຍເຫຼືອຫລ້າ) | 13.1 | 14.7 | 15.9 |
| ລາຍຮັບ | 11.4 | 12.6 | 14.1 |
| ລາຍຮັບອາກອນ | 9.4 | 10.8 | 12.5 |
| ລາຍຈ່າຍປະຈໍາ (ບໍລິຫານ) | 8.5 | 9.3 | 9.3 |
| ການຂາດດູນ ຫລືເກີນດູນງົບປະມານ | -4.4 | -3.7 | -2.5 |
| **ໜີ້ສິນຕ່າງປະເທດ ແລະ ການຫລັ່ງໄຫລຂອງທຶນ** | | | |
| ໜີ້ສິນລວມ (% ຂອງ GDP) | 77.1 | 69.1 | 64.7 |
| ການຊໍາລະດອກເບ້ຍ (% ຂອງການສົ່ງອອກ) | 7.2 | 4.0 | 5.8 |
| ການລົງທຶນຕ່າງປະເທດ (ລ້ານ US$) | 492 | 595 | 950 |













*ແຫລ່ງ:* ລັດຖະບານລາວ, ຕົວວັດແທກການພັດທະນາ ແລະ ການຄາດຄະເນຂອງທະນາຄານໂລກ. ຂໍ້ມູນ 2007 ແມ່ນການຄາດຄະເນເບື້ອງຕົ້ນ.







# ສະຫລຸບຫຍໍ້

**ເສດຖະກິດຂອງ ສປປ ລາວ ແມ່ນມີແນວໂນ້ມຈະສືບຕໍ່ເຕີບໂຕຕໍ່ໄປຢ່າງແຂງແຮງ ແຕ່ການເພີ່ມສູງຂຶ້ນຂອງອັດຕາເງິນເຟີ້ໄດ້ພາໃຫ້ເກີດມີຄວາມສ່ຽງ.**

**ສະພາບເສດຖະກິດຂອງ ສປປ ລາວ ໃນຕໍ່ໜ້າແມ່ນມີທ່າແຮງດີ ແລະ ຈະສືບຕໍ່ເຕີບໂຕໃນອັດຕາທີ່ສູງ.** ຍອດຜະລິດຕະພັນພາຍໃນ (GDP) ສືບຕໍ່ເຕີບໂຕໃນອັດຕາທີ່ສູງກ່ວາ 7 ສ່ວນຮ້ອຍ. ຜົນຜະລິດໃນຂະແໜງບໍ່ແຮ່, ອຸດສາຫະກໍາປຸງແຕ່ງ, ກະສິກໍາ, ການກໍ່ສ້າງໂຄງການໄຟຟ້ານໍ້າຕົກ, ການທ່ອງທ່ຽວ ແລະ ການບໍລິການອື່ນໆ. ຂະແໜງບໍ່ແມ່ນຊັບພະຍາກອນປະກອບສ່ວນຫຼາຍກ່ວາ 5 ສ່ວຍຮ້ອຍ ຂອງການເຕີບໂຕດັ່ງກ່າວ ແລະ ຂະແໜງຊັບພະຍາກອນແມ່ນປະກອບສ່ວນປະມານ 2.5 ສ່ວນຮ້ອຍ. ເນື່ອງຈາກວ່າ ສປປ ລາວ ຕັ້ງຢູ່ໃຈກາງຂອງບັນດາປະເທດທີ່ມີການເຕີບໂຕໄວທີ່ສຸດໃນໂລກ (ຈີນ, ຫວຽດນາມ ແລະ ໄທ) ຈຶ່ງໄດ້ຮັບປະໂຫຍດຈາກການເພີ່ມຂຶ້ນຂອງຄວາມຕ້ອງການຕໍ່ຜະລິດຕະພັນລາວ ແລະ ການລົງທຶນຕ່າງໆທີ່ຫລັ່ງໄຫລຈາກປະເທດເຫລົ່ານັ້ນ.

**ສະພາບເສດຖະກິດມະຫາພາກຍັງມີຄວາມໝັ້ນຄົງແຕ່ປະເຊີນກັບຄວາມສ່ຽງເນື່ອງຈາກອັດຕາເງິນເຟີ້ທີ່ສູງຂຶ້ນ.** ພາຍຫລັງທີ່ໄດ້ລຸດລົງໃນລະດັບທີ່ຕໍ່າສຸດເມື່ອທຽບກັບຫຼາຍປີທີ່ຜ່ານມາ (4.5% ໃນປີ 2007) ອັດຕາເງິນເຟີ້ໄດ້ເພີ່ມຂຶ້ນເປັນ 6.4 ສ່ວນຮ້ອຍ ໃນເດືອນກຸມພາ 2008. ລາຄານໍ້າມັນທີ່ແພງໄດ້ເຮັດໃຫ້ຕົ້ນທຶນຕ່າງໆສູງຂຶ້ນໂດຍສະເພາະແມ່ນ: ການຂົນສົ່ງ (ລວມທັງບຸກຄົນ ແລະ ຄົວເຮືອນ), ການກໍ່ສ້າງ (ລວມທັງວັດຖຸດິບທີ່ນໍາເຂົ້າ ແລະ ຜະລິດຕະພັນເຄມີ ອື່ນໆ), ການບຸກເບີກທີ່ດິນ ແລະ ການປູກຝັງກະສິກໍາ (ລວມທັງວັດສະດຸຕ່າງໆ). ເງິນກີບໄດ້ແຂງຄ່າຂຶ້ນປະມານ 9 ສ່ວນຮ້ອຍ ເມື່ອທຽບກັບໂດລາ ແລະ ໂດຍລວມແມ່ນຄົງທີ່ເມື່ອທຽບກັບເງິນບາດໃນໄລຍະ 6 ເດືອນທີ່ຜ່ານມາ (10/2007-3/2008).

**ສະພາບຖານະການເງິນຂອງລັດໄດ້ສືບຕໍ່ປັບປຸງດີຂຶ້ນ.** ລັດຖະບານໄດ້ບັນລຸເປົ້າລາຍຮັບຕິດຕໍ່ກັນເປັນປີທີສອງ ແລະ ການເກັບລາຍຮັບໄດ້ເພີ່ມຂຶ້ນຈາກ 12.6 ສ່ວນຮ້ອຍຂອງ GDP ໃນສົກປີ 2005/06 ເປັນ 14.1 ສ່ວນຮ້ອຍໃນປີ 2006/07. ການຂາດດຸນງົບປະມານຄາດວ່າຈະລຸດລົງຈາກ 3.7 ສ່ວນຮ້ອຍຂອງ GDP ໃນປີ 2005/06 ເປັນ 2.5 ສ່ວນຮ້ອຍ ໃນ 2006/07. ລາຍຈ່າຍພາກລັດໃນບັນດາຂະແໜງບູລິມະສິດໄດ້ເພີ່ມຂຶ້ນໃນຊຸມປີຜ່ານມາໂດຍສະເພາະໃນຂະແໜງສຶກສາ ແລະ ໂຄງລ່າງ. ໜີ້ສິນຕ່າງປະເທດຂອງລັດໄດ້ລຸດລົງເຫຼືອພຽງ 70 ສ່ວນຮ້ອຍຂອງ GDP ແຕ່ຖືວ່າຍັງຫຼວງຫຼາຍ.

**ການດຸນດ່ຽງພາຍນອກສືບຕໍ່ດີຂຶ້ນແຕ່ອາດມີຜົນກະທົບຕໍ່ໄພເງິນເຟີ້ໃນອານາຄົດ.** ທຶນສໍາຮອງເງິນຕາຕ່າງປະເທດໄດ້ເພີ່ມຂຶ້ນໄວວາເກືອບເທົ່າກັບ 5 ເດືອນຂອງການນໍາເຂົ້າບໍ່ລວມຂະແໜງຊັບພະຍາກອນ ໃນປີ 2007 ແລະ ຄາດວ່າຈະເພີ່ມຂຶ້ນອີກໃນປີ 2008 ຍ້ອນລາຄາສົ່ງອອກບໍ່ແຮ່ ແລະ ກະສິກໍາທີ່ສູງຂຶ້ນ, ລາຍຮັບດ້ານທ່ອງທ່ຽວ ແລະ ການລົງທຶນຕ່າງປະເທດ. ການນໍາເຂົ້າສໍາລັບໂຄງການລົງທຶນໃຫຍ່ໃນຕໍ່ໜ້າອາດມີຜົນກະທົບຕໍ່ການຂາດດຸນບັນຊີເດີນສະພັດຊຶ່ງອາດສູງເຖິງ 19% ຂອງ GDP. ແຕ່ຖ້າບໍ່ລວມຂະແໜງຊັບພະຍາກອນແມ່ນຍັງຢູ່ໃນລະດັບປະມານ 7% ຂອງ GDP.

**ລັດຖະບານ ໄດ້ມີຜົນຄືບໜ້າໃນວຽກງານການປັບປຸງການຄຸ້ມຄອງການເງິນພາກລັດ.** ການຫັນສູ່ສາຍຕັ້ງຂອງກົມຄັງເງິນ, ພາສີ ແລະ ອາກອນ ແມ່ນໄດ້ເລີ່ມຕົ້ນແລ້ວ ລວມທັງການສ້າງກົນໄກການແບ່ງປັນລາຍຮັບ ແລະ ການທົດລອງລວມສູນໃນແຂວງສະຫວັນນະເຂດ, ຄໍາມ່ວນ ແລະ ບໍລິຄໍາໄຊ. ການຈັດຕັ້ງປະຕິບັດສາລະບານບັນຊີສະບັບປັບປຸງແມ່ນມີຜົນຄືບໜ້າດີ ແລະ ຄາດວ່າຈະໄດ້ຖືກນໍາໃຊ້ໃນສົກປີງົບປະມານ 08/09. ການປະເມີນຄວາມຕ້ອງການດ້ານການສ້າງຄວາມສາມາດໃນການກວດສອບບັນຊີໂດຍອົງການກວດສອບບັນຊີປະເທດນິວຊີແລນ ໄດ້ເລີ່ມດໍາເນີນໃນເດືອນ 02/2008 ເພື່ອຊ່ວຍຍົກລະດັບຄວາມສາມາດແກ່ SAO ຂອງລາວ.

**ເຖິງວ່າຈະມີລະບຽບກົດໝາຍເພື່ອສະໜັບສະໜູນວຽກງານການຄ້າຕ່າງປະເທດ ແລະ ທຸລະກິດພາກເອກະຊົນ ແຕ່ວ່າການຈັດຕັ້ງປະຕິບັດຍັງບໍ່ທັນສໍາເລັດຜົນ.** ຜ່ານມາໄດ້ມີຜົນຄືບໜ້າຈໍານວນໜຶ່ງໃນການຈັດຕັ້ງປະຕິບັດກົດໝາຍວິສາຫະກິດສະບັບໃໝ່ ເຊັ່ນ: ການຮັບຮອງເອົາບັນຊີຄຸ້ມຄອງປະເພດກິດຈະກໍາທຸລະກິດ (Negative List) ໃນເດືອນພະຈິກ 2007. ການກະກຽມຮ່າງກົດໝາຍວ່າດ້ວຍບໍ່ແຮ່ສະບັບໃໝ່ ແລະ ດໍາລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍການທ່ອງທ່ຽວແມ່ນເປັນວຽກງານທີ່ສໍາຄັນ. ເພື່ອເອື້ອອໍານວຍການຄ້າລະຫວ່າງປະເທດ ລັດຖະບານລາວໄດ້ລຸດຜ່ອນຈໍານວນອົງການລັດທີ່ເຮັດໜ້າທີ່ກວດກາຕາມດ່ານສາກົນຕ່າງໆລົງເຫຼືອພຽງ 3 ອົງການ: ຕໍາຫຼວດ, ພາສີ ແລະ ການກວດອາຫານ ແລະ ສັດ. ກົດໝາຍວ່າດ້ວຍທະນາຄານທຸລະກິດ ແລະ ການດັດແກ້ດໍາລັດປະທານປະເທດວ່າດ້ວຍເງິນຕາຕ່າງປເທດ ແລະ ວັດຖຸມີຄ່າ ໄດ້ຖືກຮັບຮອງໃນປີ 2007. ວຽກງານການຊີ້ນໍາກວດກາທະນາຄານທຸລະກິດລັດ(SCB) ກໍໄດ້ຮັບການປັບປຸງດີຂຶ້ນລວມທັງການປ່ຽນຕົວແທນຂອງທະນາຄານ ສປປ ລາວ ໂດຍກະຊວງການເງິນ ໃນສະພາບໍລິຫານຂອງ SCB ເພື່ອຕາງໜ້າແກ່ລັດຖະບານໃນນາມເຈົ້າຂອງກໍາມະສິດ, ການລຸດລົງຂອງໜີ້ເສຍ, ແລະ ການຮ່າງແຜນຍຸດທະສາດຂະແໜງທະນາຄານການເງິນ.

# ສາລະບານ


ສະຫລຸບຫຍໍ້ 1

**1** **ສະພາບເສດຖະກິດໃນໄລຍະທີ່ຜ່ານມາ** 4

**1.1** ສະພາບເສດຖະກິດມະຫາພາກ 4

**1.2** ການຈັດຕັ້ງປະຕິບັດແຜນຍຸດທະສາດຫລຸດຜ່ອນຄວາມທຸກຍາກ 11

**2** **ການປະຕິຮູບໂຄງສ້າງ** 12

**2.1** ນະໂຍບາຍ ແລະ ການຄຸ້ມຄອງລາຍຈ່າຍພາກລັດ 12

**2.2** ການປັບໂຄງສ້າງພາກລັດວິສາຫະກິດ 14

**2.3** ການປະຕິຮູບຂະແໜງທະນາຄານ-ສະຖາບັນການເງິນ 17

**2.4** ການປະຕິຮູບການຄ້າ 19

**2.5** ການພັດທະນາພາກເອກະຊົນ 21

**3** **ການຊ່ວຍເຫຼືອຂອງຜູ້ໃຫ້ທຶນໃນດ້ານວຽກງານການປະຕິຮູບ** 24

**3.1** ການຊ່ວຍເຫຼືອຕົ້ນຕໍຂອງຜູ້ໃຫ້ທຶນໃນວຽກງານການປະຕິຮູບໃນ ສປປ ລາວ 24

**3.2** ການເພີ່ມປະສິດທິພາບຂອງການຊ່ວຍເຫຼືອດ້ານການພັດທະນາ 26


**ຮູບສະແດງ**


ຮູບ 1. ການເຕີບໂຕຂອງ GDP (%) ແລະ ອັດຕາເງິນເຟີ້ (% ການປ່ຽນແປງ) 5

ຮູບ 2. ການເຕີບໂຕໂດຍລວມ ແລະ ບໍ່ລວມບັນດາໂຄງການໃຫຍ່ 5

ຮູບ 3. ລາຄາສະບຽງອາຫານ ແລະ ສິນຄ້າອື່ນ (% ການປ່ຽນແປງ) 6

ຮູບ 4. ການປະກອບສ່ວນຂອງລາຄາສະບຽງອາຫານ ແລະ ສິນຄ້າອື່ນຕໍ່ອັດຕາເງິນເຟີ້ 6

ຮູບ 5. ສິນຄ້າຕົ້ນຕໍທີ່ໄດ້ຮັບຜົນກະທົບຈາກລາຄານ້ຳມັນ ແລະ ຄຳ ໃນຊຸມເດືອນຜ່ານມາ (ລະດັບ, % ການປ່ຽນແປງ) 7

ຮູບ 6. ດັດສະນີລາຄາສະບຽງອາຫານ ແລະ ໂລຫະໃນຕະຫຼາດໂລກ 7

ຮູບ 7. ອົງປະກອບຂອງດັດສະນີສະບຽງອາຫານ (% ການປ່ຽນແປງ) 9

ຮູບ 8. ອັດຕາແລກປ່ຽນຂອງເງິນກີບ (ທັນວາ 2006=100) 9

ຮູບ 9. ດຸນດ່ຽງບັນຊີເດີນສະພັດ (% ການປ່ຽນແປງ) 9

ຮູບ 10. ການເກັບລາຍຮັບຂອງລັດຖະບານ 10

ຮູບ 11. ໜີ້ສິນຕ່າງປະເທດຂອງລັດຖະບານ ສປປ ລາວ 10

ຮູບ 12. ດັດສະນີການບໍລິການດ້ານໂຄງລ່າງ (LPI) ຂອງປະເທດຈຳນວນໜຶ່ງ 19

ຮູບ 13. ການສົ່ງອອກ ແລະ ນຳເຂົ້າ ຂອງ ສປປ ລາວ 20

ຮູບ 14. ສິນຄ້າສົ່ງອອກຕົ້ນຕໍ (ລ້ານ US$) 20

ຮູບ 15. ສິນຄ້ານຳເຂົ້າຕົ້ນຕໍ (% ໃນມູນຄ່າລວມ) 20

ຮູບ 16. ການສົ່ງອອກໂດຍແຍກເປັນປະເທດ, ສົກປີ 2007 21

ຮູບ 17. ການນຳເຂົ້າໂດຍແຍກເປັນປະເທດ, ສົກປີ 2007 21

ຮູບ 18. ການລົງທຶນຕ່າງປະເທດໃນ ສປປ ລາວ ___ 22
ຮູບ 19. ການລົງທຶນຕ່າງປະເທດໂດຍແຍກເປັນຂະແໜງການ (ລ້ານ US$) ___ 22
ຮູບ 20. ການນຳໃຊ້ທຶນຊ່ວຍເຫຼືອໂດຍໃຊ້ລະບຽບພາຍໃນຢູ່ໃນບັນດາປະເທດອາຊີຕາເວັນອອກສ່ຽງໃຕ້ (%, 2006) ___ 26

## ຕາຕະລາງ

ຕາຕະລາງ 1. ອົງປະກອບຂອງການສົ່ງອອກ ແລະ ນຳເຂົ້າ ___ 8
ຕາຕະລາງ. ສ່ວນແບ່ງຂອງສະບຽງອາຫານໃນການຊົມໃຊ້ລວມ ແລະ ຄວາມທຸກຍາກດ້ານອາຫານ, %, 2002/03 ___ 8
ຕາຕະລາງ 3. ດຸນດ່ຽງການຊຳລະ, 2004-07 (ລ້ານ US$) ___ 9
ຕາຕະລາງ 4. ລາຍຮັບຕ່າງໆຂອງລັດຖະບານ ___ 13
ຕາຕະລາງ 5. ລາຍຈ່າຍຕ່າງໆຂອງລັດຖະບານ ___ 13
ຕາຕະລາງ 6. ລາຍຈ່າຍຂອງລັດຖະບານໃນ 4 ຂະແໜງບໍລິມະສິດ ___ 13
ຕາຕະລາງ 7. ການປັບລາຄານ້ຳປະປາໃນນະຄອນຫຼວງວຽງຈັນ (ແຕ່ພຶດສະພາ 2007 ຮອດປະຈຸບັນ) ___ 15
ຕາຕະລາງ 8. ສະພາບລວມຂອງຂະແໜງທະນາຄານ-ການເງິນ, 2006 ___ 17
ຕາຕະລາງ 9. ການປັບປຸງຂອງຕົວວັດແທກດ້ານການເງິນໃນພາກທະນາຄານຂອງ ສປປ ລາວ ___ 18
ຕາຕະລາງ 10. ອັດຕາສ່ວນຕ່າງໆດ້ານການເງິນຂອງ 15 ລັດວິສາຫະກິດປະສົມໃຫຍ່ (2002-06) ___ 23

## ເອກະສານຊ້ອນທ້າຍ (Annex)

1. ຄຳສັບຫຍໍ້ ___ 28
2. ຂະແໜງການສົ່ງອອກຕົ້ນຕໍຂອງ ສປປ ລາວ ___ 29
3 . ໂຄງການການລົງທຶນຕົ້ນຕໍຂອງຕ່າງປະເທດ ໃນ ສປປ ລາວ ___ 30
4. ໂຄງການຊ່ວຍເຫຼືອຂອງຜູ້ໃຫ້ທຶນໃນດ້ານວຽກງານການປະຕິຮູບ ໃນ ສປປ ລາວ ___ 32

# 1 ສະພາບການພັດທະນາເສດຖະກິດໃນໄລຍະທີ່ຜ່ານມາ

## 1.1 ສະພາບເສດຖະກິດມະຫາພາກ

ໃນຊຸມປີ 1990 ແລະ ຕົ້ນຊຸມປີ 2000 ເສດຖະກິດຂອງ ສປປ ລາວ ເຕີບໂຕໃນອັດຕາສະເລ່ຍ 6,3% ຕໍ່ປີ ແລະ ອັດຕາຄວາມທຸກຍາກໄດ້ຫລຸດລົງຈາກ 46% ຂອງປະຊາກອນທັງໝົດໃນປີ 1992/93 ເປັນ 33,5% ໃນປີ 2002/03. ໃນຊ່ວງໄລຍະວິກິດການດ້ານການເງິນໃນອາຊີ (1998-99) ອັດຕາເງິນເຟີ້ສະເລ່ຍໄດ້ຖີບຕົວສູງຂຶ້ນເຖິງ 110% ແລະ ອັດຕາການເຕີບໂຕລຸດລົງໃນລະດັບ 4%. ການແກ້ໄຂວິກິດການ ແລະ ນະໂຍບາຍມະຫາພາກຂອງລັດຖະບານໄດ້ຊ່ວຍສ້າງສະຖຽນລະພາບດ້ານເສດຖະກິດ ແລະ ການເຕີບໂຕໄດ້ຟື້ນຕົວມາຢູ່ໃນລະດັບ 6% ໃນຕົ້ນຊຸມປີ 2000. ການຮັບຮອງເອົາໂຄງການຟື້ນຟູສະຖຽນລະພາບເລີ່ມແຕ່ປີ 2000 ແລະ ການຈັດຕັ້ງປະຕິບັດໂຄງການປະຕິຮູບຕ່າງໆແຕ່ປີ 2001 ເປັນຕົ້ນມາ - ໃນຂົງເຂດການຄຸ້ມຄອງລາຍຈ່າຍພາກລັດ, ທະນາຄານ, ພາກລັດວິສາຫະກິດ, ປ່າໄມ້, ການຄ້າ ແລະ ການພັດທະນາພາກເອກະຊົນ – ໄດ້ປະກອບສ່ວນໃຫຍ່ຫຼວງຕໍ່ຜົນສຳເລັດດັ່ງກ່າວ. ໃນໄລຍະປີ 2003-06, ອັດຕາເງິນເຟີ້ໄດ້ລຸດລົງຈາກ 15,5% ເປັນ 6,8% ແລະ ການເຕີບໂຕຕົວຈິງຂອງ GDP ໄດ້ເພີ່ມຂຶ້ນຈາກ 6,1% ເຖິງ 8,1%.

ການເຂົ້າມາລົງທຶນທີ່ຫຼວງຫຼາຍຂອງຕ່າງປະເທດໃນຂະແໜງໄຟຟ້າ ແລະ ບໍ່ແຮ່ ໄດ້ປະກອບສ່ວນສຳຄັນຕໍ່ການເຕີບໂຕຂອງເສດຖະກິດໃນຊຸມປີຜ່ານມາ. ແຕ່ວ່າ ການເພິ່ງພາອາໃສຂະແໜງຊັບພະຍາກອນຫຼາຍຍິ່ງຂຶ້ນອາດເຮັດໃຫ້ເສດຖະກິດມີຄວາມກ່ຽວພັນກັບສະພາບລາຄາສິນຄ້າໃນຕະຫຼາດໂລກທີ່ບໍ່ມີຄວາມແນ່ນອນຫຼາຍຍິ່ງຂຶ້ນ ແລະ ອາດລຸດຜ່ອນການຊຸກຍູ້ການພັດທະນາຂະແໜງການອື່ນກໍເປັນໄດ້. ຄວາມສ່ຽງດັ່ງກ່າວຄວນຕ້ອງໄດ້ຮັບການຄຸ້ມຄອງໃຫ້ດີໃນອານາຄົດຕໍ່ໄປ. ບັນດາຂະແໜງການທີ່ບໍ່ແມ່ນຊັບພະຍາກອນ (ກະສິກຳ, ອຸດສາຫະກຳ ການຜະລິດ ແລະ ປຸງແຕ່ງ ແລະ ການບໍລິການ) ໄດ້ປະກອບສ່ວນອັນສຳຄັນຕໍ່ການເຕີບໂຕໂດຍລວມຂອງເສດຖະກິດ ແລະ ພ້ອມນັ້ນການລົງທຶນໃນບັນດາຂະແໜງການດັ່ງກ່າວໄດ້ເພີ່ມຂຶ້ນຢ່າງໄວວາໃນຊຸມປີທີ່ຜ່ານມາ.

**ການເຕີບໂຕດ້ານເສດຖະກິດຂອງ ສປປ ລາວ ແມ່ນມີແນວໂນ້ມທີ່ດີໃນຕໍ່ໜ້າ ແຕ່ການເພີ່ມສູງຂຶ້ນຂອງອັດຕາເງິນເຟີ້ໃນຫຼາຍເດືອນທີ່ຜ່ານມາພາໃຫ້ເກີດມີຄວາມສ່ຽງ.**

ການເຕີບໂຕຂອງ GDP ແມ່ນຍັງສືບຕໍ່ໃນລະດັບທີ່ສູງກ່ວາ 7 ສ່ວນຮ້ອຍ ໃນປີ 2007 ແລະ ອາດຈະຢູ່ໃນລະດັບດຽວກັນສຳລັບປີ 2008. ແຕ່ວ່າອັດຕາເງິນເຟີ້ໄດ້ຄ່ອຍຖີບຕົວສູງຂຶ້ນໃນຊຸມເດືອນທີ່ຜ່ານມາ. ພາຍຫລັງທີ່ໄດ້ລຸດລົງເຖິງຈຸດຕໍ່າສຸດ 4,5 ສ່ວນຮ້ອຍໃນປີ 2007 (ລົງຈາກ 6,8 ສ່ວນຮ້ອຍ ໃນປີ 2006) ອັດຕາເງິນເຟີ້ ໄດ້ຖີບຕົວສູງຂຶ້ນອີກເຖິງ 7,7 ສ່ວນຮ້ອຍ ໃນເດືອນມີນາ 2008. ຖານະການເງິນຂອງລັດຖະບານໄດ້ສືບຕໍ່ດີຂຶ້ນໃນສົກປີ 2006/07 ຍ້ອນການປະຕິບັດແຜນລາຍຮັບໄດ້ເກີນເປົ້າ ແລະ ລາຍຈ່າຍບໍ່ເກີນແຜນ, ໃນຂະນະທີ່ການຈັດຕັ້ງປະຕິບັດວຽກງານການປັບປຸງການຄຸ້ມຄອງການເງິນພາກລັດແມ່ນດຳເນີນໄປໂດຍດີ. ເຖິງວ່າໄດ້ມີການສ້າງກອບກົດໝາຍເພື່ອສະໜັບສະໜູນວຽກງານການຄ້າກັບສາກົນ ແລະ ການດຳເນີນທຸລະກິດຂອງພາກເອກະຊົນແຕ່ການປະຕິບັດໃນຕົວຈິງຍັງບໍ່ທັນສຳເລັດຜົນເທື່ອ.








## *ການເຕີບໂຕ*

**ເຖິງວ່າສະພາບເສດຖະກິດໂລກຈະມີການຜັນຜວນ ແລະ ທ້າທາຍ ເສດຖະກິດຂອງ ສປປ ລາວ ຄາດວ່າຈະສືບຕໍ່ເຕີບໂຕໃນອັດຕາທີ່ສູງ.**

ອັດຕາການເຕີບໂຕຕົວຈິງຂອງ GDP ຄາດວ່າຈະຢູ່ໃນລະດັບ 7,5 ສ່ວນຮ້ອຍ ໃນປີ 2007 ແລະ ຈະສູງຂຶ້ນເປັນ 7,9 ສ່ວນຮ້ອຍ ໃນປີ 2008 (ເບິ່ງຮູບ 1). ບັນດາໂຄງການໄຟຟ້າ ແລະ ບໍ່ແຮ່ ຄາດວ່າຈະປະກອບສ່ວນພຽງແຕ່ 2,5 ສ່ວນຮ້ອຍຕໍ່ການເຕີບໂຕດັ່ງກ່າວ, ໃນນັ້ນລວມທັງການກໍ່ສ້າງຂອງເຄື່ອນໄຟຟ້າ 4 ແຫ່ງ ແລະ ໂຮງງານຜະລິດທອງຂະໜາດໃຫຍ່ (ຮູບ 2).

ສ່ວນທີ່ເຫລືອອີກ 5 ສ່ວນຮ້ອຍ ແມ່ນຄາດວ່າຈະມາຈາກການລົງທຶນດ້ານການປູກຝັງໃນຂະແໜງກະສິກຳ, ອຸດສາຫະກຳປ່າໄມ້, ການເພີ່ມລາຍຮັບຈາກການທ່ອງທ່ຽວ ແລະ ອຸດສາຫະກຳປຸງແຕ່ງຕ່າງໆ. ເນື່ອງຈາກວ່າ ສປປ ລາວ ແມ່ນຕັ້ງຢູ່ໃຈກາງຂອງບັນດາປະເທດທີ່ມີການເຕີບໂຕໄວທີ່ສຸດໃນໂລກທາງດ້ານເສດ ຖະກິດ (ຈີນ, ຫວຽດນາມ ແລະ ໄທ) ຈຶ່ງໄດ້ຮັບປະໂຫຍດຈາກການເພີ່ມຄວາມຕ້ອງການຂອງບັນດາປະເທດດັ່ງກ່າວຕໍ່ຜະລິດຕະພັນຂອງລາວລວມທັງການລົງທຶນຂອງປະເທດເຫລົ່ານັ້ນໃນ ສປປ ລາວ ທີ່ເພີ່ມຂຶ້ນຢ່າງຫຼວງຫຼາຍ.

**ຮູບ 1. ການເຕີບໂຕຂອງ GDP (%) ແລະ ອັດຕາເງິນເຟີ້ (% ການປ່ຽນແປງ)**




*ແຫລ່ງ:* ລັດຖະບານລາວ ແລະ ການຄາດຄະເນຂອງທະນາຄານໂລກ

**ເສດຖະກິດຂອງ ສປປ ລາວ ສືບຕໍ່ເຕີບໂຕວ່ອງໄວ ແລະ ໝັ້ນຄົງ.**

**ຮູບ 2. ການເຕີບໂຕທີ່ລວມ ແລະ ບໍ່ລວມໂຄງການໃຫຍ່ຕ່າງໆ (ໄຟຟ້າ-ບໍ່ແຮ່)**




*ແຫລ່ງ:* ການຄາດຄະເນຂອງທະນາຄານໂລກ. ການພະຍາກອນຫລ້າສຸດສຳລັບປີ 2007

**ຂະແໜງເສດຖະກິດທີ່ບໍ່ແມ່ນຊັບພະຍາກອນ ແມ່ນປະກອບ ສ່ວນປະມານ 5 ສ່ວນຮ້ອຍ ຂອງການເຕີບໂຕໂດຍລວມ ແລະ ສ່ວນທີ່ເຫລືອອີກ 2.5 ສ່ວນຮ້ອຍແມ່ນມາຈາກຂະແໜງຊັບພະຍາກອນ (ໄຟຟ້າ ແລະ ບໍ່ແຮ່)**

## ອັດຕາເງິນເຟີ້

**ພາຍຫລັງທີ່ລຸດລົງຮອດລະດັບທີ່ຕໍ່າເປັນປະຫວັດການໃນປີ 2007 ອັດຕາເງິນເຟີ້ໄດ້ຖີບຕົວສູງຂຶ້ນເກີນ 7 ສ່ວນຮ້ອຍ ໃນເດືອນມີນາ 2008 ໂດຍໄດ້ຮັບຜົນກະທົບຈາກລາຄານໍ້າມັນໃນຕະຫລາດໂລກທີ່ແພງຂຶ້ນຢ່າງຫຼວງຫຼາຍ.** ການເພີ່ມຂຶ້ນຂອງອັດຕາເງິນເຟີ້ຕົ້ນຕໍແມ່ນຍ້ອນ: ລາຄານໍ້າມັນທີ່ສູງຂຶ້ນ, ການແກ່ວງຕົວຂອງລາຄາສະບຽງອາຫານໃນຕະຫຼາດທ້ອງຖິ່ນຍ້ອນການເກັບກ່ຽວທີ່ຕໍ່າກ່ວາຄາດໝາຍຍ້ອນສະພາບອາກາດທີ່ບໍ່ອໍານວຍໃນປີ 2007 ແລະ ການກໍາຈັດສັດປີກຍ້ອນພະຍາດໄຂ້ຫວັດນົກ ແລະ ການຖີບຕົວສູງຂຶ້ນຂອງສິນຄ້າອື່ນໆ. ໝວດສິນຄ້າຕົ້ນຕໍທີ່ພາໃຫ້ອັດຕາເງິນເຟີ້ສູງຂຶ້ນໃນຊຸມເດືອນທີ່ຜ່ານມາປະກອບດ້ວຍ: ສະບຽງອາຫານ (ຈຸດໜັກແມ່ນເຂົ້າໜຽວ, ຊີ້ນ ແລະ ໄກ່), ການຂົນສົ່ງ (ນໍ້າມັນ ແລະ ຄ່າໂດຍສານຕ່າງໆ), ເຄື່ອງກໍ່ສ້າງເຮືອນ ແລະ ອາຄານ (ວັດສະດຸການກໍ່ສ້າງທີ່ນໍາເຂົ້າໂດຍສະເພາະແມ່ນ ເຫຼັກ ແລະ ໄມ້) ແລະ ເຄື່ອງປະດັບທີ່ເຮັດຈາກຄໍາ. ເຖິງວ່າລາຄາສະບຽງໃນຊ່ວງເດືອນຕຸລາ ຫາ ເດືອນກຸມພາ ໄດ້ເພີ່ມຂຶ້ນໃນອັດຕາທີ່ບໍ່ສູງ ແຕ່ໃນເດືອນມີນາ 2008 ໄດ້ຖີບຕົວສູງຂຶ້ນເຖິງ 9 ສ່ວນຮ້ອຍ ແລະ ພາໃຫ້ດັດສະນີລາຄາລວມເພີ່ມຂຶ້ນ. ລາຄາສິນຄ້າທີ່ບໍ່ແມ່ນສະບຽງອາຫານກໍໄດ້ເພີ່ມສູງຂຶ້ນຢ່າງຕໍ່ເນື່ອງຈົນເກີນ 6 ສ່ວນຮ້ອຍໃນຊຸມເດືອນທີ່ຜ່ານມາ (ຮູບ 3).

**ຮູບ 3. ລາຄາສະບຽງອາຫານ ແລະ ສິນຄ້າອື່ນໆ (% ການປ່ຽນແປງ)**




**ພາຍຫລັງທີ່ໄດ້ລຸງລົງໃນລະ ດັບຕໍ່າສຸດເປັນປະຫວັດການໃນປີ 2007 ອັດຕາເງິນເຟີ້ໄດ້ຖີບຕົວສູງຂຶ້ນໃນໄລຍະທີ່ຜ່ານມາເກີນ 6 ສ່ວນຮ້ອຍ ຊຶ່ງເປັນເປົ້າເບື້ອງຕົ້ນທີ່ລັດຖະບານຕັ້ງໄວ້ສໍາລັບປີ 2008.**

**ຮູບ 4. ການປະກອບສ່ວນຂອງລາຄາສະບຽງ ແລະ ສິນຄ້າອື່ນໆຕໍ່ອັດຕາເງິນເຟີ້[1]**




*ແຫລ່ງ:* ລັດຖະບານລາວ (DoS) ແລະ ການຄິດໄລ່ໂດຍທະນາຄານໂລກ

**ລາຄາສະບຽງອາຫານ, ການຂົນສົ່ງ, ເຄື່ອງກໍ່ສ້າງ ແລະ ເຄື່ອງປະດັບທີ່ແພງຂຶ້ນໄດ້ພາໃຫ້ອັດຕາເງິນເຟີ້ຖີບຕົວສູງຂຶ້ນໃນຊຸມເດືອນຜ່ານມາ.**

---

[1] ການຈັດນໍ້າໜັກຂອງດັດສະນີລາຄາຊົມໃຊ້ໃນ ສປປ ລາວ (ລວມ = 100): ສະບຽງອາຫານກວມ 40.9 ສ່ວນຮ້ອຍ ຂອງດັດສະນີລວມ, ເຄື່ອງດື່ມ ແລະ ຢາສູບ 4.2 ສ່ວນຮ້ອຍ, ເຄື່ອງນຸ່ງຫົ່ມ ແລະ ເກີບ 3.6 ສ່ວນຮ້ອຍ, ເຄື່ອງກໍ່ສ້າງ 3.4 ສ່ວນຮ້ອຍ, ເຄື່ອງຄົວເຮືອນ 6.0 ສ່ວນຮ້ອຍ, ເຄື່ອງປິ່ນປົວ 2.5 ສ່ວນຮ້ອຍ, ຂົນສົ່ງ ແລະ ສື່ສານ 25.8 ສ່ວນຮ້ອຍ, ເຄື່ອງສໍາລານ ແລະ ສຶກສາ 5.1 ສ່ວນຮ້ອຍ, ຮ້ານອາຫານ 4.2 ສ່ວນຮ້ອຍ ແລະ ເຄື່ອງປະດັບ 4.4 ສ່ວນຮ້ອຍ.

**ຮູບ 5. ສິນຄ້າຕົ້ນຕໍທີ່ໄດ້ຮັບຜົນກະທົບຈາກລາຄານ້ຳມັນ ແລະ ຄຳ ໃນຊຸມເດືອນຜ່ານມາ (ລະດັບ, % ການປ່ຽນແປງ)**




*ແຫລ່ງ.* ລັດຖະບານລາວ (DoS) ແລະ ການຄິດໄລ່ໂດຍທະນາຄານໂລກ

ລາຄາສະບຽງອາຫານ, ການຂົນສົ່ງ, ເຄື່ອງກໍ່ສ້າງ ແລະ ໂດຍສະເພາະ ແມ່ນເຄື່ອງປະດັບໄດ້ຖີບຕົວສູງຂຶ້ນ ຢ່າງວ່ອງໄວໃນຫຼາຍເດືອນທີ່ຜ່ານມາ ຍ້ອນລາຄານ້ຳມັນ ແລະ ຄຳທີ່ສູງຂຶ້ນຢ່າງຫຼວງຫຼາຍ. ລາຄາສະບຽງອາຫານຍັງຂຶ້ນກັບລະດູການເປັນຈຸດໜັກ.

**ອີງໃສ່ແນວໂນ້ມທີ່ຜ່ານມາມັນເປັນໄປໄດ້ຍາກທີ່ລັດຖະບານຈະບັນລຸເປົ້າອັດຕາເງິນເຟີ້ທີ່ຕັ້ງໄວ້ໄດ້ທີ່ 6 ສ່ວນຮ້ອຍ.**

ແຕ່ວ່າລັດຖະບານໄດ້ມອບໝາຍໃຫ້ບັນດາກະຊວງທີ່ກ່ຽວຂ້ອງຊ່ວຍກັນຄຸ້ມຄອງບັນຫາເງິນເຟີ້. ທະນາຄານແຫ່ງ ສປປ ລາວ ມີໜ້າທີ່ຮັກສານະໂຍບາຍເງິນຕາຢ່າງເຂັ້ມງວດ ແລະ ອັດຕາແລກປ່ຽນໃຫ້ໝັ້ນຄົງ; ກະຊວງການເງິນແມ່ນເອົາໃຈໃສ່ຮັກສານະໂຍບາຍການເງິນ ແລະ ການຄຸ້ມຄອງລາຍຮັບ; ກະຊວງກະສິກຳ ແລະ ປ່າໄມ້ມີໜ້າທີ່ສົ່ງເສີມການຜະລິດສະບຽງອາຫານ ແລະ ຜະລິດຕະພັນກະສິກຳອື່ນໆ; ແລະ ກະຊວງອຸດສາຫະກຳ ແລະ ຫັດຖະກຳ ແມ່ນ ຕິດຕາມລາຄາຂາຍຍ່ອຍຕ່າງໆໃນປະເທດ ແລະ ແຈ້ງການຂາດແຄນສິນຄ້າຕ່າງໆທີ່ອາດເກີດຂຶ້ນ.

**ເຖິງແນວໃດກໍຕາມ ສປປ ລາວ ແມ່ນຍັງໄດ້ຮັບປະໂຫຍດຈາກການຖີບຕົວສູງຂຶ້ນຂອງລາຄາວັດຖຸດິບທີ່ສົ່ງອອກ.** ການສົ່ງອອກວັດຖຸດິບຂອງ ສປປ ລາວ ປະກອບດ້ວຍ ໂລຫະ (ຕົ້ນຕໍແມ່ນ ທອງ, ຄຳ ແລະ ກົ່ວ), ຢາງພາລາ ແລະ ນ້ຳຕານ (ມີທ່າແຮງສູງ), ພືດຕ່າງໆ ແລະ ຕົ້ນໄມ້ອຸດສາຫະກຳອື່ນໆ. ໃນສອງປີທີ່ຜ່ານມາການຜະລິດ ແລະ ສົ່ງອອກຜະລິດຕະພັນກະສິກຳຂອງລາວ (ກາເຟ, ເຂົ້າ, ສາລີ, ໝາກໄມ້, ຜັກ ແລະ ພືດອື່ນໆ) ໄດ້ຂະຫຍາຍຕົວຫຼາຍຍ້ອນຄວາມຕ້ອງການທີ່ເພີ່ມຂຶ້ນຈາກບັນດາປະເທດອ້ອມຂ້າງໃນພາກພື້ນ (ຮູບ 6).

**ຮູບ 6. ດັດສະນີລາຄາສະບຽງອາຫານ ແລະ ໂລຫະ ໃນຕະຫຼາດໂລກ (2003 = 100)**




*ແຫລ່ງ.* ລັດຖະບານລາວ ແລະ ການຄິດໄລ່ໂດຍທະນາຄານໂລກ

ຜູ້ສົ່ງອອກຜະລິດຕິພັນໂລຫະ, ເມັດພືດ ແລະ ເຄື່ອງກະສິກຳອື່ນໆຂອງລາວ ໄດ້ຮັບປະໂຫຍດຈາກລາຄາທີ່ສູງຂຶ້ນໃນຕະຫຼາດໂລກ.

### ຕາຕະລາງ 1. ອົງປະກອບການສົ່ງອອກ ແລະ ນຳເຂົ້າຂອງ ສປປ ລາວ

| | 2004 | 2005 | 2006 | 2007 |
|---|---|---|---|---|
| **ການສົ່ງອອກ** (ລ້ານ US$) | **500** | **648** | **1,029** | **1,053** |
| ກະສິກຳ | 36 | 42 | 65 | 80 |
| ກາເຟ | 15 | 8 | 13 | 31 |
| ເຄື່ອງປູກຝັງອື່ນໆ ແລະ ສັດລ້ຽງ | 18 | 30 | 45 | 46 |
| ເຄື່ອງປ່າຂອງດົງ | 4 | 4 | 7 | 3 |
| ຊັບພະຍາກອນທຳມະຊາດ | 149 | 308 | 631 | 635 |
| ໄຟຟ້າ | 91 | 105 | 104 | 99 |
| ບໍ່ແຮ່ | 58 | 203 | 527 | 536 |
| ອຸດສາຫະກຳການຜະລິດ | 300 | 275 | 266 | 291 |
| ຕັດຫຍິບ | 155 | 138 | 126 | 153 |
| ໄມ້ ແລະ ຜະລິດຕະພັນໄມ້ | 145 | 137 | 140 | 138 |
| ອື່ນໆ | 16 | 21 | 67 | 48 |
| **ການນຳເຂົ້າ** (ລ້ານ US$) | **958** | **1059** | **1397** | **1969** |
| **ສິນຄ້າສະບຽງ** | 24 | 28 | 40 | 55 |
| **ນ້ຳມັນ** | 95 | 175 | 201 | 250 |
| **ການນຳເຂົ້າສຳລັບໂຄງການໄຟຟ້າ ແລະ ບໍ່ແຮ່** | 232 | 358 | 431 | 897 |
| **ສິນຄ້າລົງທຶນອື່ນໆ** | 287 | 273 | 344 | 308 |
| **ສິນຄ້າຊົມໃຊ້ອື່ນໆ** | 157 | 68.3 | 223 | 251 |
| **ວັດຖຸດິບ ແລະ ເຄື່ອງເຄິ່ງສຳເລັດຮູບ** | 163 | 157 | 157 | 208 |

*ແຫລ່ງ:* ລັດຖະບານລາວ, ປະເທດຄູ່ຄ້າຂອງລາວ ແລະ ການຄາດຄະເນຂອງທະນາຄານໂລກ

ການສົ່ງອອກສິນຄ້າກະສິກຳຂອງລາວ ໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ. ສປປ ລາວ ແມ່ນປະເທດສົ່ງອອກສຸດທິດ້ານສະບຽງອາຫານ.

### ຕາຕະລາງ 2. ສ່ວນແບ່ງຂອງສະບຽງອາຫານໃນການຊົມໃຊ້ລວມ* ແລະ ຄວາມທຸກຍາກດ້ານອາຫານ, %, 2002/03

| ສ່ວນແບ່ງສະບຽງອາຫານໃນການຊົມໃຊ້ລວມ* | |
|---|---|
| ສປປ ລາວ | 74.6 |
| ເຂດຕົວເມືອງ | 69.6 |
| ຊົນນະບົດ | 76.1 |
| ບັນດາເມືອງທຸກຍາກກ່ວາໝູ່ | 79.8 |
| ບັນດາເມືອງທຸກຍາກອັນດັບສອງ | 77.3 |
| ເມືອງອື່ນໆ | 72.2 |
| **ຄວາມທຸກຍາກດ້ານອາຫານ**** | |
| ສປປ ລາວ | 19.8 |
| ເຂດຕົວເມືອງ | 14.3 |
| ຊົນນະບົດ | 21.5 |
| ຊົນນະບົດມີທົນທາງຕະຫຼອດປີ | 16.9 |
| ຊົນນະບົດບໍ່ມີທົນທາງຕະຫຼອດປີ | 27.6 |
| ບັນດາເມືອງທຸກຍາກກ່ວາໝູ່ | 26.9 |
| ບັນດາເມືອງທຸກຍາກອັນດັບສອງ | 25.9 |
| ເມືອງອື່ນໆ | 16.1 |

ອາຫານແມ່ນອົງປະກອບສຳຄັນຂອງການຊົມໃຊ້ລວມໃນ ສປປ ລາວ. ອັດຕາຄວາມທຸກຍາກດ້ານອາຫານແມ່ນເກືອບເຖິງ 20 ສ່ວນຮ້ອຍ ໃນປີ 2002/03.

ໝາຍເຫດ:

* ການຊົມໃຊ້ແມ່ນໝາຍເຖິງການຊົມໃຊ້ອາຫານທຸກປະເພດ (ລວມທັງຜະລິດດ້ວຍຕົນເອງ) ແລະ ສິນຄ້າຊົມໃຊ້ທີ່ບໍ່ແມ່ນອາຫານໂດຍບໍ່ລວມເຄື່ອງໃຊ້ທີ່ມີອາຍຸຍາວນານ (ເຄື່ອງເຟີນີເຈີ, ເຄື່ອງໃຊ້ເຮືອນຄົວ, ຈັກຫຍິບ ແລະ ຈັກຊັກເຄື່ອງ, ຍານພາຫະນະ, ໂທລະພາບ, ເຄື່ອງສາຍວີດີໂອ ແລະ ເທັບ, ຄອມພິວເຕີ, ເຮືອນຊານ ຫລື ການເຊົ່າ)

** ຄວາມທຸກຍາກດ້ານອາຫານແມ່ນກຳນົດຈາກອັດຕາສ່ວນຮ້ອຍຂອງປະຊາກອນທີ່ຊົມໃຊ້ອາຫານຕໍ່າກ່ວາມາດຖານຄວາມຈຳເປັນໂດຍສະເລ່ຍ.

*ແຫລ່ງ:* ການສຳຫລວດ LECS III

**ລາຄາສະບຽງອາຫານໃນລາວແມ່ນຂຶ້ນກັບລະດູການຫຼາຍກ່ວາແນວໂນ້ມຂອງຕະຫຼາດໂລກ.** ເຖິງວ່າລາຄາເຂົ້າໃນລາວຈະເພີ່ມຂຶ້ນໄວໃນແຕ່ລະປີ, ດັດສະນີອາຫານໂດຍລວມແມ່ນລຸດລົງໃນຊຸມເດືອນທີ່ຜ່ານມາຊຶ່ງຕໍ່າກ່ວາອັດຕາສະເລ່ຍຂອງປີ 2007 ໃນລະດັບ 8 ສ່ວນຮ້ອຍ. ສາຍເຫດຕົ້ນຕໍແມ່ນຍ້ອນວ່າເສດຖະກິດຂອງລາວສ່ວນໃຫຍ່ແມ່ນເປັນການຜະລິດກະສິກຳແບບລ້ຽງຊີບກຸ້ມຕົນເອງໃນຫຼາຍແຂວງ. ຍ້ອນແນວນັ້ນບັນຫາເງິນເຟີ້ ແລະ ລາຄາສະບຽງອາຫານທີ່ສູງຂຶ້ນໃນຕະຫຼາດສາກົນຈະມີຜົນກະທົບຕໍ່ຄົວເຮືອນຕ່າງໆໃນຕົວເມືອງຫລາຍກ່ວາປະຊາຊົນຜູ້ທຸກຍາກໃນຊົນນະບົດ. ຄຽງຄູ່ກັນນັ້ນໄພທຳມະຊາດ (ໄພນ້ຳຖ້ວມ ແລະ ແຫ້ງແລ້ງ) ແລະ ປັດໄຈອື່ນໆ ຈະມີຜົນກະທົບຕໍ່ການຜະລິດ ແລະ ລາຄາສິນຄ້າກະສິກຳ (ຮູບ 7).

ຮູບ 7. ອົງປະກອບດັດສະນີສະບຽງອາຫານຂອງລາວ[2] (% ການປ່ຽນແປງ)




*ແຫລ່ງ:* ລັດຖະບານລາວ ແລະ ການຄິດໄລ່ໂດຍທະນາຄານໂລກ

**ລາຄາສະບຽງອາຫານໃນ ສປປ ລາວ ໂດຍສະເພາະແມ່ນເຂົ້າ, ຊີ້ນ, ປາ, ໄກ່ ແລະ ຜັກ ແມ່ນປ່ຽນແປງຕາມລະດູການ ຫລາຍກ່ວາລາຄາໃນຕະຫລາດໂລກ.**

## *ອັດຕາແລກປ່ຽນ ແລະ ດຸນດ່ຽງການຊຳລະກັບຕ່າງປະເທດ*

**ເງິນກີບໄດ້ແຂງຄ່າຂຶ້ນຢ່າງຫລວງຫລາຍ** (ຮູບ 8). ໃນລະຫວ່າງເດືອນ 10/2007 ຫາ 03/2008 ອັດຕາແລກປ່ຽນລວມຂອງເງິນກີບໄດ້ແຂງຄ່າຂຶ້ນປະມານ 9 ສ່ວນຮ້ອຍ ເມື່ອທຽບກັບເງິນໂດລາສະຫາລັດ. ອັດຕາແລກປ່ຽນຕົວຈິງຄາດວ່າຈະມີແນວໂນ້ມຄ້າຍຄືກັນ. ໃນທ້າຍເດືອນ 03/2008 ອັດຕາແລກປ່ຽນຂອງເງິນກີບແມ່ນ 8.735 ກີບ ຕໍ່ 1 ໂດລາ ແລະ 278 ກີບ ຕໍ່ 1 ບາດ ເມື່ອທຽບກັບເດືອນ 10/2007 ແມ່ນ 9.593 ກີບ ຕໍ່ 1 ໂດລາ ແລະ 282 ກີບ ຕໍ່ 1 ບາດ. ທຶນສຳຮອງເງິນຕາຕ່າງປະເທດໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍເກືອບເທົ່າກັບ 5 ເດືອນຂອງມູນຄ່າການນຳເຂົ້າທີ່ບໍ່ລວມຂະແໜງຊັບພະຍາກອນໃນ 2007 ແລະ ຄາດວ່າຈະສູງຂຶ້ນຕໍ່ໄປໃນ 2008 ຍ້ອນການເພີ່ມຂຶ້ນຂອງລາຄາສິນຄ້າສົ່ງອອກກະສິກຳ ແລະ ບໍ່ແຮ່, ລາຍຮັບຈາກທ່ອງທ່ຽວ ແລະ ການລົງທຶນຕ່າງປະເທດ. ການເພີ່ມການນຳເຂົ້າສຳລັບໂຄງການຊັບພະຍາກອນຈະເຮັດໃຫ້ການຂາດດຸນການຊຳລະກັບຕ່າງປະເທດເພີ່ມຂຶ້ນຊຶ່ງຄາດວ່າຈະຢູ່ໃນລະດັບ 19 ສ່ວນຮ້ອຍຂອງ GDP. ແຕ່ວ່າການຂາດດຸນບັນຊີເດີນສະພັດບໍ່ລວມໂຄງການຊັບພະຍາກອນແມ່ນຢູ່ໃນລະ ດັບ 7 ສ່ວນຮ້ອຍຂອງ GDP ໃນປີ 2007 (ຮູບ 9).

ຮູບ 8. ອັດຕາແລກປ່ຽນ (ທັນວາ 2006=100)




*ແຫລ່ງ:* ລັດຖະບານລາວ ແລະ ການຄິດໄລ່ໂດຍທະນາຄານໂລກ

ຮູບ 9. ດຸນດ່ຽງບັນຊີເດີນສະພັດ - CAB (% ການປ່ຽນແປງ)




*ແຫລ່ງ:* ລັດຖະບານລາວ ແລະ ການຄິດໄລ່ໂດຍທະນາຄານໂລກ

ຕາຕະລາງ 3. ດຸນດ່ຽງການຊຳລະຕ່າງປະເທດ - BOP, 2004-07 (ລ້ານ US$)

| | 2004 | 2005 | 2006 | 2007 |
|---|---|---|---|---|
| **ບັນຊີເດີນສະພັດ** (Current Account) | -339 | -339 | -303 | -775 |
| ດຸນການຄ້າ - Trade balance | -459 | -410 | -368 | -915 |
| ການບໍລິການ - Services (ສຸດທິ) | 132 | 161 | 153 | 196 |
| ລາຍຮັບ - Income (ສຸດທິ) | -98 | -175 | -250 | -193 |
| ການໂອນເງິນ - Transfers (ສຸດທິ) | 85 | 85 | 162 | 138 |
| **ບັນຊີລົງທຶນ** - Capital Account | 358 | 356 | 403 | 982 |
| **ດຸນດ່ຽງລວມ** - Overall Balance | 19 | 17 | 100 | 207 |

*ແຫລ່ງ:* ລັດຖະບານລາວ (BOL) ແລະ ການຄາດຄະເນເບື້ອງຕົ້ນໂດຍທະນາຄານໂລກ

[2] ດັດສະນີສະບຽງອາຫານປະກອບດ້ວຍ 12 ໝວດຍ່ອຍ ແລະ ໃນນັ້ນຫ້າໝວດຍ່ອຍຕົ້ນຕໍປະກອບດ້ວຍ: ຊີ້ນ (11.9 ສ່ວນຮ້ອຍຂອງດັດສະນີລວມ), ເຂົ້າ ແລະ ແປ້ງ (9.4 ສ່ວນຮ້ອຍ), ຜັກ (4.9 ສ່ວນຮ້ອຍ), ປາ (4.8 ສ່ວນຮ້ອຍ), ໄກ່ (2.3 ສ່ວນຮ້ອຍ) ແລະ ສ່ວນທີ່ເຫລືອ (7.9 ສ່ວນຮ້ອຍ).

## *ການເກັບລາຍຮັບງົບປະມານຂອງລັດຖະບານ*

**ຖານະການເງິນຂອງລັດຖະບານໄດ້ສືບຕໍ່ປັບປຸງດີຂຶ້ນ.** ລັດຖະບານໄດ້ບັນລຸເປົ້າການເກັບລາຍຮັບເປັນປີທີສອງຕິດຕໍ່ກັນໂດຍເພີ່ມຂຶ້ນຈາກ 12,6 ສ່ວນຮ້ອຍຂອງ GDP ໃນປີ 2005/06 ເປັນປະມານ 14.1 ສ່ວນຮ້ອຍໃນປີ 2006/07. ປະມານ 20 ສ່ວນຮ້ອຍຂອງລາຍຮັບແມ່ນມາຈາກຂະແໜງຊັບພະຍາກອນທຳມະຊາດ. ການຂາດດຸນງົບປະມານລັດໂດຍລວມຈະຢູ່ໃນລະດັບ 2,5 ສ່ວນຮ້ອຍຂອງ GDP ໃນປີ 2006/07 (ຊຶ່ງລຸດລົງຈາກ 3,7 ສ່ວນຮ້ອຍໃນປີ 2005/06) ຖ້າວ່າການປະຕິບັດພາກລາຍຈ່າຍບໍ່ມີການປ່ຽນແປງຈາກແຜນທີ່ວາງໄວ້.

**ຮູບ 10. ການຈັດຕັ້ງປະຕິບັດແຜນລາຍຮັບຂອງລັດຖະບານ**




*ແຫລ່ງ.* ລັດຖະບານລາວ (MOF) ແລະ ການຄາດຄະເນຂອງທະນາຄານໂລກ

ການເກັບລາຍຮັບຂອງລັດຖະບານໄດ້ສືບຕໍ່ປັບປຸງດີຂຶ້ນໃນຂະນະທີ່ການຂາດດຸນງົບປະມານໄດ້ລຸດລົງ.

## *ໜີ້ສິນຕ່າງປະເທດຂອງລັດຖະບານ*

**ອັດຕາສ່ວນໜີ້ສິນຕ່າງປະເທດຂອງລັດຖະບານ ລາວ ໄດ້ລຸດລົງໃນປີ 2006 ແຕ່ວ່າຍັງຢູ່ໃນລະດັບທີ່ສູງ.** ຮອດທ້າຍປີ 2006 ຍອດມູນຄ່າໜີ້ສິນຕ່າງປະເທດຂອງລັດ ແລະ ຄໍ້າປະກັນໂດຍລັດຖະບານລາວ ແມ່ນທຽບເທົ່າ 70 ສ່ວນຮ້ອຍຂອງ GDP, 135 ສ່ວນຮ້ອຍຂອງການສົ່ງອອກຄິດເປັນມູນຄ່າປະຈຸບັນ NPV ແລະ 377 ສ່ວນຮ້ອຍຂອງງົບປະມານລາຍຮັບ. ຕົວເລກອັດຕາສ່ວນສາມຢ່າງທີ່ກ່າວມານັ້ນແມ່ນລ້ວນແລ້ວແຕ່ເກີນເສັ້ນກຳນົດຄວາມຍືນຍົງດ້ານໜີ້ສິນສຳລັບປະເທດຕ່າງໆທີ່ສາມາດສົມທຽບດ້ານນະໂຍບາຍ ແລະ ຄວາມເຂັ້ມແຂງຂອງອົງກອນ CPIA ຊຶ່ງເຮັດໃຫ້ ສປປ ລາວ ຖືກຈັດຢູ່ໃນບັນດາປະເທດ IDA ທີ່ມີຄວາມສ່ຽງດ້ານໜີ້ສິນສູງ. ແຕ່ວ່າຕົວເລກອັດຕາສ່ວນດ້ານການຊຳລະດອກເບ້ຍແມ່ນຕໍ່າກ່ວາເສັ້ນກຳນົດຍ້ອນວ່າໜີ້ສິນສ່ວນໃຫຍ່ຂອງລັດຖະບານລາວແມ່ນເປັນເງິນກູ້ຜ່ອນຜັນສູງ ແລະ ດອກເບ້ຍຕໍ່າ. ສະນັ້ນອາດຈະບໍ່ມີຂໍ້ຫຍຸ້ງຍາກໃນການຊຳລະດອກເບ້ຍໜີ້ສິນຂອງຕົນ ຖ້າວ່າບໍ່ມີສະພາບພາຍນອກມາກະທົບ.

**ຮູບ 11. ສປປ ລາວ: ໜີ້ສິນຕ່າງປະເທດຂອງລັດຖະບານ**




*ແຫລ່ງ.* IMF DSA ແລະ ການຄາດຄະເນຂອງທະນາຄານໂລກ

ຕົວເລກອັດຕາສ່ວນໜີ້ສິນຂອງລັດຖະບານລາວ ໄດ້ລຸດລົງໃນຊຸມປີຜ່ານມາເມື່ອຄິດເປັນອັດຕາສ່ວນຂອງ GDP ແລະ ການສົ່ງອອກ ແລະ ຄາດວ່າຈະບໍ່ມີຂໍ້ຫຍຸ້ງ ຍາກໃນການຊຳລະດອກເບ້ຍໜີ້ສິນ.

## 1.2 ການຈັດຕັ້ງປະຕິບັດແຜນຍຸດທະສາດການລຸດຜ່ອນຄວາມທຸກຍາກ

ລັດຖະບານລາວມີເປົ້າໝາຍຮັກສາການເຕີບໂຕດ້ານເສດຖະກິດທີ່ວ່ອງໄວເພື່ອແນໃສ່ປັບປຸງຊີວິດການເປັນຢູ່ຂອງປະຊາຊົນຜູ້ທຸກຍາກ ແລະ ປົດປ່ອຍປະເທດອອກຈາກການເປັນປະເທດດ້ອຍພັດທະນາໃນປີ 2020 ແລະ ບັນລຸເປົ້າສະຫະສະວັດ (MDGs).

ແຜນຍຸດທະສາດລຸດຜ່ອນຄວາມທຸກຍາກຂອງ ສປປ ລາວ ສະບັບທຳອິດ (PRSP) -- ແຜນຍຸດທະສາດການເຕີບໂຕ ແລະ ລຸດຜ່ອນຄວາມທຸກຍາກ (NGPES) ໄດ້ກະກຽມສຳເລັດໃນເດືອນກຸມພາ 2004 ແລ້ວນຳສະເໜີຕໍ່ສະພາຂອງ ກອງທຶນການເງິນສາກົນ (IMF) ແລະ ທະນາຄານໂລກ (WB/IDA) ໃນເດືອນພະຈິກ 2004. ຂະບວນການຮ່າງແຜນ NGPES ໄດ້ດຳເນີນຄຽງຄູ່ກັບການວາງແຜນແຫ່ງຊາດ ແລະ ໄດ້ຖືເປັນບ່ອນອີງແກ່ການຊ່ວຍເຫລືອຂອງຜູ້ໃຫ້ທຶນ ໂດຍໄດ້ມີການເຊື່ອມເອົາບັນດາຫລັກການຕົ້ນຕໍຂອງ PRSP ເຂົ້າໃນຂະບວນການວາງແຜນຂອງປະເທດ ເຊັ່ນ: ການມີສ່ວນຮ່ວມຢ່າງກ້ວາງຂວາງ, ເນັ້ນການລຸດຜ່ອນຄວາມທຸກຍາກ ແລະ ໝາກຜົນ. ນັບແຕ່ປີ 2005 ເປັນຕົ້ນມາໄດ້ມີການປັບແຜນ PRSP/NGPES ແລະ ເຊື່ອມເຂົ້າກັບແຜນການພັດທະນາເສດຖະກິດ ແລະ ສັງຄົມ ແຫ່ງຊາດ ຄັ້ງທີ 6 (NSEDP) ສຳລັບປີ 2006-2010.

ຍຸດທະສາດການພັດທະນາຂອງ ສປປ ລາວ ໄດ້ລະບຸຢູ່ໃນແຜນການ 5 ປີ ຄັ້ງທີ 6 ຊຶ່ງໄດ້ຮັບຮອງຈາກສະພາແຫ່ງຊາດໃນວັນທີ 17 ມິຖຸນາ 2006 ແລະ ນຳສະເໜີຕໍ່ບັນດາຜູ້ໃຫ້ທຶນໃນກອງປະຊຸມໂຕະມົນຂອງວັນທີ 28 ພະຈິກ 2006. ແຜນການຫ້າປີດັ່ງກ່າວໄດ້ລວມເອົາອົງປະກອບສຳຄັນຂອງແຜນ NGPES ໂດຍສະເພາະແມ່ນມີການກຳນົດເຂດເປົ້າໝາຍ ແລະ ເນັ້ນຄວາມທຸກຍາກ. ແຜນການຫ້າປີໄດ້ມີເປົ້າໝາຍລຸດຜ່ອນຄວາມທຸກຍາກໂດຍການປະສົມປະສານລະຫວ່າງການເຕີບໂຕດ້ານເສດຖະກິດແບບກ້ວາງຂວາງ ແລະ ມາດຕະການລຸດຜ່ອນຄວາມທຸກຍາກຕ່າງໆທີ່ມີຈຸດສຸມ. ຄຽງຄູ່ກັບການຮັກສາສະຖຽນລະພາບດ້ານເສດຖະກິດມະຫາພາກ ສີ່ເສົາຄ້ຳຫລັກຂອງແຜນປະກອບດ້ວຍ: i) ການເຕີບໂຕດ້ານເສດຖະກິດໂດຍອີງໃສ່ການພັດທະນາມະນຸດ; ii) ຄວາມສາມາດແກ່ງແຍ້ງ-ແຂ່ງຂັນ, ການເຊື່ອມຍົງດ້ານການຄ້າ ແລະ ພູມີພາກ; iii) ການພັດທະນາດ້ານສັງຄົມ ແລະ ມາດຕະການເຈາະຈົງຕ່າງໆເພື່ອການລຸດຜ່ອນຄວາມທຸກຍາກ; ແລະ iv) ການຄຸ້ມຄອງ-ປົກຄອງທີ່ດີ.

**ໃນກອງປະຊຸມໂຕະມົນປະຈຳປີທີ່ຈັດຂຶ້ນໃນເດືອນພະຈິກ 2007 ລັດຖະບານລາວໄດ້ນຳສະເໜີຜົນການຈັດຕັ້ງປະຕິບັດແຜນພັດທະນາປະຈຳປີຕໍ່ບັນດາຜູ້ທຶນ ແລະ ອົງການມະຫາຊົນສາກົນ** (ບົດລາຍງານໄດ້ສຳເນົາທີ່: www.rtm.org.la). ບົດລາຍງານດັ່ງກ່າວແມ່ນໄດ້ຮັບການປັບປຸງຈາກບົດສະຫລຸບປະຈຳປີໃນເມື່ອກ່ອນ ແລະ ໄດ້ລາຍງານກ່ຽວກັບຂົງເຂດວຽກງານສຳຄັນດ້ານການພັດທະນາ ແລະ ສອດຄ່ອງກັບຂໍ້ມູນຕ່າງໆດ້ານປະລິມານ ແລະ ຄຸນນະພາບ ແລະ ເຊື່ອມກັບແຜນເປົ້າທີ່ຕັ້ງໄວ້ ແລະ ໄດ້ບັນລຸໃນຊຸມປີຜ່ານມາ. ພ້ອມນັ້ນຍັງໄດ້ສະເໜີທິດທາງສຳລັບການຈັດຕັ້ງປະຕິບັດແຜນປີຕໍ່ໄປ ລວມທັງການລາຍງານຜົນຄືບໜ້າກ່ຽວກັບແຕ່ລະໜ້າວຽກຂອງເປົ້າສະຫະສະວັດ (MDG). ນອກນັ້ນແມ່ນໄດ້ສະເໜີໃຫ້ຜູ້ໃຫ້ທຶນໃຫ້ການຊ່ວຍເຫລືອຕໍ່ວຽກງານດັ່ງກ່າວ.

**ບາງຜົນສຳເລັດຂອງການຈັດຕັ້ງປະຕິບັດແຜນປີ 2006-07 ໂດຍອີງໃສ່ບົດລາຍງານແມ່ນລວມມີ:**

- ການຮັບຮອງກົດໝາຍງົບປະມານໂດຍສະພາແຫ່ງຊາດ;
- ການເກັບລາຍຮັບງົບປະມານເກີນແຜນທີ່ຕັ້ງໄວ້;
- ການເພີ່ມຂຶ້ນຂອງອັດຕາການເຂົ້າຮຽນຂັ້ນປະຖົມຈາກ 84,2 ສ່ວນຮ້ອຍ ໃນປີ 2005 ເປັນ 87 ສ່ວນຮ້ອຍ (ແຜນເປົ້າແມ່ນ 90,6 ສ່ວນຮ້ອຍຮອດປີ 2010);
- ການລຸດຜ່ອນອັດຕາການຕາຍຈາກພະຍາດມະເລເລຍ ຈາກ 9 ຕໍ່ 100,000 ຄົນ ໃນປີ 1990 ເປັນ 0,4 ໃນປີ 2006 (ຄາດວ່າຈະສາມາດບັນລຸເປົ້າທີ່ຕັ້ງໄວ້ສຳລັບປີ 2015 ປະມານ 0,2).

**ລັດຖະບານລາວຍັງໄດ້ກ່າວເຖິງບັນຫາຂໍ້ຫຍຸ້ງຍາກຕ່າງໆ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ**, ໃນນັ້ນລວມມີ:

- ບາງຈຸດອ່ອນດ້ານໂຄງສ້າງຂອງເສດຖະກິດ;
- ຂໍ້ຫຍຸ້ງຍາກໃນການຂະຫຍາຍຖານການເຕີບໂຕ ແລະ ກິດຈະກຳຕ່າງໆດ້ານເສດຖະກິດ;
- ຄວາມບໍ່ສົມດຸນດ້ານການເຕີບໂຕເສດຖະກິດ ແລະ ການພັດທະນາສັງຄົມລະຫວ່າງຂົງເຂດ ແລະ ກຸ່ມຄົນຕ່າງໆຂອງປະຊາກອນ;
- ການຄຸ້ມຄອງຊັບພະຍາກອນທຳມະຊາດທີ່ຍັງບໍ່ທັນຮັດກຸມ ລວມທັງການສ້າງລາຍຮັບຕ່າງໆໃນຂະແໜງດັ່ງກ່າວ.

**ແຜນພັດທະນາເສດຖະກິດ-ສັງຄົມ ຍັງຂາດລະບົບກົນໄກການຕິດຕາມ ແລະ ປະເມີນຜົນ**. ການລາຍງານຜົນການປະຕິບັດແຜນປະຈຳປີຫລ້າສຸດອາດຈະໄດ້ຮັບປະໂຫຍດຈາກການຕິດຕາມໝາກຜົນສຳລັບໂຄງການບຸລິມະສິດ ໂດຍນຳໃຊ້ຂໍ້ມູນທີ່ແນ່ນອນຊຶ່ງກ່ຽວພັນກັບແຜນເປົ້າ. ໃນເດືອນ ຕຸລາ ແລະ ທັນວາ 2007 ກະຊວງແຜນການ ແລະ ການລົງທຶນ ໄດ້ຈັດການຝຶກອົບຮົມສອງຄັ້ງກ່ຽວກັບການຕິດຕາມການປະຕິບັດແຜນຫ້າປີພາຍໃຕ້ໂຄງການຍົກສູງຂີດຄວາມສາມາດ. ການສືບຕໍ່ຍົກສູງຂີດຄວາມສາມາດສຳລັບການຕິດຕາມການຈັດຕັ້ງປະຕິບັດແຜນດັ່ງກ່າວ ຈະຊ່ວຍລັດຖະບານໃນການກະກຽມສ້າງແຜນຈັດຕັ້ງປະຕິບັດລະບົບກົນໄກການຕິດຕາມ ແລະ ປະເມີນຜົນສຳລັບແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນຄັ້ງຕໍ່ໄປ.



# 2 ການປະຕິຮູບດ້ານນະໂຍບາຍ ແລະ ໂຄງສ້າງ

ລັດຖະບານລາວ ມີຜົນຄືບໜ້າສົມຄວນໃນວຽກງານການປະຕິຮູບໃນປີ 2007 ແລະ ຕົ້ນປີ 2008. ແຕ່ວ່າບາດກ້າວຂອງການປະຕິຮູບແມ່ນຍັງບໍ່ສະໝ່ຳສະເໝີສຳລັບຂະແໜງການຕ່າງໆ. ຜົນສຳເລັດສ່ວນໃຫຍ່ແມ່ນກ່ຽວກັບການສ້າງລະບຽບກົດໝາຍແຕ່ການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວແມ່ນຍັງຊັກຊ້າ. ລາຍລະອຽດກ່ຽວກັບການປະຕິຮູບໃນຂົງເຂດສຳຄັນ ເຊັ່ນ: ການຄຸ້ມຄອງການເງິນພາກລັດ, ການປັບໂຄງສ້າງລັດວິສາຫະກິດ, ພາກທະນາຄານ, ການຄ້າ ແລະ ການພັດທະນາພາກເອກະຊົນ ມີລຸ່ມນີ້.

## 2.1 ນະໂຍບາຍ ແລະ ການຄຸ້ມຄອງລາຍຈ່າຍພາກລັດ

ລັດຖະບານ ໄດ້ຮັບຮອງເອົາແຜນໂຄງການສ້າງຄວາມເຂັ້ມແຂງໄລຍະກາງດ້ານການຄຸ້ມຄອງລາຍຈ່າຍພາກລັດໃນຕົ້ນປີ 2005 ເພື່ອປັບປຸງລະບົບການຄຸ້ມຄອງການເງິນຂອງລັດ ແລະ ຍົກລະດັບຂີດຄວາມສາມາດຂອງກະຊວງການເງິນ ແລະ ພະແນກການເງິນແຂວງຕ່າງໆ. ຄຽງຄູ່ກັບນັ້ນ ລັດຖະບານໄດ້ປະກາດໃຊ້ກົດໝາຍງົບປະມານສະບັບໃໝ່ໃນເດືອນກຸມພາ 2007 ເພື່ອແກ້ໄຂຂໍ້ບົກຜ່ອງດ້ານການພົວພັນການເງິນລະຫວ່າງສູນກາງກັບທ້ອງຖິ່ນ ຊຶ່ງເກີດມາຈາກການກະຈາຍການຄຸ້ມຄອງການເງິນພາກລັດ ແລະ ລະບົບກົນໄກການຕິດຕາມ ແລະ ກວດກາ ທີ່ບໍ່ສອດຄ່ອງ. ການປະຕິຮູບຕົ້ນຕໍແມ່ນແນໃສ່ການລວມສູນຄັງເງິນ, ພາສີ ແລະ ອາກອນ, ການສ້າງກົນໄກການແບ່ງປັນລາຍຮັບໃໝ່, ເພີ່ມທະວີການກວດກາຊັບພະຍາກອນການເງິນຂອງລັດ ແລະ ເຊື່ອມນະໂຍບາຍເຂົ້າກັບງົບປະມານ. ກົດໝາຍວ່າດ້ວຍການກວດສອບບັນຊີສະບັບໃໝ່ໄດ້ຖືກປະກາດໃຊ້ໂດຍສະພາແຫ່ງຊາດໃນເດືອນ 07/2007 ເພື່ອອານຸຍາດໃຫ້ອົງການກວດສອບບັນຊີແຫ່ງລັດລາຍງານໂດຍກົງຫາສະພາແຫ່ງຊາດແທນທີ່ຈະລາຍງານຕໍ່ນາຍົກລັດຖະມົນຕີ. ເພື່ອຮັບປະກັນຄວາມສຳເລັດຂອງການປະຕິຮູບດັ່ງກ່າວ ຈຳເປັນຕ້ອງມີ: ການຍົກລະດັບຂີດຄວາມສາມາດໃຫ້ສູງ, ຄວາມເອົາໃຈໃສ່ ແລະ ສະໜັບສະໜູນຈາກການນຳຂັ້ນສູງ, ການຊ່ວຍເຫລືອດ້ານເຕັກນິກ, ແຜນການຈັດຕັ້ງປະຕິບັດສຳລັບ 3-5 ປີ ແລະ ກົນໄກການແບ່ງປັນລາຍຮັບ. ອີກວຽກງານໜຶ່ງທີ່ສຳຄັນແມ່ນການຈັດຕັ້ງປະຕິບັດອາກອນມູນຄ່າເພີ່ມ (VAT) ຊຶ່ງມີແຜນຈະປະຕິບັດໃນເດືອນຕຸລາ 2008. ນອກນັ້ນຍັງຕ້ອງມີການປະສານງານຢ່າງໃກ້ສິດລະຫວ່າງສາມກົມຫລັກ: ອາກອນ, ພາສີ ແລະ ຄັງເງິນ.

### ນະໂຍບາຍການເງິນ

**ການເກັບລາຍຮັບງົບປະມານສືບຕໍ່ໄດ້ຮັບຜົນດີ** ໂດຍລາຍຮັບຈາກຊັບພະຍາກອນ ແມ່ນເກີນເປົ້າທີ່ຄາດໄວ້ຍ້ອນລາຄາຜະລິດຕະພັນໃນຕະຫຼາດໂລກທີ່ສູງຂຶ້ນ ແລະ ລາຍຮັບອື່ນໆລວມທັງອາກອນໄດ້ເພີ່ມຂຶ້ນຍ້ອນການປຸງນອາກອນໃນປີ 2005. ການເກັບລາຍຮັບ (ບໍ່ລວມເງິນຊ່ວຍເຫລືອຫລ້າ) ໄດ້ເພີ່ມຂຶ້ນຈາກ 11,4 ສ່ວນຮ້ອຍ ຂອງ GDP ໃນປີ 2004/05 ເປັນ 12,6 ສ່ວນຮ້ອຍ ໃນປີ 2005/06 ຊຶ່ງເກີນແຜນທີ່ຕັ້ງໄວ້. ນອກນັ້ນການເກັບລາຍຮັບຄາດວ່າຈະເພີ່ມຂຶ້ນ 14,1 ສ່ວນຮ້ອນຍ ຂອງ GDP ໃນປີ 2006/07. ການເພີ່ມຂຶ້ນຂອງລາຍຮັບໄດ້ຊ່ວຍໃຫ້ການຂາດດຸນງົບປະມານຫລຸດລົງຈາກ 4,4 ສ່ວນຮ້ອຍ ໃນປີ 2004/05 ເປັນ 3,7 ສ່ວນຮ້ອຍ ຂອງ GDP ໃນປີ 2005/06 ແລະ ຄາດວ່າ 2,5 ສ່ວນຮ້ອຍ ໃນປີ 2006/07 ( ຮູບ 10)

**ການຈັດຕັ້ງປະຕິຮັບລາຍຮັບທີ່ດີຂອງລັດໃນໄລຍະຜ່ານມາໄດ້ສະແດງໃຫ້ເຫັນເຖິງຄວາມຕັ້ງໃຈຂອງລັດຖະບານໃນການຮັກສາຄວາມໝັ້ນຄົງດ້ານການເງິນ.** ການຂາດດຸນງົບປະມານທີ່ລວມເງິນຊ່ວຍເຫລືອຫລ້າແມ່ນໄດ້ຫລຸດລົງໃນສອງປີທີ່ຜ່ານມາ ເນື່ອງຈາກການເກັບລາຍຮັບໄດ້ເກີນເປົ້າ ແລະ ພາກລາຍຈ່າຍໄດ້ຮັບການປະຕິບັດຕາມແຜນທີ່ວາງໄວ້. ໃນສົກປີ 2007/08 ການຂາດດຸນງົບປະມານໂດຍລວມ ແລະ ບໍ່ລວມຊັບພະຍາກອນແມ່ນຄາດວ່າຈະສູງຂຶ້ນຍ້ອນການເພີ່ມຂຶ້ນຂອງລາຍຈ່າຍປະຈຳ (ເງິນເດືອນ, ເງິນອຸດໜູນ ແລະ ເງິນບໍລິຫານ).

**ລັດຖະບານໄດ້ມີມາດຕະການຫລຸດຜ່ອນການຮົ່ວໄຫລຂອງລາຍຮັບອາກອນໃນສົກປີ 2006/07** ໂດຍໄດ້ຮຽກຮ້ອງໃຫ້ຮ້ານຂາຍເຄື່ອງຕ່າງໆເປີດເຜີຍຂໍ້ມູນຜູ້ຊື້ ແລະ ໄດ້ນຳໃຊ້ລະບົບການໄລ່ລຽງຖອນອາກອນຄືນສຳລັບບໍລິສັດໃຫຍ່. ມາດຕະການດັ່ງກ່າວໄດ້ເພີ່ມຄວາມໂປ່ງໃສດ້ານລະບົບການເສຍອາກອນ ແລະ ຊ່ວຍເພີ່ມການເກັບລາຍຮັບອາກອນ ຊຶ່ງເກີນເປົ້າ 6 ສ່ວນຮ້ອຍທີ່ຕັ້ງໄວ້ສຳລັບ 10 ເດືອນ ຕົ້ນປີງົບປະມານ.

**ພາກລາຍຈ່າຍແມ່ນເປັນໄປຕາມແຜນປະຈຳປີທີ່ວາງໄວ້ ໃນຂະນະທີ່ການສະໜອງທຶນຕ່າງປະເທດ ແລະ ເງິນຊ່ວຍເຫລືອຫລ້າ ແມ່ນຕ່ຳກ່ວາເປົ້າຫລາຍສົມຄວນ.** ຍອດລາຍຈ່າຍປະຈຳລວມທັງເງິນເດືອນໄດ້ເພີ່ມຂຶ້ນຈາກການປັບຕົວຄູນເງິນເດືອນຈາກ 1500 ໃນປີ 2004/05 ເປັນ 1800 ໃນປີ 2005/06, 2000 ໃນປີ 2006/07 ແລະ 2500 ໃນປີ 2007/08. ຄາດວ່າເງິນເດືອນຈະສູງຂຶ້ນຕໍ່ໄປ ເມື່ອລັດຖະບານມີແຜນຈະເພີ່ມເງິນພິເສດແກ່ພະນັກງານທີ່ເຮັດວຽກໃນເຂດຊົນນະບົດ ແລະ ຫ່າງໄກສອກຫລີກເລີ່ມແຕ່ປີ 2008/09 ເປັນຕົ້ນໄປ. ການເພີ່ມເງິນເດືອນຈະຕ້ອງສອດຄ່ອງກັບກອບລາຍຮັບງົບປະມານພື້ນຖານທີ່ບໍ່ລວມລາຍຮັບຊັບພະຍາກອນເພື່ອຮັບປະກັນຄວາມຍືນຍົງດ້ານນະໂຍບາຍລາຍຈ່າຍ. ນອກນັ້ນການເພີ່ມເງິນເດືອນກໍເປັນບັນຫາທີ່ໜ້າເປັນຫ່ວງໃນສະພາບທີ່ອັດຕາເງິນເຟີ້ກຳລັງຖີບຕົວສູງຂຶ້ນ.

ຕາຕະລາງ 4. ລາຍຮັບງົບປະມານຂອງລັດ

| | 04/05 | 05/06 | 06/07 |
|---|---|---|---|
| | | *(ຕື້ກີບ)* | |
| ລາຍຮັບແລະ ເງິນຊ່ວຍເຫຼືອທລ້າ | 3,886 | 4,962 | 6,004 |
| ລາຍຮັບ | 3,387 | 4,266 | 5,324 |
| ລາຍຮັບອາກອນ | 2,803 | 3,641 | 4720 |
| ລາຍຮັບຊັບພະຍາກອນ | 237 | 390 | 868 |
| ລາຍຮັບບໍ່ແມ່ນອາກອນ | 584 | 625 | 604 |
| ເງິນຊ່ວຍເຫຼືອທລ້າ | 499 | 696 | 680 |
| | | *(ອັດຕາສ່ວນຮ້ອຍຂອງ GDP)* | |
| ລາຍຮັບແລະ ເງິນຊ່ວຍເຫຼືອທລ້າ | 13.1 | 14.7 | 15.9 |
| ລາຍຮັບ | 11.4 | 12.6 | 14.1 |
| ລາຍຮັບອາກອນ | 9.4 | 10.8 | 12.5 |
| ລາຍຮັບຊັບພະຍາກອນ | 0.8 | 1.2 | 2.3 |
| ລາຍຮັບບໍ່ແມ່ນອາກອນ | 2.0 | 1.9 | 1.6 |
| ເງິນຊ່ວຍເຫຼືອທລ້າ | 1.7 | 2.1 | 1.8 |

*ແຫລ່ງ.* ລັດຖະບານລາວ (MoF) ແລະ ການຄາດຄະເນຂອງທະນາຄານໂລກ

ຕາຕະລາງ 5. ລາຍຈ່າຍງົບປະມານຂອງລັດ

| | 04/05 | 05/06 | 06/07 |
|---|---|---|---|
| | | *(ຕື້ກີບ)* | |
| ລວມຍອດລາຍຈ່າຍ | 5,204 | 6,205 | 6,985 |
| ລາຍຈ່າຍປະຈຳ | 2,517 | 3,125 | 3,511 |
| ເງິນເດືອນ | 1,058 | 1,263 | 1,586 |
| ລາຍຈ່າຍລົງທຶນ | 2,261 | 2,529 | 2,870 |
| ໃຊ້ທຶນຈາກພາຍໃນ | 468 | 403 | 517 |
| ອື່ນໆ | 426 | 551 | 605 |
| | | *(ອັດຕາສ່ວນຮ້ອຍຂອງ GDP)* | |
| ລວມຍອດລາຍຈ່າຍ | 17.5 | 18.4 | 18.5 |
| ລາຍຈ່າຍປະຈຳ | 8.5 | 9.3 | 9.3 |
| ເງິນເດືອນ | 3.6 | 3.7 | 4.2 |
| ລາຍຈ່າຍລົງທຶນ | 7.6 | 7.5 | 7.6 |
| ໃຊ້ທຶນຈາກພາຍໃນ | 1.6 | 1.2 | 1.4 |
| ອື່ນໆ | 1.4 | 1.6 | 1.6 |

*ແຫລ່ງ.* ລັດຖະບານລາວ (MoF) ແລະ ການຄາດຄະເນຂອງທະນາຄານໂລກ

## ລາຍຈ່າຍຂອງລັດໃນຂະແໜງບູລິມະສິດ

**ລາຍຈ່າຍລວມໃນຂະແໜງສັງຄົມໄດ້ເພີ່ມຂຶ້ນແຕ່ລາຍຈ່າຍປະຈຳທີ່ຕ່ຳເຮັດການບໍລິການໃນຂະແໜງດັ່ງກ່າວມີຂໍ້ຈຳກັດ.** ລາຍຈ່າຍຂອງລັດໃນສີ່ຂະແໜງບູລິມະສິດໄດ້ເພີ່ມຂຶ້ນນັບແຕ່ປີ 2003/04 ເປັນຕົ້ນມາ ໂດຍຄິດເປັນອັດຕາສ່ວນຮ້ອຍຂອງລາຍຈ່າຍລວມ. ແຕ່ວ່າລາຍຈ່າຍປະຈຳ (ບໍລິຫານ) ແມ່ນຍັງຕ່ຳໂດຍສະເພາະແມ່ນຂະແໜງສັງຄົມ. ໂດຍລວມ ລາຍຈ່າຍປະຈຳໃນສີ່ຂະແໜງບູລິມະສິດແມ່ນໄດ້ຫລຸດລົງເລັກໜ້ອຍຈາກ 9,3 ສ່ວນຮ້ອຍ ຂອງງົບປະມານລວມໃນປີ 2003/04 ເປັນ 9,1 ສ່ວນຮ້ອຍໃນປີ 2005/06, ໃນຂະນະທີ່ລາຍຈ່າຍລົງທຶນໄດ້ເພີ່ມຂຶ້ນຈາກ 35,2 ສ່ວນຮ້ອຍ ໃນປີ 2003/04 ເປັນ 43,8 ສ່ວນຮ້ອຍ ໃນປີ 2005/06 – ເບິ່ງ ຕາຕະລາງ 6. ໂດຍຄິດເປັນອັດຕາສ່ວນຮ້ອຍຂອງລາຍຈ່າຍລວມ ຂະແໜງໂຄງລ່າງກວມສ່ວນໃຫຍ່ຂອງລາຍຈ່າຍ ສ່ວນລາຍຈ່າຍຂະແໜງສາທາແມ່ນຕ່ຳກ່ວາໝູ່.

ຕາຕະລາງ 6. ລາຍຈ່າຍຂອງລັດໃນສີ່ຂະແໜງບູລິມະສິດ

| | 2003/04 | 2004/05 | 2005/06 |
|---|---|---|---|
| ລາຍຈ່າຍລວມ | | *(ຕື້ກີບ)* | |
| ລວມສີ່ຂະແໜງການ | 1,767 | 2,452 | 3,279 |
| ກະສິກຳ | 286 | 323 | 477 |
| ໂຄງລ່າງ | 843 | 1,156 | 1,551 |
| ສຶກສາ | 457 | 649 | 1,026 |
| ສາທາ | 180 | 324 | 226 |
| | | *(ອັດຕາສ່ວນຮ້ອຍຂອງງົບປະມານລວມ)* | |
| ລວມສີ່ຂະແໜງການ | 44.5 | 47.1 | 52.8 |
| ກະສິກຳ | 7.2 | 6.2 | 7.7 |
| ໂຄງລ່າງ | 21.2 | 22.2 | 25.0 |
| ສຶກສາ | 11.5 | 12.5 | 16.5 |
| ສາທາ | 4.5 | 6.2 | 3.6 |
| | | *(ອັດຕາສ່ວນຮ້ອຍຂອງ GDP)* | |
| ລວມສີ່ຂະແໜງການ | 6.9 | 8.3 | 9.7 |
| ກະສິກຳ | 1.1 | 1.1 | 1.4 |
| ໂຄງລ່າງ | 3.3 | 3.9 | 4.6 |
| ສຶກສາ | 1.8 | 2.2 | 3.0 |
| ສາທາ | 0.7 | 1.1 | 0.7 |
| | | *(ອັດຕາສ່ວນຮ້ອຍຂອງງົບປະມານລວມ)* | |
| ລວມສີ່ຂະແໜງການ | 9.3 | 9.2 | 9.1 |
| ກະສິກຳ | 1.0 | 1.1 | 1.0 |
| ໂຄງລ່າງ | 0.5 | 0.5 | 0.5 |
| ສຶກສາ | 6.2 | 6.0 | 6.1 |
| ສາທາ | 1.7 | 1.6 | 1.5 |

*ແຫລ່ງ.* ລັດຖະບານລາວ (MoF) ແລະ ການຄາດຄະເນຂອງທະນາຄານໂລກ

**ລາຍຈ່າຍລວມໃນຂະແໜງສັງຄົມໄດ້ເພີ່ມຂຶ້ນໃນຊຸມປີຜ່ານມາແຕ່ລາຍຈ່າຍປະຈຳແມ່ນຍັງຕ່ຳ ແລະ ຫລຸດລົງເມື່ອຄິດເປັນອັດຕາສ່ວນຮ້ອຍຂອງງົບປະມານລວມ.**



## ຄວາມຄືບໜ້າດ້ານການປະຕິຮູບ

**ລັດຖະບານໄດ້ສືບຕໍ່ປະຕິບັດກົດໝາຍງົບປະມານສະບັບໃໝ່.** ການທົດລອງການທັນສູ່ສາຍຕັ້ງຂອງວຽກງານຄັງເງິນ, ພາສີ ແລະ ອາກອນ ກຳລັງໄດ້ຮັບການຈັດຕັ້ງປະຕິບັດ ລວມທັງການສ້າງກົນໄກການເກັບ ແລະ ແບ່ງປັນລາຍຮັບ. ການປັບປຸງກ່ຽວກັບການແບ່ງເກັບລາຍຮັບອາດມີຂຶ້ນໃນສົກປີ 2008/09. ນອກນັ້ນໄດ້ມີການວ່າຈ້າງທີ່ປຶກສາຕ່າງປະເທດເພື່ອມາຊ່ວຍອອກແບບກົນໄກການແບ່ງປັນລາຍຮັບ ແລະ ຮ່າງກຳນົດໝາຍງົບປະມານ. ນອກນັ້ນຍັງຜົນຄືບໜ້າໃນການປະຕິບັດໂຄງການ PEMSP ລວມທັງການສ້າງແຜນ 2007/08 ແລະ ການກໍ່ຕັ້ງກອງທຶນຫຼາຍຝ່າຍ (MDTF) ເພື່ອໃຫ້ການສະໜັບສະໜູນດ້ານການເງິນ.

**ວຽກງານກ່ຽວກັບສາລະບານບັນຊີ (COA) ແລະ ການກວດສອບບັນຊີແມ່ນມີຄວາມຄືບໜ້າດີ.** ພາຍຫລັງການສຳເລັດສົມບູນບັນດາກະຊວງ ແລະ ແຂວງຕ່າງໆ ຈະໄດ້ມີການນຳໃຊ້ລະບົບສາລະບານບັນຊີໃໝ່ໃນການສ້າງແຜນງົບປະມານ (ອາດຈະຖືກນຳໃຊ້ໃນສົກປີ 2008/09). ການປະເມີນຄວາມຕ້ອງການດ້ານການຍົກສູງຂີດຄວາມສາມາດໃນວຽກງານກວດສອບບັນຊີຂອງອົງການກວດສອບບັນຊີແຫ່ງລັດລາວໄດ້ເລີ່ມດຳເນີນໂດຍອົງການກວດສອບບັນຊີ (SAO) ນິວຊີແລນໃນຕົ້ນເດືອນກຸມພາ 2008 ແລະ ບົດສະຫຼຸບການປະເມີນຈະໄດ້ລາຍງານຕໍ່ອົງການ SAO ຂອງ ສປປ ລາວ ໃນເດືອນມີນາ 2008.

**ລັດຖະບານໄດ້ມີບາດກ້າວໃນການປັບປຸງຄວາມວ່ອງໄວໃນການເບີກຈ່າຍເງິນເດືອນແກ່ພະນັກງານ ແລະ ຍົກສູງຜົນການດຳເນີນງານຂອງພາກລັດ.** ເພື່ອໃຫ້ມີຄວາມວ່ອງໄວໃນການເບີກຈ່າຍເງິນເດືອນ ລັດຖະບານໄດ້ທົດລອງນຳໃຊ້ລະບົບການເບີກຈ່າຍທາງເອເລກໂຕຼນິກແທນການຈ່າຍດ້ວຍເງິນສົດ. ຖ້າຜົນການທົດລອງອອກມາໃນທາງບວກ ລະບົບດັ່ງກ່າວຈະຖືກເອົາໄປນຳໃຊ້ໃນທຸກໆແຂວງ. ຮ່າງດຳລັດນາຍົກວ່າດ້ວຍການວ່າຈ້າງ ແລະ ຮັກສາພະນັກງານເຮັດວຽກໃນເຂດຊົນນະບົດ ແລະ ການຄຸ້ມຄອງພະນັກງານສັນຍາຈ້າງແມ່ນກຳລັງໄດ້ຮັບການກະກຽມ. ສ່ວນການທົບທວນກ່ຽວກັບພາລະບົດບາດ ແລະ ໜ້າວຽກຂອງລັດຖະກອນແມ່ນໃກ້ຈະສຳເລັດ. ນອກນັ້ນໄດ້ມີການຄັດເລືອກເອົາສີ່ແຂວງ ແລະ ສອງກະຊວງ ເພື່ອທົດລອງປະຕິບັດຂໍ້ແນະນຳໃໝ່ໃນການປັບປຸງລະບົບການຄຸ້ມຄອງຜົນການເຄື່ອນໄຫວວຽກງານ.

## 2.2 ການປະຕິຮູບພາກລັດວິສາຫະກິດ

ການປະຕິຮູບພາກລັດວິສາຫະກິດໃນຕົ້ນຊຸມປີ 1990 ໄດ້ເຮັດໃຫ້ຈຳນວນລັດວະສາຫະກິດຫລຸດລົງຢ່າງຫລວງຫລາຍໂດຍການປິດກິດຈະການ, ໃຫ້ເຊົ່າ, ລວມຕົວ ແລະ ຂາຍອອກ. ປະຈຸບັນ ພາກລັດວິສາຫະກິດບໍ່ພຽງແຕ່ມີຈຳນວນໜ້ອຍ ແຕ່ຍັງມີບົດບາດຕໍ່າຕໍ່ເສດຖະກິດໂດຍອີງໃສ່ອັດຕາສ່ວນຕໍ່ GDP ແລະ ການວ່າຈ້າງງານລວມ. ແຕ່ວ່າໃນຊ່ວງໄລຍະທີສອງຂອງຊຸມປີ 1990 ລັດວິສາຫະກິດຂະໜາດໃຫຍ່ຈຳນວນໜຶ່ງໄດ້ສ້າງໜີ້ເສຍມະຫາສານຕໍ່ພາກທະນາຄານທຸລະກິດລັດ. ໜີ້ເສຍດັ່ງກ່າວໄດ້ສ້າງຄວາມສ່ຽງ-ການຂາດຄວາມໝັ້ນຄົງຕໍ່ລະບົບທະນາຄານ ແລະ ສຸດທ້າຍຕ້ອງໄດ້ຮັບການເພີ່ມທຶນຈາກລາຍຮັບຂອງລັດ.

ການປະຕິຮູບໃນຮອບປະຈຸບັນແມ່ນໄດ້ເລີ່ມມາແຕ່ປີ 2001 ໂດຍມີສາມຈຸດປະສົງຫລັກ: (ກ) ປັບປຸງຄວາມໂປ່ງໃສ ແລະ ການຄຸ້ມຄອງບໍລິຫານ ພາກລັດວິສາຫະກິດ; (ຂ) ປັບໂຄງສ້າງລັດວິສາຫະກິດຂະໜາດໃຫຍ່ທີ່ຫລຸບທຶນ ແລະ ມີໜີ້ຫລາຍຊຶ່ງເປັນໄພຕໍ່ງົບປະມານຂອງລັດ ແລະ ພາກທະນາຄານ; ແລະ (ຄ) ສ້າງສິ່ງແວດລ້ອມດ້ານການຄຸ້ມຄອງ ແລະ ການວາງລາຄາທີ່ເອື້ອອຳນວຍຕໍ່ບັນດາລັດວິສາຫະກິດໃນຂະແໜງໂຄງລ່າງໂດຍການປະຕິຮູບນະໂຍບາຍດ້ານລາຄາ. ຜົນຄືບໜ້າໃນຊຸມປີຜ່ານມາແມ່ນບໍ່ສະໝໍ່າສະເໝີ ແຕ່ລັດຖະບານໄດ້ປັບປຸງການຕິດຕາມພາກລັດວິສາຫະກິດ ແລະ ຫລຸດຜ່ອນໜີ້ເສຍທີ່ເກີດຈາກຂະແໜງດັ່ງກ່າວ (ໜີ້ເສຍສ່ວນໃຫຍ່ໃນສາມປີທີ່ຜ່ານມາແມ່ນເກີດຈາກພາກເອກະຊົນ). ຄວາມຄືບໜ້າໃນປີ 2005 ແມ່ນຊັກຊ້າ ແລະ ບໍ່ສະໝໍ່າສະເໝີ ແຕ່ໃນປີ 2006 ວຽກງານການປັບໂຄງສ້າງໄດ້ເລີ່ມໄວຂຶ້ນ. ລັດວິສາຫະກິດຫຼາຍຫົວໜ່ວຍຍັງເຄື່ອນໄຫວບົນຫຼັກການທີ່ບໍ່ສອດຄ່ອງກັບຄວາມຍືນຍົງດ້ານທຸລະກິດ.

**ຫ້ອງການປັບປຸງທຸລະກິດ (BPO) ໄດ້ສຳເລັດການປະເມີນ 70 ລັດວິສາຫະກິດ ສຳລັບປີ 2002-2006.** ຜົນການປະເມີນເຫັນວ່າ: ການປັບໂຄງສ້າງລັດວິສາຫະກິດ ໄລຍະ 1 ແລະ 2 ແມ່ນຍັງຊັກຊ້າ ແຕ່ວ່າການເຄື່ອນໄຫວທຸລະກິດໂດຍລວມແມ່ນໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ; ໃນຈຳນວນ 48 ຈາກທັງໝົດ 70 ຫົວໜ່ວຍ ແມ່ນບໍ່ມີລະບົບບັນຊີທີ່ຖືກຕ້ອງຕາມກົດໝາຍການບັນຊີ; ໂດຍທຽບກັບປະເພດລັດວິສາຫະກິດ-ລັດ 100%, ວິສາຫະກິດປະສົມແມ່ນຜົນການເຄື່ອນໄຫວດີກ່ວາຫຼາຍ.

**ການກວດສອບບັນຊີໂດຍຜູ້ກວດສອບເອກະລາດສຳລັບປີ** 2005 ແລະ 2006 ຂອງລັດວິສາຫະກິດ ໄລຍະ 2 ແລະ 3 ແລະ ໄລຍະ 1 (ບ/ສ ພູດອຍ, ນ້ຳປະປາ ແລະ ການຢາເລກ 3) ແມ່ນກຳລັງໃກ້ຈະສຳເລັດ. ຂໍ້ສະຫລຸບ ແລະ ການແນະນຳຕ່າງໆ ຈາກການກວດສອບຈະຊ່ວຍວຽກງານການປັບໂຄງສ້າງໃນຕໍ່ໜ້າ.

**ຫ້ອງການ BPO ຄາດວ່າຈະໄດ້ຖືກຍົກລະດັບຂຶ້ນອີກຂັ້ນໜຶ່ງເພື່ອໃຫ້ສາມາດຊີ້ນຳວຽກງານການປະຕິຮູບພາກລັດວິສາຫະກິດ.** ໂດຍການຊ່ວຍເຫລືອຂອງ JBIC, ຫ້ອງການ BPO ກຳລັງມີການປະເມີນເບື້ອງຕົ້ນ ລັດວິສາຫະກິດໄລຍະ 3 ຊຶ່ງຄາດວ່າຈະສຳເລັດພາຍໃນເດືອນສາມ. ຈຸດປະສົງຕົ້ນຕໍຂອງການປະເມີນແມ່ນທົບທວນສະພາບປະຈຸບັນ ແລະ ໃຫ້ທິດທາງຕໍ່ໄປສຳລັບການປັບໂຄງສ້າງລັດວິສາຫະກິດເຫລົ່ານັ້ນ.

# ນະໂຍບາຍດ້ານລາຄາສຳລັບລັດວິສາຫະກິດຂະແໜງໂຄງລ່າງ

ພາກໂຄງລ່າງ ແລະ ການບໍລິການຕ່າງໆສ່ວນໃຫຍ່ແມ່ນມາຈາກພາກລັດວິສາຫະກິດ ເຖິງວ່າພາກເອກະຊົນມີສ່ວນສຳຄັນໃນຂະແໜງໂທລະຄົມ. ເຖິງວ່າຈະມີການປັບລາຄາໃນໄລຍະຜ່ານມາ ຄ່າບໍລິການຕ່າງໆແມ່ນນຳຫລັງອັດຕາເງິນເຟີ້ ແລະ ຕ່ຳກ່ວາລະດັບຈຸດກຸ້ມທຶນ. ໂຄງສ້າງລາຄາທີ່ສັບສົນ ແລະ ລາຄາທີ່ຕ່ຳພາໃຫ້ການນຳໃຊ້ໄຟຟ້າ ແລະ ນ້ຳປະປາບໍ່ມີປະສິດພາບພ້ອມທັງສິ້ນເປືອງຊັບພະຍາກອນສຳລັບການລົງທຶນຕໍ່ໄປ. ໜີ້ຄ້າງຈ່າຍສ່ວນໃຫຍ່ແມ່ນມີຕໍ່ຜູ້ໃຫ້ບໍລິການດ້ານໂຄງລ່າງ ໃນນັ້ນລວມທັງໜີ້ຈາກງົບປະມານລັດ ຊຶ່ງເຮັດໃຫ້ລັດວິສາຫະກິດພາກໂຄງລ່າງມີຄວາມຫຍຸ້ງຍາກໃນການຊຳລະໜີ້ເງິນກູ້ຕໍ່ລັດຖະບານ.

ເພື່ອຫລຸດຜ່ອນການຖົມຊຸມຈາກງົບປະມານລັດ ແລະ ນຳໃຊ້ແຫລ່ງທຶນຈາກພາກເອກະຊົນ, ລັດຖະບານໄດ້ມີການປັບລາຄາ ແລະ ຄ່າບໍລິການຕ່າງໆໃຫ້ເໝາະສົມຂຶ້ນ ລວມທັງການວາງລາຄາທີ່ມີການແຂ່ງຂັນໂດຍສະເພາະໃນດ້ານການບໍລິການໂທລະຄົມ ແລະ ການບິນ. ລັດຖະບານຍັງໄດ້ປະຕິບັດຍຸດທະສາດການປັບຄ່າບໍລິການໃຫ້ໄປສູ່ລະດັບຈຸດກຸ້ມທຶນ, ຫລຸດຜ່ອນການຖົມຊຸມລະຫວ່າງກຸ່ມຜູ້ຊົມໃຊ້ ແລະ ຈາກງົບປະມານລັດ, ປັບປຸງການເຄື່ອນໄຫວທຸລະກິດ ແລະ ສົ່ງເສີມການເຂົ້າຮ່ວມ ແລະ ລົງທຶນຂອງພາກເອກະຊົນ. ຜົນສຳເລັດໃນການກ້າວໄປສູ່ຈຸດກຸ້ມທຶນສຳລັບຂະແໜງໄຟຟ້າແມ່ນໄວກວ່າກຳນົດ. ຄ່າບໍລິການດ້ານໂທລະຄົມ (ມືຖື) ແລະ ລາຄາປີ້ຍົນແມ່ນໄດ້ວາງບົນພື້ນຖານທຸລະກິດເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການ ແລະ ການແຂ່ງຂັນໃນຕະຫລາດ.

## ຂະແໜງນ້ຳປະປາ

**ລັດຖະບານໄດ້ສືບຕໍ່ປັບປຸງໂຄງສ້າງລາຄານ້ຳປະປາ.** ກະຊວງໂຍທາທິການ ແລະ ຂົນສົ່ງ (MPWT) ໄດ້ສຳເລັດການທົບທວນລາຄາສຳລັບປີ 2008-2010 ແລະ ຄາດວ່າຈະໄດ້ຮັບຜົນຕອບແທນຈາກການລົງທຶນ (5%) ໃນປີ 2010 ສຳລັບແຂວງຈຳປາສັກ, ຫຼວງພະບາງ ແລະນະຄອນຫຼວງວຽງຈັນ; ສາມາດກຸ້ມທຶນ (ຄ່າຫລຸ້ຍຫ້ຽນ) ໄດ້ຄົບຖ້ວນໃນ 6 ແຂວງ ແລະ ປະມານ 50% ຫາໃກ້ຄຽງກັບ 100% ໃນ 8 ແຂວງທີ່ເຫລືອ.



**ຄ່ານ້ຳປະປາໃນນະຄອນຫຼວງວຽງຈັນ ໄດ້ເພີ່ມຂຶ້ນຫຼາຍສົມຄວນໃນປີ 2007.**

ຕາຕະລາງ 7. ການປັບຄ່ານ້ຳທີ່ຜ່ານມາໃນນະຄອນຫຼວງວຽງຈັນ

(ແຕ່ 05/2007 ຮອດປະຈຸບັນ)

| Water users | Q/ty Vol.(m3) | Old tariff Kip/m³ | Current tariff Kip/m³ | % change |
|---|---|---|---|---|
| **Group 1:** Households, government offices | 0 - 5 | 350 | 420 | 20 |
| | 6 - 30 | 526 | 685 | 30 |
| | > 30 | 706 | 1,060 | 50 |
| *unweighted average* | | **527** | **722** | **33** |
| **Group 2:** Commercial and industrial | 0 - 10 | 1,210 | 1,575 | 30 |
| | 11 - 50 | 1,720 | 2,670 | 55 |
| | >50 | 2,364 | 4,140 | 75 |
| *unweighted average* | | **1,765** | **2,795** | **54** |
| **Group 3:** Embassies and foreign residential | 0 - 10 | 5,260 | 5,685 | 8 |
| | 11 - 50 | 5,620 | 6,745 | 20 |
| | > 50 | 6,180 | 8,655 | 40 |
| *unweighted average* | | **5,687** | **7,028** | **23** |

*ແຫລ່ງ:* WASA, MTPW

**ລັດຖະບານມີການສົ່ງເສີມໃຫ້ພາກເອກະຊົນເຂົ້າສຳປະທານການສະໜອງນ້ຳປະປາຂະໜາດນ້ອຍ** ໃນ 6 ເຂດໃໝ່ທີ່ແຂວງວຽງຈັນ ແລະ ບໍລິຄຳໄຊ. ຜ່ານມາໄດ້ໃຫ້ການສຳປະທານແກ່ພາກເອກະຊົນຈຳນວນສາມແຫ່ງ ແລະ ໃນນັ້ນສອງແຫ່ງແມ່ນໄດ້ໃຫ້ບໍລິການນັບແຕ່ເດືອນເມສາ 2006 ເປັນຕົ້ນມາ.

**ກົດໝາຍນ້ຳປະປາຈະໄດ້ຖືກນຳສະເໜີຕໍ່ສະພາແຫ່ງຊາດໃນປີ 2008** ເພື່ອເປັນພື້ນຖານດ້ານກົດໝາຍສຳລັບຂະແໜງນີ້ ແລະ ປັບປຸງການກໍ່ສ້າງ ແລະ ຄຸ້ມຄອງລະບົບການສະໜອງນ້ຳປະປາ, ການກວດກາຄຸນນະພາບນ້ຳ ແລະ ສົ່ງເສີມການມີສ່ວນຮ່ວມຂອງພາກເອກະຊົນ.

## ໄຟຟ້າ

ບໍລິສັດ ໄຟຟ້າລາວ (EdL) ໄດ້ຮັບຜົນກະທົບໜັກໜ່ວງຈາກວິກິດການດ້ານການເງິນໃນອາຊີທີ່ຜ່ານມາ ແລະ ໄພເງິນເຟີ້ໃນທ້າຍຊຸມປີ 1990 ຍ້ອນອັດຕາແລກປ່ຽນ: ລາຍຮັບຕົ້ນຕໍແມ່ນເປັນເງິນກີບແຕ່ການຊຳລະໜີ້ເປັນໂດລາ (US$). ແຜນການຟື້ນຟູການເງິນໄດ້ຮັບການປະຕິບັດໃນຫຼາຍປີຕໍ່ມາ ລວມທັງການຫັນໜີ້ເປັນທຶນ (ຫຸ້ນ) ຂອງລັດຖະບານ ແລະ ການປັບລາຄາໄຟຟ້າ 25-50% ຕໍ່ປີ. ປະຈຸບັນ ໄຟຟ້າລາວ ມີຖານະທີ່ໝັ້ນຄົງພໍສົມຄວນ ແລະ ສາມາດຈ່າຍເງິນເງິນແບ່ງປັນຜົນແກ່ລັດຖະບານປະມານ 3-5 ລ້ານໂດລາ ຕໍ່ປີ ນັບແຕ່ 2003 ເປັນຕົ້ນມາ. ກຳໄລຈາກການສົ່ງອອກໄຟຟ້າຂອງບໍລິສັດໄດ້ຖືກນຳໃຊ້ເພື່ອຖົມຊຸມການຫລຸບທຶນຈາກການຂາຍໄຟຟ້າພາຍໃນປະເທດ. ລາຄາໄຟຟ້າສະເລ່ຍພາຍໃນແມ່ນຕ່ຳກ່ວາຈຸດກຸ້ມທຶນປະມານ 10%. ການຂາດປະສິດທິຜົນອີກອັນໜຶ່ງແມ່ນເກີດຈາກການເກື້ອກຸນລາຄາລະຫວ່າງກຸ່ມຜູ້ຊົມໃຊ້ທີ່ເປັນຄົວເຮືອນ ແລະ ກະສິກຳ ກັບກຸ່ມອື່ນໆ. ໃນທ້າຍປີ 2005 ໄດ້ມີການເຊັນຂໍ້ຕົກລົງວ່າດ້ວຍແຜນການຟື້ນຟູການເງິນສຳລັບຂະແໜງໄຟຟ້າເພື່ອປັບຂຶ້ນລາຄາໄປສູ່ລະດັບຈຸດກຸ້ມທຶນ, ຫລຸດຜ່ອນໜີ້ໄຟຟ້າຄ້າງຈ່າຍ ແລະ ຫລີກຫລ້ຽງການສ້າງໜີ້ໃໝ່ໃນອານາຄົດຂອງລັດທີ່ມີຕໍ່ EdL.

**ລັດຖະບານ ແລະ ໄຟຟ້າລາວ ໄດ້ສືບຕໍ່ຈັດຕັ້ງປະຕິບັດ ແຜນຟື້ນຟູການເງິນ[3] ເຖິງວ່າຍັງມີບັນຫາທ້າທາຍຫລາຍຢ່າງ.** ການປັບຄ່າໄຟຟ້າແມ່ນເກີນແຜນເລັກໜ້ອຍ ແລະ ການປັບຫລ້າສຸດແມ່ນວັນທີ 1 ມັງກອນ 2008 (ໂດຍສະເລ່ຍ 1,8 ສ່ວນຮ້ອຍ ແຕ່ສຳລັບປະເພດຜູ້ຊົມໃຊ້ຕ່າງໆແມ່ນປັບໃນອັດຕາຕ່າງກັນເພື່ອກ້າວໄປສູ່ການຫລຸດຜ່ອນການເກື້ອກູນເປັນເທື່ອລະກ້າວ). ປະສິດທິຜົນຂອງການດຳເນີນທຸລະກິດກໍໄດ້ຮັບການປັບປຸງ ໂດຍການຂາດທຶນແມ່ນຕ່ຳກ່ວາ 17 ສ່ວນຮ້ອຍ ໃນປີ 2007. ການແກ້ໄຂໜີ້ໄຟຟ້າຄ້າງຈ່າຍຂອງລັດກໍມີຜົນຄືບໜ້າ ແລະ ກະຊວງການເງິນໄດ້ປະຕິບັດຕາມແຜນຊຳລະໜີ້ທີ່ໄດ້ຕົກລົງກັນຮອດເດືອນກັນຍາ ປີ 2005. ວິໄນການຊຳລະຄ່າຊົມໃຊ້ໄຟຟ້າໄດ້ຄ່ອຍໆດີຂຶ້ນ ແລະ ການຈ່າຍຄ່າໄຟໂດຍບັນດາອົງການລັດຕ່າງໆແມ່ນໃກ້ຈະເຖິງລະດັບການຊົມໃຊ້ຕົວຈິງປະຈຳປີ. ພ້ອມນັ້ນ ປີ 2007 ແມ່ນປີທຳອິດທີ່ໜີ້ຄ່າໄຟຂອງລັດໄດ້ຫລຸດລົງຊຶ່ງຍອດການຊຳລະຄ່າໄຟປະຈຸບັນ ແລະ ໜີ້ຄ້າງຈ່າຍແມ່ນເກີນຍອດການຊົມໃຊ້ປະຈຳປີ. ຄາດວ່າຈະມີຜົນຄືບໜ້າຕໍ່ໄປໃນປີ 2008.

**ບ/ສ ໄຟຟ້າລາວແມ່ນຢູ່ໃນທ່າມກາງແຫ່ງການປ່ຽນແປງຂອງສະພາບຕະຫລາດພະລັງງານສາກົນຊຶ່ງເປັນໂອກາດດີສຳລັບຂະແໜງໄຟຟ້າຂອງລາວ.** ການຖີບຕົວສູງຂຶ້ນຂອງລາຄານ້ຳມັນໃນຕະຫຼາດໂລກໄດ້ເຮັດໃຫ້ຕະຫຼາດການສົ່ງອອກໄຟຟ້າເພີ່ມຂຶ້ນ (ໄທ, ຫວຽດນາມ ແລະ ກຳປູເຈຍ) ແລະ ຄວາມສົນໃຈໃນການຫັນມານຳໃຊ້ພະລັງງານທົດແທນກໍສູງຂຶ້ນ. ສະພາບທີ່ເອື້ອອຳນວຍໄດ້ດຶງດູດເອົານັກລົງທຶນຈາກພູມີພາກ ແລະ ເຂດອື່ນໆຊຶ່ງຢາກຈະລົງທຶນຂະຫຍາຍຕາຄ່າຍ ແລະ ຄວາມສາມາດຜະລິດຂອງ EDL. ຄວາມຕ້ອງການພາຍໃນໄດ້ເພີ່ມຂຶ້ນ ຍ້ອນບັນດາໂຄງການໃນຂະແໜງບໍ່ແຮ່ ແລະ ກໍ່ສ້າງ. ດ້ວຍເຫດນັ້ນ EDL ແລະ ຜູ້ຜະລິດໄຟອື່ນໆ ແມ່ນກຳລັງດຳເນີນແຜນລົງທຶນທີ່ທ້າທາຍ. ຄວາມຕ້ອງການດ້ານຕະຫຼາດ ແລະ ການລົງທຶນໄດ້ມີປ່ຽນສະພາບໂດຍພື້ນຖານຂອງຂະແໜງການຊຶ່ງໄຟຟ້າລາວດຳເນີນເຄື່ອນໄຫວ. ເພື່ອຮອງຮັບກັບສະພາບດັ່ງກ່າວຈະມີການສຶກສາລາຄາໄຟຟ້າຄືນໃໝ່ພາຍໃນປີ 2008 ເພື່ອທົບທວນ ຄືນຕົ້ນທຶນການສະໜອງໄຟ ແລະ ຜົນກະທົບຈາກບັນດາຜູ້ຊົມໃຊ້ໄຟໃໝ່ທີ່ໃຫຍ່.

## *ໂທລະຄົມມະນາຄົມ*

ຄວາມສາມາດບໍລິການດ້ານໂທລະຄົມໃນ ສປປ ລາວ ໄດ້ເພີ່ມຂຶ້ນໂດຍສະເພາະແມ່ນໂທລະສັບມືຖື ຊຶ່ງມີລະບົບບໍລິການ GSM ເກືອບທົ່ວປະເທດ. ຄວາມໜາແໜ້ນຂອງການບໍລິການຊົມໃຊ້ໄດ້ເພີ່ມຂຶ້ນ (ປະຈຸບັນປະມານ 20%). ແຕ່ວ່າໂຄງສ້າງຕະຫຼາດໃນປະຈຸບັນ ແລະ ການມີຫຸ້ນສ່ວນຂອງລັດໃນຫຼາຍບໍລິສັດແມ່ນບໍ່ມີປະສິດທິຜົນ ແລະ ພາໃຫ້ມີການຊ້ຳກັນໂດຍບໍ່ຈຳເປັນດ້ານການລົງທຶນຂອງລັດ. ເຖິງວ່ານະໂຍບາຍ ແລະ ລະບຽບການຄຸ້ມຄອງຍັງບໍ່ເອື້ອອຳນວຍເທົ່າທີ່ຄວນ ແຕ່ຜູ້ລົງທຶນພາກເອກະຊົນຍັງມີຄວາມສົນໃຈລົງທຶນໃນ ສປປ ລາວ. ແຕ່ວ່າການລົງທຶນສ່ວນໃຫຍ່ແມ່ນຢູ່ໃນນະຄອນຫຼວງວຽງຈັນ ແລະ ເຂດຕົວເມືອງໃຫຍ່ອື່ນໆ. ມີຄວາມຈຳເປັນທີ່ຈະຕ້ອງປັບປຸງລະບຽບການຄຸ້ມຄອງເພື່ອພັດທະນາຂະແໜງການໂດຍອີງໃສ່ການລົງທຶນແບບຍືນຍົງຂອງພາກເອກະຊົນ. ຄ່າໂທລະສັດຕັ້ງໂຕະໄດ້ຖືກປັບຂຶ້ນໃນຕົ້ນປີ 2004 ເພື່ອໃຫ້ລາຄາໃກ້ຄຽງກັບລະດັບຕົ້ນທຶນຕົວຈິງ. ຄ່າໂທລະສັບມືຖືແມ່ນວາງອີງຕາມສະພາບຕະຫຼາດ ແລະ ຄ່າຈັບຈອງ ແລະ ຄ່າໂທຕໍ່ນາທີແມ່ນໄດ້ຫລຸດລົງຫຼາຍພາຍຫລັງທີ່ Millicom ເປີດການບໍລິການ. ແຕ່ວ່າຄ່າໂທຂອງບໍລິສັດຕ່າງໆແມ່ນຄ້າຍຄືກັນຊຶ່ງສະແດງໃຫ້ເຫັນວ່າບໍ່ມີການແຂ່ງຂັນດ້ານລາຄາປານໃດ.

**ຂະແໜງໂທລະຄົມລາວສືບຕໍ່ຂະຫຍາຍຕົວ** ໃນດ້ານຈຳນວນຜູ້ໃຫ້ບໍລິການ ແລະ ຜູ້ຊົມໃຊ້. ຮອດເດືອນທັນວາ 2007 ຄວາມສາມາດບໍລິການຈຳນວນສາຍໂທ (ລວມທັງຕັ້ງໂຕະ, ມືຖື ແລະ CDMA/WILL) ແມ່ນມີ 1.711.850 ສາຍ; ໃນນັ້ນ ມີ ປະມານ 1.598.775 ສາຍຖືກນຳໃຊ້. ຄວາມໜາແໜ້ນໃນການນຳໃຊ້ໃນ ສປປ ລາວ ໄດ້ເພີ່ມຂຶ້ນເປັນ 285 ຕໍ່ 1000 ຄົນ ຮອດເດືອນທັນວາ 2007 ຈາກ 210 ໃນປີ 2006 (ເພີ່ມຂຶ້ນ 36 ສ່ວນຮ້ອຍ). ຄ່າໂທໂດຍລວມແມ່ນບໍ່ປ່ຽນແປງໃນປີ 2007.

## *ການບິນລາວ*

ບ/ສ ການບິນລາວ ໄດ້ປັບຄ່າບໍລິການດ້ານການບິນເປັນໄຕມາດນັບແຕ່ປີ 2002 ເປັນຕົ້ນມາເພື່ອໃຫ້ສອດຄ່ອງກັບລັກສະນະລະດູການຂອງຕະຫຼາດການທ່ອງທ່ຽວ. ລາຄາປີ້ຍົນໄດ້ຖືກປັບເປັນຄັ້ງທຳອິດໃນເດືອນມິຖຸນາ 2002 ແລະຈາກນັ້ນຂຶ້ນອີກປະມານ 50% ໃນເດືອນ 09/2002. ລາຄາປີ້ຍົນໃນປີ 2003 ສຳລັບຖ້ຽວບິນຕ່າງໆໂດຍລວມແມ່ນບໍ່ໄດ້ປ່ຽນແປງຍ້ອນຍອດຂາຍລວມຫລຸດລົງ (ເນື່ອງຈາກນັກເດີນທາງໄດ້ຫັນມາໃຊ້ບໍລິການທາງລົດຫຼາຍຂຶ້ນ). ໃນໄລຍະຫລັງນີ້ ໄດ້ມີການປັບຖ້ຽວບິນຕ່າງໆໃຫ້ສອດຄ່ອງກ່ວາເກົ່າ ແລະ ລາຄາປີ້ຍົນໄດ້ປັບຕາມຄວາມຕ້ອງການຂອງຕະຫຼາດ ແລະ ການເດີນທາງຂອງນັກທ່ອງທ່ຽວພ້ອມທັງການແຂ່ງຂັນຈາກການບໍລິການຂົນສົ່ງທາງບົກ.

---

[3] ລັດຖະບານລາວ, ໄຟຟ້າລາວ (EdL) ແລະ ທະນາຄານໂລກ ໄດ້ຕົກລົງກ່ຽວກັບແຜນຟື້ນຟູການເງິນສຳລັບຂະແໜງພະລັງງານໃນປີ 2005 ເພື່ອຮັບປະກັນການເຄື່ອນໄຫວທຸລະກິດຂອງ EdL. ແຜນຟື້ນຟູປະກອບດ້ວຍ 4 ອົງປະກອບໃຫຍ່:

1) ການປັບລາຄາ: ປັບໂຄງສ້າງລາຄາ ແລະ ຂຶ້ນຄ່າໄຟສະເລ່ຍປີລະ 1 ສ່ວນຮ້ອຍ (ບໍ່ລວມເງິນເຟີ້) ເພື່ອບັນລຸຈຸດກຸ່ມທຶນສົມບູນໃນປີ 2011;
2) ການແກ້ໄຂໜີ້ຄ່າໄຟຟ້າຄ້າງຈ່າຍຂອງລັດທີ່ມີຕໍ່ໄຟຟ້າລາວ ຄຽງຄູ່ກັບການຕົກລົງກຳນົດເວລາການຊຳລະ;
3) ການຊຳລະຄ່າໄຟຂອງລັດໃຫ້ທັນຕາມກຳນົດເວລາໃນອານາຄົດ;
4) ການປັບປຸງປະສິດຜົນການດຳເນີນທຸລະກິດຂອງໄຟຟ້າລາວ ແລະ ຫລຸດຜ່ອນອັດຕາການສູນເສຍຂອງໄຟລົງຈາກ 20% ໃນປີ 2004 ເປັນ 13% ໃນປີ 2011.

**ຄວາມສາມາດບໍລິການຂອງການບິນລາວໃນປະຈຸບັນແມ່ນຍັງຕ່ຳ (ມີຍົນນ້ອຍພຽງ 5 ລຳ) ເພື່ອຮອງຮັບກັບຄວາມຕ້ອງການພາຍໃນຂອງປະເທດທີ່ມີການເດີນທາງໆບົກທີ່ຫຍຸ້ງຍາກ.** ການເດີນທາງດ້ານທຸລະກິດ ແລະ ທ່ອງທ່ຽວລະຫວ່າງ ສປປ ລາວ, ຫວຽດນາມ, ກຳປູເຈຍ ແລະ ໄທ ຄາດວ່າຈະເພີ່ມຂຶ້ນຢ່າງວ່ອງໄວ. ເພື່ອຮອງຮັບກັບສະພາບດັ່ງກ່າວ ລັດຖະບານມີຈຸດປະສົງດຶງດູດເອົາພາກເອກະຊົນມາຮ່ວມທຶນເພື່ອຍົກສູງຄວາມສາມາດແຂ່ງຂັນຂອງບໍລິສັດຢູ່ໃນພາກພື້ນ, ຂະຫຍາຍ ແລະ ປັບປຸງການບໍລິການ. ເພື່ອປັບປຸງການເຄື່ອນໄຫວທຸລະກິດຂອງຕົນ ບໍລິສັດການບິນລາວໄດ້ກ້າວໄປສູ່ການ ວາງຄ່າບໍລິການບິນພື້ນຖານທຸລະກິດຢ່າງສົມບູນໂດຍບໍ່ມີການແຊກແຊງຈາກລັດຖະບານ. ໃນເດືອນກຸມພາ 2008 ໄດ້ມີການນຳໃຊ້ລະບົບລາຄາອັດຕາດຽວສຳລັບຜູ້ໂດຍສານທັງໝົດ (ທັງຄົນພາຍໃນ ແລະ ຕ່າງປະເທດ). ປະຈຸບັນ ການບິນລາວກໍມີການຊອກຫາຜູ້ຮ່ວມຫຸ້ນຕ່າງປະເທດຢ່າງຈິງຈັງ.

## 2.3 ການປະຕິຮູບຂະແໜງທະນາຄານ-ການເງິນ

ການປະຕິຮູບພາກທະນາຄານຫລ້າສຸດໃນ ສປປ ລາວ ແມ່ນເລີ່ມໃນປີ 2001 ເພື່ອປັບໂຄງສ້າງທະນາຄານທຸລະກິດລັດ, ປັບປຸງການຄຸ້ມຄອງ ແລະ ຊີ້ນຳກວດກາທະນາຄານ ແລະ ເປີດກ້ວາງການລົງທຶນຂອງພາກເອກະຊົນ. ຜົນຄືບໜ້າໂດຍລວມແມ່ນຍັງຊັກຊ້າ ແລະ ຖານະການເງິນຂອງທະນາຄານທຸລະກິດລັດຍັງອ່ອນແອ. ໂຄງສ້າງການຈັດຕັ້ງຍັງບໍ່ສອດຄ່ອງ ແລະ ຂາດຄວາມສົມດຸນໃນການກວດສອບຈາກຄະນະສະພາບໍລິຫານຈາກພາຍນອກ. ການຊີ້ນຳກວດກາ ແລະ ປະຕິບັດລະບຽບການຄຸ້ມຄອງໂດຍທະນາຄານ ສປປ ລາວ ແມ່ນຍັງຊັກຊ້າ ແລະ ບໍ່ທົ່ວເຖິງຍ້ອນມີຂໍ້ຈຳກັດດ້ານຄວາມສາມາດ ແລະ ກົນໄກຕ່າງໆ. ຜົນສຳເລັດອັນສຳຄັນໃນໄລຍະຜ່ານມາລວມມີ: ການຫລຸດຜ່ອນໜີ້ເສຍໄດ້ຢ່າງຫຼວງຫຼາຍ ແລະ ປັບປຸງການຕິດຕາມກວດກາຢ່າງເປັນປະຈຳ. ພາກທະນາຄານທຸລະກິດລັດຍັງມີກົດດັນກ່ຽວກັບການປ່ອຍເງິນກູ້ທີ່ບໍ່ແມ່ນທຸລະກິດຊຶ່ງອາດສ້າງພາລະຕໍ່ການປ່ອຍເງິນກູ້ລວມຂອງຕົນໃນໄລຍະຍາວ. ໃນຂະນະທີ່ວັດທະນະທຳການປ່ອຍເງິນກູ້ທີ່ບໍ່ສອດຄ່ອງ ແລະ ຂີດຄວາມສາມາດທີ່ຈຳກັດໃນການວິເຄາະສິນເຊື່ອໄດ້ມີການປັບປຸງໃຫ້ດີຂຶ້ນ ບັນດາທະນາຄານທຸລະກິດລັດໂດຍລວມແມ່ນຍັງບໍ່ເຂັ້ມແຂງພໍ. ການມີທີ່ປຶກສາສາກົນດ້ານທະນາຄານປະຈຳສອງທະນາຄານທຸລະກິດລັດພາຍໃຕ້ໂຄງການປະຕິຮູບທະນາຄານຂອງເອດີບີ ແມ່ນການຊ່ວຍເຫຼືອທີ່ສຳຄັນສຳລັບການຂ້າມຜ່ານໄປສູ່ລະບົບການຄຸ້ມຄອງບໍລິຫານທີ່ເອກະລາດ.

**ເຖິງວ່າຂະແໜງການເງິນ (ພາກສະຖາບັນການເງິນ) ກຳລັງມີການເຕີບໂຕ ແຕ່ໂດຍລວມແມ່ນຍັງໜຸ່ມນ້ອຍ ແລະ ສ່ວນໃຫຍ່ແມ່ນເປັນທະນາຄານ.** ຊັບສິນລວມຂອງຂະແໜງການເງິນໃນທ້າຍປີ 2006 ແມ່ນກວມ 25 ສ່ວນຮ້ອຍ ຂອງ GDP, ຊຶ່ງເປັນການເຕີບໂຕເລັກໜ້ອຍໃນຊຸມປີຜ່ານມາ. ການປະຢັດໃນຂະແໜງເສດຖະກິດ (savings) ກວມພຽງ 18,3 ສ່ວນຮ້ອຍ ຂອງ GDP ຊຶ່ງຖືວ່າຕ່ຳເມື່ອທຽບກັບມາດຖານໃນພາກພື້ນ. ການປ່ອຍສິນເຊື່ອຂອງພາກທະນາຄານຄິດເປັນອັດຕາສ່ວນຂອງ GDP ແມ່ນຖືວ່າຢູ່ໃນລະດັບຕ່ຳສຸດໃນພາກພື້ນ. ເງິນຝາກປະຢັດແມ່ນເກີນເງິນກູ້ໃນອັດຕາສ່ວນ 2:1 ໃນລະບົບທະນາຄານ ແລະ ຍອດເງິນກູ້ກວມພຽງຊັດສ່ວນໜ້ອຍໆຂອງຊັບສິນລວມຂອງພາກທະນາຄານ (ຕາຕະລາງ 8). ສະຖາບັນການເງິນທີ່ບໍ່ແມ່ນທະນາຄານແມ່ນກວມໜ້ອຍກ່ວາ 5 ສ່ວນຮ້ອຍຂອງ ຊັບສິນທັງໝົດຂອງຂະແໜງການເງິນ (ຄາດຄະເນ). ນອກຈາກກອງທຶນປະກັນສັງຄົມສຳລັບລັດຖະກອນແລ້ວ ແມ່ນຍັງບໍ່ທັນມີລະບົບບຳນານ ແລະ ການຝາກປະຢັດແບບສັນຍາເທື່ອ.

ຕາຕະລາງ 8. ຂໍ້ມູນລວມກ່ຽວກັບຂະແໜງທະນາຄານ-ການເງິນ ໃນ ສປປ ລາວ, 2006

| (ຕື້ກີບ) | ຊັບສິນ | | ຝາກປະຢັດ | | ເງິນກູ້ | | ສ່ວນແບ່ງຊັບສິນ (%) | |
|---|---|---|---|---|---|---|---|---|
| | 2003 | 2006 | 2003 | 2006 | 2003 | 2006 | 2003 | 2006 |
| **ທະນາຄານທຸລະກິດລັດ** | **2,844** | **4,886** | **3,331** | **5,077** | **1,456** | **1,703** | **55.2** | **54.5** |
| ການຄ້າຕ່າງປະເທດ(BCEL) | 1,618 | 2,965 | 2,014 | 3,069 | 993 | 715 | 31.4 | 33.0 |
| ພັດທະນາລາວ (LDB) | 946 | 1,475 | 1,098 | 1,563 | 225 | 542 | 18.4 | 16.4 |
| ສົ່ງເສີມກະສິກຳ (APB) | 281 | 446 | 218 | 446 | 238 | 446 | 5.5 | 5.0 |
| **ທະນາຄານເອກະຊົນ ແລະ ຫຸ້ນສ່ວນປະສົມ** | **2,107** | **3,388** | **1,223** | **2,573** | **910** | **1,471** | **40.9** | **37.8** |
| ລວມພາກທະນາຄານ | **4,951** | **8,275** | **4,554** | **7,650** | **2,366** | **3,174** | **96.1** | **92.2** |
| ການເງິນຈຸລະພາກ (MFI) | 56 | 125 | 14 | 80 | 56 | 125 | 1.1 | 1.4 |
| ສິນເຊື່ອທີ່ບໍ່ແມ່ນທະນາຄານ | 72 | 267 | - | - | - | - | 1.4 | 3.5 |
| ປະກັນໄພ (AGL) | 32 | 267 | | | | | 0.6 | 3.1 |
| ປະກັນສັງຄົມ | 40 | 40 | | | | | 0.8 | 0.4 |
| ລວມພາກສະຖາບັນການເງິນທີ່ບໍ່ແມ່ນທະນາຄານ | **200** | **699** | **14** | **80** | **56** | **125** | **3.9** | **7.8** |
| ລວມຍອດລະບົບການເງິນ | **5,151** | **8,973** | **4,568** | **7,730** | **2,422** | **3,299** | **100.0** | **100.0** |
| (ລ້ານ ໂດລາ US$) | 492 | 926 | 436 | 797 | 231 | 340 | | |
| (ອັດຕາສ່ວນຮ້ອຍຂອງ GDP, %) | 22.9 | 26.9 | 20.3 | 23.2 | 10.8 | 9.9 | | |

*ແຫລ່ງ:* ລັດຖະບານລາວ (BOL)

**ທະນາຄານທຸລະກິດລັດໄດ້ຮັບການປັບໂຄງສ້າງມາຫຼາຍປີ ແລະ ພາໃຫ້ຜົນການດຳເນີນທຸລະກິດດີຂຶ້ນໃນປີ 2007** ສາມທະນາຄານທຸລະກິດລັດແມ່ນກວມສ່ວນໃຫຍ່ຂອງພາກທະນາຄານໃນປະເທດ ຫລື ປະມານ 50 ສ່ວນຮ້ອຍ ຂອງຊັບສິນໃນຂະແໜງ. ປະຈຸບັນ ແຕ່ລະທະນາຄານໄດ້ມີຂໍ້ຕົກລົງດ້ານການຄຸ້ມຄອງ ຊຶ່ງໄດ້ເໜັ້ນການລາຍງານຕົວວັດແທກຜົນການດຳເນີນງານ. ອີງໃສ່ຂໍ້ມູນຈາກທະນາຄານ ສປປ ລາວ, ອັດຕາໜີ້ເສຍໂດຍລວມ (NPL) ໄດ້ຫລຸດລົງຫລາຍຈາກ 49 ສ່ວນຮ້ອຍໃນປີ 2005 ເປັນ 21 ສ່ວນຮ້ອຍ ໃນປີ 2006 ແລະ ປະມານ 1,6 ສ່ວນຮ້ອຍ ສຳລັບສອງທະນາຄານທີ່ມີຊັບສິນຫຼາຍກ່ວາໝູ່ (ຂໍ້ມູນສຳລັບທະນາຄານທີສາມຍັງບໍ່ທັນມີ). ທະນາຄານ BCEL ແລະ LDB ໄດ້ຮັບອານຸຍາດໃຫ້ເພີ່ມທຶນຈາກກຳໄລສຸດທິ ຄຽງຄູ່ກັບແຜນການເພີ່ມທຶນຈາກງົບປະມານລັດທີ່ດຳເນີນຢູ່. ເຖິງວ່າຍັງມີສິ່ງທ້າທາຍກ່ຽວກັບການລວມສູນເງິນກູ້ ແຕ່ວ່າອັດຕາສ່ວນຮ້ອຍຂອງ 20 ຜູ້ກູ້ທີ່ໃຫຍ່ສຸດຂອງສາມທະນາຄານທຸລະກິດລັດໄດ້ຫລຸດລົງຈາກ 56 ສ່ວນຮ້ອຍໃນປີ 2006 ເປັນ 34,5 ສ່ວນຮ້ອຍໃນປີ 2007.



ຕາຕະລາງ 9. ບາງຕົວເລກສະຖິຕິການເງິນທີ່ດີຂຶ້ນຂອງພາກທະນາຄານ

| | 2006 | 2007 |
|---|---|---|
| ເງິນໝູນວຽນໃນເສດຖະກິດ(% ຂອງ GDP) | 20.0 | 26.0 |
| ເງິນປະຢັດ (% ຂອງ GDP) | 22.0 | 27.0 |
| ການປ່ອຍເງິນກູ້ພາຍໃນ | 10.0 | 11.0 |
| ອັດຕາສ່ວນເງິນກູ້ຕໍ່ເງິນຝາກ | 42.0 | 38.0 |
| ອັດຕາສ່ວນຂອງທຶນຕໍ່ຊັບສິນ | | |
| ທະນາຄານທຸລະກິດລັດ (SCB) | -9.0 | -0.3 |
| ທະນາຄານປະສົມ | 6.0 | 5.0 |
| ທະນາຄານເອກະຊົນ | 24.0 | 24.0 |
| ລວມລະບົບທະນາຄານ | 2.0 | 6.0 |
| ໜີ້ເສຍ NPL (% ຂອງເງິນກູ້ລວມ) | | |
| ທະນາຄານທຸລະກິດລັດ (SCB) | 13.0 | 5.0 |
| ທະນາຄານປະສົມ | 14.0 | 14.0 |
| ທະນາຄານເອກະຊົນ | 1.0 | 2.0 |
| ລວມລະບົບທະນາຄານ | 10.0 | 6.5 |

*ແຫລ່ງ:* ລັດຖະບານລາວ (BOL)

**ໜີ້ເສຍໂດຍລວມໃນລະບົບທະນາຄານຂອງລາວໄດ້ຫລຸດລົງໃນປີ 2007 ໃນຂະນະທີ່ເງິນໝູນວຽນ, ເງິນປະຢັດ ແລະ ເງິນກູ້ໄດ້ເພີ່ມຂຶ້ນ. ອັດຕາສ່ວນຂອງທຶນຕໍ່ຊັບສິນຂອງທະນາຄານ SCB ດີຂຶ້ນແຕ່ຍັງຕິດລົບ.**

## ຜົນຄືບໜ້າຂອງລັດຖະບານໃນການປະຕິຮູບພາກທະນາຄານ

**ໃນປີ 2007 ລັດຖະບານໄດ້ມີມາດຕະການສ້າງຄວາມເຂັ້ມແຂງແກ່ຂະແໜງທະນາຄານ ແລະ ໃຫ້ຄວາມສະເໝີພາບດ້ານການປະກອບທຸລະກິດ.** ການປ່ຽນແປງດັ່ງກ່າວໄດ້ຊຸກຍູ້ໃຫ້ເກີດມີທະນາຄານເອກະຊົນໃໝ່ເກີດຂຶ້ນ ລວມທັງການຮ່ວມທຶນຂອງອົງການ IFC ແລະ ທະນາຄານ ANZ ກັບທະນາຄານວຽງຈັນພານິດ, ຊ່ວຍສ້າງຄວາມສົມດຸນລະຫວ່າງພາກທະນາຄານລັດ ແລະ ເອກະຊົນໃນອານາຄົດ. ໃນເດືອນມີນາ 2007 ລັດຖະບານໄດ້ວາງຂໍ້ບັງຄັບດ້ານທຶນສຳລັບພາກທະນາຄານໃນອັດຕາ 8 ສ່ວນຮ້ອຍ ຊຶ່ງສອດຄ່ອງກັບຫລັກການພື້ນຕໍ່ຂອງບາເຊນ (Basel Core Principles). ມາດຕະການດັ່ງກ່າວໄດ້ໃຫ້ໂອກາດ ແລະ ລະບຽບການທີ່ຄືກັນ.

**ການຊີ້ນຳກວດກາທະນາຄານໄດ້ຮັບການປັບປຸງດີຂຶ້ນ.** ສະພາບໍລິຫານທະນາຄານແມ່ນບໍ່ມີຕົວແທນຈາກທະນາຄານ ສປປ ລາວ ອີກ ແລະ ເປັນປະທານໂດຍຕົວແທນຈາກກະຊວງການເງິນ. ລະບົບທະນາຄານຍັງຂາດປະສົບການ, ການຝຶກອົບຮົມ ແລະ ຂໍ້ມູນ ຈຶ່ງເຮັດໃຫ້ຈັດຕັ້ງປະຕິບັດລະບຽບຫລັກການບໍ່ໄດ້ຮັບຜົນເທົ່າທີ່ຄວນ. ກົດໝາຍວ່າດ້ວຍທະນາຄານທຸລະກິດ ຊຶ່ງຮັບຮອງໃນຕົ້ນປີ 2007 ໄດ້ໃຫ້ຄວາມໂປ່ງໃສ ແລະ ວາງລະບຽບຂັ້ນຕອນສຳລັບການກໍ່ຕັ້ງທະນາຄານຢ່າງຈະແຈ້ງ, ງ່າຍດາຍ ແລະ ເປັນທຳສຳລັບທະນາຄານພາຍໃນ ແລະ ຕ່າງປະເທດ. ການດັດແກ້ດຳລັດປະທານປະເທດວ່າດ້ວຍການຄຸ້ມຄອງເງິນຕາ ແລະ ວັດຖຸມີຄ່າ ໃນປີ 2007 ໄດ້ລືບລ້າງຄວາມລຳອຽງ ຊຶ່ງຮຽກຮ້ອງໃຫ້ບັນດາບໍລິສັດບໍ່ແຮ່ຕ້ອງເປີດບັນຊີກັບທະນາຄານທຸລະກິດລັດເທົ່ານັ້ນ ແລະ ລວມທັງດ້ານເງິນຕາຕ່າງປະເທດ.

**ໃນປີ 2007 ລັດຖະບານໄດ້ມີບາດກ້າວໃນການປັບປຸງການເງິນຈຸລະພາກ ເຖິງວ່າຍັງຢູ່ໃນຂັ້ນຕົ້ນຂອງການພັດທະນາ.** ລັດຖະບານໄດ້ແຕ່ງຕັ້ງຄະນະໜ່ວຍງານດ້ານການເງິນຈຸລະພາກ ແລະ ຮ່າງກົດໝາຍວ່າດ້ວຍສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ບໍ່ຮັບເງິນຝາກ ແລະ ສະຫະກອນສິນເຊື່ອ. ກົດໝາຍໃໝ່ບໍ່ໄດ້ຈຳແນກສະຖາບັນທ້ອງຖິ່ນຫລືຕ່າງປະເທດ ແລະ ຫວັງວ່າຈະທົດແທນລະບຽບກົດໝາຍເກົ່າທີ່ກີດກັ້ນການລົງທຶນຂອງຕ່າງປະເທດໃນຂະແໜງທະນາຄານ.

## 2.4 ການປະຕິຮູບດ້ານການຄ້າ

ສປປ ລາວ ໄດ້ຄ່ອຍໆເຊື່ອມຕົວເຂົ້າກັບເສດຖະກິດໂລກເລີ່ມແຕ່ປີ 1989 ເປັນຕົ້ນມາໂດຍໄດ້ເຂົ້າເປັນສະມາຊິກອາຊຽນ ແລະ ເຂົ້າຮ່ວມຕະຫຼາດເສລີອາຟຕາ ໃນປີ 1997. ໃນປີ 2006 ລັດຖະບານໄດ້ມີການເພີ່ມທະວີການປະສານງານລະຫວ່າງຜູ້ໃຫ້ທຶນ ແລະ ນຳໃຊ້ກົນໄກການຊ່ວຍເຫລືອແບບເອກະພາບທົ່ວຂະແໜງການເຂົ້າໃນວຽກງານປະຕິຮູບການຄ້າພາຍໃຕ້ແຜນງານ DTIS/IF Action Matrix[4]. ການຈັດຕັ້ງປະຕິບັດການຫລຸດຜ່ອນອັດຕາພາສີເອກະພາບພາຍໃຕ້ກອບອາຟຕາ (CEPT) ໄດ້ເລີ່ມມາແຕ່ປີ 1998 ແລະ ຈະສຳເລັດການຫລຸດອັດຕາພາສີນຳເຂົ້າຈາກບັນດາປະເທດອາຊຽນລົງໃນລະດັບ 0-20% ໃນປີ 2005 ແລະ 0-5% ໃນປີ 2008. ອັດຕາພາສີສູງສຸດໃນປະຈຸບັນແມ່ນ 40% (ຫລຸດລົງຈາກ 150% ໃນປີ 1995) ແລະ ຕ່ຳກ່ວາ 20% ສຳລັບກຸ່ມຜະລິດຕະພັນສ່ວນໃຫຍ່. ຂໍ້ກີດກັ້ນຕ່າງໆດ້ານປະລິມານ ແລະ ບໍ່ແມ່ນດ້ານພາສີສຳລັບການນຳເຂົ້າແມ່ນຍັງມີຢູ່ ແລະ ຖືວ່າເປັນອຸປະສັກຕົ້ນຕໍບາງຂະແໜງການຍ່ອຍ.

**ລັດຖະບານໄດ້ສືບຕໍ່ມີຄວາມຄືບໜ້າໃນດ້ານວຽກງານກະກຽມເຂົ້າເປັນສະມາຊິກອົງການການຄ້າໂລກ (WTO)**, ໂດຍໄດ້ມີກອງປະຊຸມປຶກສາຫາລືຄະນະວິຊາການຄັ້ງທີສາມທີ່ນະຄອນ ເຊີແນວ ໃນເດືອນພະຈິກ 2007. ລັດຖະບານ (MOIC) ໄດ້ປັບແຜນດ້ານລະບຽບກົດໝາຍ ແລະ ປຶກສາຫາລືຂໍ້ສະເໜີເບື້ອງຕົ້ນດ້ານການບໍລິການກັບບັນດາປະເທດຄູ່ເຈລະຈາໃນກອງປະຊຸມ. ວຽກງານການຕອບຄຳຖາມຕ່າງໆຂອງບັນດາປະເທດຄູ່ເຈລະຈາສອງຝ່າຍ ແລະ ຫຼາຍຝ່າຍແມ່ນຍັງສືບຕໍ່.

**ອີງຕາມຕົວວັດແທກດ້ານການບໍລິການໂຄງລ່າງຫລ້າສຸດ (LPI)[5], ສປປ ລາວ ແມ່ນມີອັນດັບດີພໍສົມຄວນເມື່ອທຽບກັບຕົວວັດແທກສະພາບແວດລ້ອມດ້ານການລົງທຶນ.** ສປປ ລາວ ໄດ້ຖືກຈັດໃນອັນດັບ 117 ຈາກທັງໝົດ 150 ປະເທດ ໃນປີ 2007. ຄະແນນຕົວວັດແທກດ້ານໂຄງລ່າງຕ່ຳສຸດສຳລັບລາວແມ່ນກ່ຽວກັບຄວາມສາມາດໃນການຕິດຕາມການຈັດສົ່ງສິນຄ້າ (ຄະແນນ 1,89 ຈາກລະດັບແຕ່ 1 ຫາ 5) ແລະ ຄຸນນະພາບຂອງການຂົນສົ່ງ ແລະ ໂຄງລ່າງດ້ານ IT (ຄະແນນ 2,0). ການປະເມີນດັ່ງກ່າວຍັງຈັດ ສປປ ລາວ ຢູ່ໃນອັນດັບ 120 ຈາກທັງໝົດ 150 ປະເທດ ກ່ຽວກັບປະສິດທິຜົນ ແລະ ປະສິດທິພາບ ຂອງລະບຽບພາສີ ແລະ ລະບຽບການອື່ນໆໃນດ່ານຊາຍແດນ. ໃນດ້ານສະພາບແວດລ້ອມຂອງການລົງທຶນ ສປປ ລາວ ແມ່ນຖືກຈັດໃນອັນດັບທີ່ຕ່ຳໃນຫຼາຍດ້ານເມື່ອທຽບກັບບັນດາປະເທດທີ່ມີລາຍຮັບຕ່ຳໃນເຂດອາຊີປາຊີຟິກ. ສປປ ລາວ ຖືກຈັດໃນອັນດັບ 164 ຈາກທັງໝົດ 178 ປະເທດ ໃນດ້ານຄວາມສະດວກສຳລັບການດຳເນີນທຸລະກິດ ແລະ ອັນດັບ 158 ໃນດ້ານການຄ້າລະຫວ່າງປະເທດ (Doing Business 2008). ເຫດຜົນຕົ້ນຕໍອາດຍ້ອນເວລາທີ່ໃຊ້ໃນການປະກອບເອກະສານ ແລະ ຂໍອານຸຍາດນຳເຂົ້າ ແລະ ສົ່ງອອກແມ່ນຍາວເກີນໄປ. ນອກນັ້ນ ສ່ວນໜຶ່ງທີ່ສຳຄັນຂອງເສດຖະກິດແມ່ນປະກອບຈາກເສດຖະກິດນອກລະບົບ ຊຶ່ງດຳເນີນກິດຈະກຳການຄ້າຊາຍແດນທີ່ບໍ່ມີການບັນທຶກຈົດກ່າຍ.

**ຮູບ 12. ຕົວວັດແທກດ້ານການບໍລິການໂຄງລ່າງ (LPI) ຂອງບາງປະເທດໃນອາຊີ (ຄະແນນ LPI: 1 (ຕ່ຳສຸດ) ແລະ 5 (ສູງສຸດ)**




*ແຫລ່ງ:* ຕົວວັດແທກດ້ານການບໍລິການໂຄງລ່າງໃນໂລກ ໂດຍທະນາຄານໂລກ, 2007

ການບໍລິການດ້ານໂຄງລ່າງໃນ ສປປ ລາວ ໄດ້ຮັບການປັບປຸງດີຂຶ້ນ ແຕ່ວ່າຍັງຕາມຫລັງປະເທດອ້ອມຂ້າງ ເຊັ່ນ: ຫວຽດນາມ ແລະ ກຳປູເຈຍ.

---

[4] ແຜນກິດຈະກຳບູລິມະສິດດ້ານການຄ້າ (action matrix) ໄດ້ສ້າງຂຶ້ນໂດຍອີງໃສ່ຂໍ້ສະເໜີແນະຈາກການສຶກສາການເຊື່ອມຍົງດ້ານການຄ້າ (DTIS) ແລະ ຖືກຈັດຕັ້ງປະຕິບັດພາຍໃຕ້ກອບ IF (Integrated Framework).

[5] ຕົວວັດແທກ LPI ແມ່ນການປະເມີນການບໍລິການດ້ານໂຄງລ່າງຄັ້ງທຳອິດສຳລັບ 150 ປະເທດ ອີງໃສ່ການສຳຫລວດລະດັບໂລກໂດຍນັກຊ່ຽວຊານດ້ານໂຄງລ່າງ 800 ຄົນ. ການສຳຫລວດປະກອບມີ 7 ຂົງເຂດ: ປະສິດທິຜົນ ແລະ ປະສິດທິພາບດ້ານພາສີ ແລະ ລະບຽບການອື່ນໆທີ່ດ່ານຊາຍແດນ, ຕົ້ນທຶນດ້ານໂຄງລ່າງ (ລວມທັງຄ່າຂົນສົ່ງ), ຄຸນນະພາບຂອງລະບົບໂຄງລ່າງ, ຄວາມສາມາດໃນການຕິດຕາມກວດສອບການຂົນສົ່ງສິນຄ້າ, ການທັນກຳນົດເວລາໃນການຈັດສົ່ງໄປຍັງຈຸດໝາຍ ແລະ ຄວາມພ້ອມຂອງອຸດສາຫະກຳການບໍລິການດ້ານໂຄງລ່າງພາຍໃນປະເທດ.

**ວຽກງານການຫັນພາສີໄປສູ່ຄວາມທັນສະໃໝ ແລະ ການປັບປຸງສິ່ງອຳນວຍດ້ານການຄ້າຂອງລັດຖະບານອາດຈະຊ່ວຍຍົກລະດັບຄຸນນະພາບການບໍລິການດ້ານໂຄງລ່າງ.** ແຕ່ວ່າອີງໃສ່ປະສົບການສາກົນແລ້ວ ລັດຖະບານຄວນເບິ່ງບັນຫາໃຫ້ກ້ວາງ ແລະ ນອກເໜືອຈາກການປັບປຸງ "ສິ່ງອຳນວຍດ້ານການຄ້າ" ຊຶ່ງເໜັ້ນແຕ່ບັນຫາດ້ານໂຄງລ່າງທາງບົກ ແລະ ເຕັກໂນໂລຊີດ້ານຂໍ້ມູນ (IT) ໃນຂະແໜງພາສີ. ຕະຫຼາດການບໍລິການດ້ານໂຄງລ່າງຄວນຈະຕ້ອງມີການປະຕິຮູບເພື່ອຫລຸດຜ່ອນຄວາມລົ້ມເຫລວໃນການປະສານງານໂດຍສະເພາະແມ່ນບັນດາອົງການລັດທີ່ເຮັດວຽກງານກວດກາທີ່ດ່ານຕ່າງໆ. ວຽກງານນີ້ຮຽກຮ້ອງໃຫ້ມີກົນໄກທີ່ມີການເຊື່ອຍົງ ແລະ ຄົບຊຸດໃນການປະຕິຮູບຂັ້ນຕອນຕ່າງໆໃນໂຕ່ງໂສ້ການສະໜອງ.

## *ການພັດທະນາດ້ານການຄ້າ*

**ພາຍຫລັງທີ່ເພີ່ມຂຶ້ນໃນລະດັບທີ່ສູງເກືອບ 50 ສ່ວນຮ້ອຍ ໃນປີ 2006, ການສົ່ງອອກຂອງລາວຄາດວ່າຈະເຕີບໂຕໃນອັດຕາທີ່ຕໍ່າ ປະມານ** 5 ສ່ວນຮ້ອຍ ໃນປີ 2007 (ປະມານ 1 ຕື້ໂດລາປາຍ, ຮູບ 13). ຄຽງຄູ່ກັບຂະແໜງບໍ່ແຮ່ (ໂດຍສະເພາະແມ່ນທອງແດງຊຶ່ງເພີ່ມຂຶ້ນປະມານ 9 ສ່ວນຮ້ອຍໃນປີຜ່ານມາ), ການເຕີບໂຕດ້ານການສົ່ງອອກຕົ້ນຕໍແມ່ນມາຈາກກະສິກຳ (ກາເຟ, ເຂົ້າ ແລະ ສາລີ) ແລະ ອຸດສາຫະກຳຕັດຫຍິບ ຊຶ່ງທັງສອງຂະແໜງເພີ່ມຂຶ້ນຫຼາຍກ່ວາ 20 ສ່ວນຮ້ອຍ. ການສົ່ງອອກດ້ານໄຟຟ້າ ແລະ ຜະລິດຕະພັນໄມ້ໄດ້ຫລຸດລົງເລັກໜ້ອຍ (ຮູບ 14) ແລະ ການສົ່ງອອກຄໍາໄດ້ຫລຸດລົງຫຼາຍກ່ວາ 20 ສ່ວນຮ້ອຍ ຍ້ອນການຜະລິດທີ່ຫລຸດລົງໃນປີ 2007.

**ຮູບ 13. ການສົ່ງອອກ ແລະ ນຳເຂົ້າຂອງ ສປປ ລາວ** (2004-2007, ລ້ານ ໂດລາ US$)




*ແຫລ່ງ:* ຂໍ້ມູນຈາກລັດຖະບານລາວ ແລະ ປະເທດຄູ່ຄ້າຕ່າງໆ. ການຄາດຄະເນ ແລະ ພະຍາກອນຫລ້າສຸດຂອງທະນາຄານໂລກ (2007)

**ໃນປີ 2007 ການນຳເຂົ້າຂອງລາວຄາດວ່າຈະເພີ່ມຂຶ້ນຫຼາຍສົມຄວນແລະເກີນ 30 ສ່ວນຮ້ອຍ ເມື່ອທຽບກັບປີ 2006 (ຫລືປະມານ 1,9 ຕື້ ໂດລາ US$).** ການເພີ່ມຂຶ້ນຕົ້ນຕໍແມ່ນມາຈາກການນຳເຂົ້າສຳລັບໂຄງການລົງທຶນຂະໜາດໃຫຍ່ໃນຂະແໜງຊັບພະຍາກອນ (ບໍ່ແຮ່ ແລະ ໄຟຟ້າ ກວມປະມານ 45 ສ່ວນຮ້ອຍ ຂອງມູນຄ່ານຳເຂົ້າທັງໝົດ), ກະສິກຳ (ໂຄງການປູກຝັງ ແລະ ຕົ້ນໄມ້ຕ່າງໆ), ອຸດສາຫະກຳປຸງແຕ່ງ, ການຄ້າ ແລະ ບໍລິການຕ່າງໆ. ການນຳເຂົ້າສິນຄ້າລົງທຶນໄດ້ເພີ່ມຂຶ້ນເກືອບປະມານ 50 ສ່ວນຮ້ອຍ ແລະ ກວມປະມານ 70 ສ່ວນຮ້ອຍຂອງການນຳເຂົ້າໃນປີຜ່ານມາ (ຮູບ 15). ການນຳເຂົ້າວັດຖຸດິບເພີ່ມຂຶ້ນປະມານ 30 ສ່ວນຮ້ອຍ ແລະ ສິນຄ້າໃຊ້ສອຍເພີ່ມຂຶ້ນເລັກໜ້ອຍ.

**ຮູບ 14. ສິນຄ້າສົ່ງອອກຕົ້ນຕໍ** (ລ້ານ ໂດລາ US$)




*ແຫລ່ງ:* ຂໍ້ມູນຈາກລັດຖະບານລາວ ແລະ ປະເທດຄູ່ຄ້າຕ່າງໆ. ການຄາດຄະເນ ແລະ ພະຍາກອນຫລ້າສຸດຂອງທະນາຄານໂລກ (2007)

**ຮູບ 15. ສິນຄ້ານຳເຂົ້າຕົ້ນຕໍ** (% ຂອງມູນຄ່າລວມ)




*ແຫລ່ງ:* ຂໍ້ມູນຈາກລັດຖະບານລາວ ແລະ ປະເທດຄູ່ຄ້າຕ່າງໆ. ການຄາດຄະເນ ແລະ ພະຍາກອນຫລ້າສຸດຂອງທະນາຄານໂລກ (2007)

**ປະເທດຄູ່ຄ້າຂອງ ສປປ ລາວ ໂດຍລວມແມ່ນບໍ່ປ່ຽນແປງໃນປີ 2007.** ຕະຫຼາດສົ່ງອອກຕົ້ນຕໍແມ່ນປະກອບດ້ວຍປະເທດໄທ, ຫວຽດນາມ, ມະເລເຊຍ, ຈີນ, ອີດສະຕາລີ ແລະ ປະຊາຄົມເອີລົບ ຫລື EU (ຮູບ 16). ການສົ່ງອອກຂອງລາວໄປໄທໄດ້ຫລຸດລົງຈາກ 50 ສ່ວນຮ້ອຍ ໃນສົກປີ 2006 ເປັນ 30 ສ່ວນຮ້ອຍໃນປີ 2007. ການສົ່ງອອກໄປຈີນ ແລະ ຫວຽດນາມໄດ້ເພີ່ມໄວວາ (ຈາກ 11% ຫາ 16% ໄປຫວຽດນາມ ແລະ ຈາກ 5% ຫາ 11% ໄປຈີນ). ໃນໄລຍະຫລັງ ການສົ່ງອອກຂອງລາວໄປຍັງສະຫາລັດໄດ້ເພີ່ມຂຶ້ນ ແຕ່ມູນຄ່າໂດຍລວມແມ່ນຍັງຕໍ່າ (ກວມພຽງ 1% ຂອງມູນຄ່າສົ່ງອອກທັງໝົດ). ການນໍາເຂົ້າສ່ວນໃຫຍ່ແມ່ນຍັງມາຈາກປະເທດອາຊຽນ (68% ຈາກໄທ ແລະ 13% ຈາກຫວຽດນາມ), ຈີນ (7%), EU (3%) ແລະ ປະເທດອື່ນໆ (9%), ຮູບ 17.

ຮູບ 16. ການສົ່ງອອກໂດຍແຍກເປັນປະເທດ, ສົກປີ 2007 (ລ້ານໂດລາ)




ຮູບ 17. ການນໍາເຂົ້າໂດຍແຍກເປັນປະເທດ, ສົກປີ 2007 (ລ້ານໂດລາ)




*ແຫລ່ງ:* ລັດຖະບານລາວ (MOIC) ແລະ ການຄິດໄລ່ຂອງທະນາຄານໂລກ

**ຜູ້ສົ່ງອອກຂອງລາວໂດຍລວມແມ່ນດໍາເນີນການສົ່ງອອກໄດ້ດີໃນຊຸມປີຜ່ານມາ.** ຫຼາຍຂະແໜງການໄດ້ຂະຫຍາຍການສົ່ງອອກໄປຍັງພາກພື້ນ ແລະ ຂົງເຂດອື່ນໆ. ນອກຈາກບໍ່ແຮ່ ແລະ ໄຟຟ້າ, ການສົ່ງອອກຂອງຂະແໜງສໍາຄັນອື່ນໆ ເຊັ່ນ: ກະສິກໍາ, ອຸດສາຫະກໍາປຸງແຕ່ງ ແລະ ການບໍລິການ ໄດ້ເພີ່ມຂຶ້ນໃນສອງປີທີ່ຜ່ານມາ. ຂໍ້ມູນລວມກ່ຽວກັບຂະແໜງສົ່ງອອກຕົ້ນຕໍແມ່ນຢູ່ໃນເອກະສານຊ້ອນທ້າຍ **ANNEX 1**.

## 2.5 ການພັດທະນາພາກເອກະຊົນ

ລັດຖະທໍາມະນູນປີ 1991 ຂອງ ສປປ ລາວ ໄດ້ປົກປ້ອງກໍາມະສິດຂອງລັດ, ລວມໝູ່ ແລະ ເອກະຊົນ. ໂຄງການສ້າງລະບົບນິຕິກໍາທີ່ຈິງຈັງໃນຊ່ວງຊຸມປີ 1990 ໄດ້ວາງພື້ນຖານສໍາລັບການພັດທະນາລະບຽບກົດໝາຍ ແລະ ອົງກອນທີ່ອີງໃສ່ຕະຫຼາດ ເພື່ອສະໜັບສະໜູນການພັດທະນາພາກເອກະຊົນ. ປະຈຸບັນການຜະລິດກະສິກໍາ ແລະ ອຸດສາຫະກໍາສ່ວນໃຫຍ່ແມ່ນດໍາເນີນພາກເອກະຊົນ ແລະ ພາກລັດວິສາຫະກິດກວມພຽງ 1% ຂອງການຈ້າງງານ. ປະມານ 97% ຂອງຫົວໜ່ວຍທຸລະກິດພາກອຸດສາຫະກໍາແມ່ນເປັນຂະໜາດນ້ອຍ (ມີຄົນງານຕໍ່າກ່ວາ 10 ຄົນ). ໃນຈໍານວນວິສາຫະກິດຂະໜາດກາງ ແລະ ໃຫຍ່, ປະມານ 35% ແມ່ນເປັນກໍາມະສິດຂອງເອກະຊົນພາຍໃນ ແລະ 55% ແມ່ນເປັນວິສາຫະກິດຫຸ້ນສ່ວນກັບຕ່າງປະເທດ; ສ່ວນທີ່ເຫລືອແມ່ນເປັນກໍາມະສິດຂອງລັດ.

ການລົງທຶນຂອງຕ່າງປະເທດໄດ້ເພີ່ມຂຶ້ນຢ່າງວ່ອງໄວທັງໃນຂະແໜງຊັບພະຍາກອນ ແລະ ຂະແໜງອື່ນໆ (ໄຟຟ້າ, ບໍ່ແຮ່, ກະສິກໍາ, ອຸດສາຫະກໍາປຸງແຕ່ງ ແລະ ການທ່ອງທ່ຽວ). ໃນລະຫວ່າງສົກປີ 2003 ຫາ 2005, ການອານຸມັດການລົງທຶນຂອງຕ່າງປະເທດໄດ້ເພີ່ມຂຶ້ນຈາກ 470 ລ້ານ ໂດລາ ເປັນ 2,7 ຕື້ ໂດລາ. ການລົງທຶນຕົວຈິງຄາດວ່າເພີ່ມຂຶ້ນຈາກ 70 ລ້ານ ເປັນ 500 ລ້ານ ໃນເວລາດຽວກັນ. ຜູ້ລົງທຶນສ່ວນໃຫຍ່ແມ່ນມາຈາກປະເທດ ໄທ, ຈີນ, ອິດສະຕາລີ, ມະເລເຊຍ, ສິງກະໂປ, ຫວຽດນາມ, ເກົາຫລີໃຕ້, ໄຕ້ຫວັນ, ຝະລັ່ງ, ຮອນແລນ ແລະ ສະຫາລັດອາເມລິກາ. ແຜນພັດທະນາເສດຖະກິດ-ສັງຄົມ (2006-2010) ໄດ້ຮັບຮູ້ເຖິງຄວາມຈໍາເປັນໃນການປັບປຸງສະພາບແວດລ້ອມດ້ານການລົງທຶນ ແລະ ສົ່ງເສີມການລົງທຶນຂອງພາກເອກະຊົນທັງພາຍໃນແລະຕ່າງປະເທດເພື່ອຊຸກຍູ້ການເຕີບໂຕທາງເສດຖະກິດ, ຫລຸດຜ່ອນຄວາມທຸກຍາກ ແລະ ບັນລຸເປົ້າສະຫະສະວັດ (MDGs).

**ກົດໝາຍລົງທຶນສະບັບລວມກໍາລັງໄດ້ຮັບການພັດທະນາເພື່ອເພີ່ມປະສິດທິພາບໃນການດຶງດູດການລົງທຶນ.** ໂດຍການຊ່ວຍເຫລືອຈາກ IFC-MPDF ແລະ FIAS (WBG), ກົດໝາຍດັ່ງກ່າວຄາດວ່າຈະລວບລວມເອົາປະສົບການທີ່ດີຂອງສາກົນເພື່ອປັບປຸງດ້ານຄວາມໂປ່ງໃສ, ຄວາມອາດສາມາດໃນການຄາດຄະເນ, ຄວາມແນ່ນອນສໍາລັບຜູ້ລົງທຶນ; ຈໍາແນກ ການກໍ່ຕັ້ງ ແລະ ການເຄື່ອນໄຫວທຸລະກິດຂອງຜູ້ລົງທຶນຕ່າງປະເທດ, ສ້າງຄວາມກະທັດຫັດດ້ານລະບຽບການກໍ່ຕັ້ງທຸລະກິດ ແລະ ໃຫ້ການຄໍ້າປະກັນແກ່ຜູ້ລົງທຶນ. ກົດໝາຍລົງທຶນສະບັບໃໝ່ຄາດວ່າຈະໄດ້ຮັບການພິຈາລະນາໂດຍສະພາແຫ່ງຊາດໃນທ້າຍປີ 2008.

**ການຮັບຮອງເອົາບັນຊີຄຸ້ມຄອງປະເພດທຸລະກິດພາຍໃຕ້ກົດໝາຍວິສາຫະກິດ (Negative List) ໃນທ້າຍປີ 2007 ແມ່ນບາດກ້າວໜຶ່ງທີ່ສໍາຄັນໃນການປັບປຸງລະບຽບການກໍ່ຕັ້ງທຸລະກິດໃຫ້ງ່າຍດາຍ.** ຄາດວ່າລັດຖະບານຈະປະກາດບັນຊີດັ່ງກ່າວເປັນທາງການໃນຊຸມເດືອນຕໍ່ໜ້າ. ຫ້ອງການຈົດທະບຽນວິສາຫະກິດໄດ້ຮັບການສ້າງຕັ້ງຂຶ້ນເພື່ອຈັດຕັ້ງປະຕິບັດລະບຽບການຈົດທະບຽນໃໝ່ດັ່ງກ່າວ. ໂດຍການຊ່ວຍເຫລືອຈາກຜູ້ໃຫ້ທຶນ ກະຊວງອຸດສາຫະກໍາ ແລະ ການຄ້າ ມີແຜນທີ່ຈະນໍາໃຊ້ລະບົບການຈົດທະບຽນໃໝ່ພາຍໃນສອງປີຂ້າງໜ້າ ແລະ ສ້າງຖານການຈົດທະບຽນທົ່ວປະເທດ ຊຶ່ງຈະໃຫ້ຂໍ້ມູນກ່ຽວກັບວິສາຫະກິດທັງໝົດທີ່ໄດ້ຖືກຈົດທະບຽນ.

**ແຜນຍຸດທະສາດການພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ (SME) ແລະ ກົດໝາຍທ່ອງທ່ຽວ ກຳລັງໄດ້ຮັບການຈັດຕັ້ງປະຕິບັດ.** ຄຽງຄູ່ກັບການກະກຽມຍຸດທະສາດ ການພັດທະນາ SME, ຫ້ອງການ SMEPDO ມີບົດບາດສຳຄັນໃນການລະດົມການຊ່ວຍເຫລືອຈາກຜູ້ໃຫ້ທຶນເພື່ອສະໜັບສະໜູນການຈັດຕັ້ງປະຕິບັດຍຸດທະສາດດັ່ງກ່າວ, ໃນນັ້ນລວມມີ: ADB, EC, GTZ, IFCMPDF, ILO ແລະ ອິນເດຍ. ດຳລັດການຈັດຕັ້ງປະຕິບັດກົດໝາຍທ່ອງທ່ຽວຄາດວ່າຈະໄດ້ຖືກນຳສະເໜີເພື່ອຮັບຮອງໃນເດືອນມີນາ 2008 ແລະ ໄດ້ລະບຸກ່ຽວກັບພາລະບົດບາດ ແລະ ຄວາມຮັບຜິດຊອບຂອງອົງການທ່ອງທ່ຽວແຫ່ງຊາດ, ໂຄງສ້າງອົງກອນ ແລະ ງົບທຶນ, ຄຸນນະພາບ, ມາດຖານ ແລະ ລະບຽບການອອກອານຸຍາດແກ່ຜູ້ໃຫ້ບໍລິການ.

**ຮ່າງກົດໝາຍບໍ່ແຮ່ກຳລັງໄດ້ການພັດທະນາເພື່ອປັບປຸງສະພາບແວດລ້ອມດ້ານການຄຸ້ມຄອງ** ແລະ ຄາດວ່າຈະນຳສະເໜີໄປຍັງສະພາແຫ່ງຊາດເພື່ອພິຈາລະນາຮັບຮອງໃນທ້າຍປີ 2008. ການຮ່າງກົດໝາຍດັ່ງກ່າວໄດ້ຮັບການສະໜັບສະໜູນຈາກກຸ່ມທະນາຄານໂລກ (WB,IFC-MPDF) ແລະ ມີການປຶກສາຫາລືກັບພາກສ່ວນກ່ຽວຂ້ອງຢ່າງຈິງຈັງ. ບັນຫາຕົ້ນຕໍທີ່ຈະໄດ້ແກ້ໄຂລວມມີ: ການຂາດຄວາມໂປ່ງໃສ ແລະ ຄວາມສາມາດຄາດຄະເນໄດ້ກ່ຽວກັບການອອກອານຸຍາດການສຳຫລວດ ແລະ ຂຸດຄົ້ນ ແກ່ຜູ້ລົງທຶນ, ລະບຽບກົດໝາຍທີ່ບໍ່ຈະແຈ້ງກ່ຽວກັບການໂອນສິດການດຳເນີນກິດຈະການບໍ່ແຮ່ ແລະ ລະບອບການເກັບອາກອນທີ່ບໍ່ແນ່.

**ການປຶກສາສົນທະນາລະຫວ່າງລັດຖະບານກັບພາກເອກະຊົນໄດ້ສືບຕໍ່.** ກອງປະຊຸມພົບປະນັກທຸລະກິດລາວຄັ້ງທີສາມໄດ້ຈັດຂຶ້ນໃນວັນທີ 5 ພະຈິກ 2007 ແລະມີຜູ້ເຂົ້າຮ່ວມຫຼາຍກ່ວາ 300 ຄົນຈາກພາກເອກະຊົນ, ລັດຖະບານ ແລະ ອົງການຜູ້ໃຫ້ທຶນ. ບັນຫາຕ່າງໆທີ່ໄດ້ນຳມາປຶກສາຫາລືລວມມີ: ຮ່າງກົດໝາຍທ່ອງທ່ຽວ ແລະ ບໍ່ແຮ່, ການສ້າງຄວາມເອກະພາບດ້ານຄ່າວິຊາກັບດ່ານ, ການເພີ່ມການຫັກຄ່າສິ້ນເປືອງທຸລະກິດອີງໃສ່ກົດໝາຍອາກອນ ແລະ ການຈັດຕັ້ງປະຕິບັດການປະກັນໄພບຸກຄົນທີສາມ. ກອງປະຊຸມຄັ້ງຕໍ່ໄປແມ່ນຈະຈັດຂຶ້ນໃນວັນທີ 26 ມິຖຸນາ 2008. ການພົບປະສົນທະນາລະຫວ່າງພາກລັດ ແລະ ພາກເອກະຊົນກໍໄດ້ດຳເນີນເປັນປະຈຳທີ່ແຂວງຈຳປາສັກ, ສະຫວັນນະເຂດ, ຫຼວງພະບາງ ແລະ ຫຼວງນ້ຳທາ ເພື່ອປຶກສາກ່ຽວກັບບັນຫາຕ່າງໆທີ່ມີຜົນກະທົບຕໍ່ທຸລະກິດພາຍໃນ.



## *ການລົງທຶນໂດຍກົງຂອງຕ່າງປະເທດ (FDI)*

**ການລົງທຶນຕ່າງປະເທດໃນ ສປປ ລາວ ຄາດວ່າໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍໃນປີ 2007.** ເຖິງວ່າມູນຄ່າການອະນຸມັດການລົງທຶນຈະຫລຸດລົງ (ເຖິງ 1,2 ຕື້ໂດລາ ໃນປີ 2007 ຈາກ ປະມານ 2,7 ຕື້ໂດລາ ໃນປີ 2006), ການລົງທຶນຕົວຈິງຄາດວ່າໄດ້ເພີ່ມຂຶ້ນຍ້ອນໂຄງການໃໝ່ ແລະ ໂຄງການໃຫຍ່ຕ່າງໆທີ່ກຳລັງດຳເນີນໃນຂະແໜງຊັບພະຍາກອນ ແລະ ຂະແໜງອື່ນໆ. ການລົງທຶນຕົວຈິງໃນປີ 2007 ຄາດວ່າມີມູນຄ່າເກືອບ 950 ລ້ານໂດລາ ຊຶ່ງເພີ່ມຂຶ້ນປະມານ 60 ສ່ວນຮ້ອຍ ເມື່ອທຽບກັບປີ 2006 (ຮູບ 18). ການເຕີບໂຕຕົ້ນຕໍແມ່ນມາຈາກໂຄງການລົງທຶນໃຫຍ່ໃນຂະແໜງບໍ່ແຮ່ (ໂຮງງານຜະລິດທອງໂດຍ ພູເບັຍ ມາຍນິງ), ຂະແໜງອຸດສາຫະກຳ (ອຸດສາຫະກຳ ອາຫານ ແລະ ເຄື່ອງດື່ມ, ປຸງແຕ່ງກະສິກຳ ແລະ ອຸດສາຫະກຳການຜະລິດ), ກະສິກຳ, ການບໍລິການ ແລະ ການສືບຕໍ່ກໍ່ສ້າງໂຄງການໄຟຟ້າສາມແຫ່ງ (ນ້ຳເທີນ2, ນ້ຳງື່ມ 2 ແລະ ເຊຄະມານ 3) - ຮູບ 19.

**ຮູບ 18. ການລົງທຶນໂດຍກົງຂອງຕ່າງປະເທດໃນ ສປປ ລາວ (ລ້ານໂດລາ)**




*ແຫລ່ງ:* ທະນາຄານໂລກ. ການຄາດຄະເນເບື້ອງຕົ້ນສຳລັບປີ 2007

**ຮູບ 19. ການລົງທຶນ FDI ໂດຍແຍກເປັນຂະແໜງການ (ລ້ານໂດລາ)**




*ແຫລ່ງ:* ທະນາຄານໂລກ. ການຄາດຄະເນເບື້ອງຕົ້ນສຳລັບປີ 2007

**ໃນປີ 2007 ລັດຖະບານລາວໄດ້ອະນຸມັດໂຄງການໃຫຍ່ຈຳນວນໜຶ່ງ** ຊຶ່ງມີມູນຄ່າຫຼາຍກ່ວາ 1 ຕື້ໂດລາ ໃນຂະແໜງການຕ່າງໆ ເຊັ່ນ: ກະສິກຳ (ການປູກພືດ ແລະ ຕົ້ນໄມ້ອຸດສາຫະກຳ), ການຄ້າ ແລະ ການບໍລິການ (ຮ້ານສັບພະສິນຄ້າ, ການບັນເທີງ, ທ່ອງທ່ຽວ ແລະ ການບໍລິການດ້ານທະນາຄານ) ແລະ ອຸດສາຫະກຳ (ໂຄງການໄຟຟ້າ ແລະ ບໍ່ແຮ່). ໂຄງສ້າງການລົງທຶນຂອງ ສປປ ລາວ ໄດ້ສືບຕໍ່ເພີ່ມຄວາມຫຼາກຫຼາຍ ເຖິງວ່າບັນດາໂຄງການໃຫຍ່ຍັງກວມມູນຄ່າສ່ວນໃຫຍ່ຂອງຍອດການລົງທຶນ. ຂໍ້ມູນໂຄງການຈຳນວນໜຶ່ງທີ່ກຳລັງດຳເນີນແມ່ນໄດ້ຖືກລະບຸໃນເອກະສານຊ້ອນທ້າຍ **ANNEX 3**.

## *ບັນດາວິສາຫະກິດປະສົມລັດ-ເອກະຊົນ ທີ່ປະສົບຜົນສຳເລັດ*

**ວິສາຫະກິດປະສົມລັດ-ເອກະຊົນໃນ ສປປ ລາວ ໄດ້ມີການຂະຫຍາຍຕົວໃນຊຸມປີຜ່ານມາ.** ວິສາຫະກິດປະສົມຈຳນວນໜຶ່ງທີ່ໃຫຍ່ປະກອບດ້ວຍ ບ/ສ ເບຍລາວ (ລັດຖືຫຸ້ນ 50% ແລະ ຕ່າງປະເທດ 50%), ບ/ສ ເບຍ ລາວອາຊີປາຊີຟິກ (ຕ່າງປະເທດ 68%, ລັດ 25%, ເອກະຊົນພາຍໃນ 7%), ບ/ສ ນ້ຳຫວານລາວ (ລັດ 70%, ຕ່າງປະເທດ 30%), ບ/ສ ຢາສູບລາວ (ລັດ 53%, ຕ່າງປະເທດ 47%), ບ/ສ ລາວໂທລະຄົມ (LTE, ລັດ 49% ແລະ ຕ່າງປະເທດ 51%), ບ/ສ ປະກັນໄພລາວ (ລັດ 51% ແລະ ຕ່າງປະເທດ 49%) ແລະ ວິສາຫະກິດອື່ນໆດ້ານໂຮງແຮມ ແລະ ການທ່ອງທ່ຽວ.

ວິສາຫະກິດປະສົມລັດ-ເອກະຊົນແມ່ນຮູບແບບໜຶ່ງທີ່ມີປະສິດທິພາບສຳລັບການຮ່ວມມືລົງທຶນດ້ານທຸລະກິດ ແລະ ການປະເມີນຜົນການດຳເນີນທຸລະກິດຂອງພາກລັດວິສາຫະກິດທີ່ຜ່ານມາໂດຍຫ້ອງການ BPO ໄດ້ຊີ້ໃຫ້ເຫັນວ່າ:

- ໂດຍສະເລ່ຍ ວິສາຫະກິດປະສົມແມ່ນມີກຳໄລຫຼາຍກ່ວາລັດວິສາຫະກິດ 100% ປະມານ 10 ເທົ່າ;
- ຜົນຕອບແທນຈາກການລົງທຶນຂອງວິສາຫະກິດປະສົມແມ່ນສູງກວ່າລັດວິສາຫະກິດ 100% ປະມານ 25 ເທົ່າ;
- ສ່ວນຜົນຕອບແທນຈາກທຶນຫຸ້ນແມ່ນສູງກ່ວາ 11 ເທົ່າ ຊຶ່ງສະແດງໃຫ້ເຫັນວ່າວິສາຫະກິດປະສົມແມ່ນມີປະສິດທິຜົນສູງກ່ວາໃນການນຳໃຊ້ຊັບສິນທຶນຮອນ;
- ເມື່ອທຽບກັບລັດວິສາຫະກິດ 100% ວິສາຫະກິດປະສົມໂດຍສະເລ່ຍແມ່ນສ້າງລາຍຮັບໃຫ້ລັດໄດ້ຫລາຍກ່ວາໃນຮູບແບບຂອງການແບ່ງຜົນກຳໄລ ແລະ ການເສຍອາກອນ;
- ອີງໃສ່ການປະເມີນຜົນຂອງຫ້ອງການ BPO ກ່ຽວກັບການເຄື່ອນໄຫວທຸລະກິດຂອງລັດວິສາຫະກິດສຳລັບປີ 2002-2006, ໃນທຸກໆຫົວໜ່ວຍທີ່ລົງທຶນເຂົ້າໃນວິສາຫະກິດປະສົມຈະສ້າງລາຍຮັບໃຫ້ລັດປະມານ 0.53 ຫົວໜ່ວຍ.
- ໃນຂະນະທີ່ລັດວິສາຫະກິດ (100%) ສ້າງໄດ້ພຽງແຕ່ 0.05 ຫົວໜ່ວຍຈາກການລົງທຶນຂອງ 1 ຫົວໜ່ວຍ.

ຕາຕະລາງ 10. ຕົວເລກອັດຕາສ່ວນດ້ານການເງິນຂອງ 15 ວິສາຫະກິດປະສົມທີ່ໃຫຍ່ກ່ວາໝູ່ (2002-06)

| | 2002 | 2003 | 2004 | 2005 | 2006 |
|---|---|---|---|---|---|
| ອັດຕາກຳໄລ (%) | 37.6 | 32.1 | 35.0 | 30.1 | 29.0 |
| ຜົນຕອບແທນດ້ານຊັບສິນ (%) | 39.0 | 33.5 | 38.3 | 35.1 | 40.2 |
| ຜົນຕອບແທນດ້ານທຶນຫຸ້ນ (%) | 68.7 | 65.3 | 83.6 | 83.0 | 111.5 |
| ການໝູນຂອງຊັບສິນ | 1.0 | 1.1 | 1.1 | 1.2 | 1.4 |

*ແຫລ່ງ:* ການຄິດໄລ່ຂອງທະນາຄານໂລກອີງໃສ່ບົດລາຍງານການປະເມີນຜົນຂອງຫ້ອງການ BPO (2002-2006)

## *ການລົງທຶນຂອງເອກະຊົນພາຍໃນ*

ພາກເອກະຊົນພາຍໃນຕົ້ນຕໍແມ່ນປະກອບດ້ວຍວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ທຸລະກິດຄອບຄົວທີ່ບໍ່ໄດ້ຈົດທະບຽນ. ໂດຍລວມ ການລົງທຶນພາຍໃນຄາດວ່າໄດ້ເພີ່ມຂຶ້ນເນື່ອງຈາກຈຳນວນຫົວໜ່ວຍທຸລະກິດໄດ້ເພີ່ມຂຶ້ນໄວວາໃນຊຸມປີຜ່ານມາ. ອີງໃສ່ການສຳຫລວດຂອງລັດຖະບານ (ສູນສະຖິຕິແຫ່ງຊາດ) ໃນປີ 2006-2007 ທຸລະກິດພາຍໃນທັງໝົດມີປະມານ 126.900 ຫົວໜ່ວຍໃນ ສປປ ລາວ. ໃນນັ້ນ:

- ເກືອບ 99 ສ່ວນຮ້ອຍແມ່ນແມ່ນທຸລະກິດດ່ຽວທີ່ເຄື່ອນໄຫວໃນພື້ນທີ່ອັນດຽວ ແລະ ບໍ່ມີການຄ້າກັບສາກົນ ຫລື ການສົ່ງອອກ.
- ທຸລະກິດສ່ວນໃຫຍ່ແມ່ນມີຂະໜາດນ້ອຍ, ເປັນທຸລະກິດຄົວເຮືອນ ຫລື ຄອບຄົວທີ່ຂາຍຜະລິດຕະພັນ ແລະ ການບໍລິການພາຍໃນຕະຫລາດທ້ອງຖິ່ນ.
- ປະມານ 65 ສ່ວນຮ້ອຍ ແມ່ນດຳເນີນທຸລະກິດການຄ້າ, 19 ສ່ວນຮ້ອຍແມ່ນອຸດສາຫະກຳ ແລະ 3 ສ່ວນຮ້ອຍ ແມ່ນກະສິກຳ.
- ປະມານ 97 ສ່ວນຮ້ອຍຂອງທຸລະກິດແມ່ນເປັນກຳມະສິດຂອງຄົນທ້ອງຖິ່ນ ແລະ ມີພຽງ 40 ສ່ວນຮ້ອຍໄດ້ຮັບການຈົດທະບຽນ.
- ມີພຽງ 1 ສ່ວນຮ້ອຍທີ່ມີລະບົບບັນຊີທີ່ໄດ້ມາດຖານຄົບຊຸດ, 20 ສ່ວນຮ້ອຍມີລະບົບບັນຊີພື້ນຖານ; ແລະ 75 ມີການບັນທຶກຈົດກ່າຍບັນຊີ.
- ຫລາຍກ່ວາ 50 ສ່ວນຮ້ອຍຂອງທຸລະກິດແມ່ນຕັ້ງຢູ່ໃນເຂດຕົວເມືອງໃຫຍ່.

*ແຫລ່ງ:* ການສຳຫລວດທຸລະກິດແຫ່ງຊາດ 2006-2007 ໂດຍສູນສະຖິຕິແຫ່ງຊາດ.

# 3 ການຊ່ວຍເຫລືອຂອງຜູ້ໃຫ້ທຶນໃນຂົງເຂດວຽກງານການປະຕິຮູບ

ສປປ ລາວ ແມ່ນຍັງເພິ່ງພາອາໃສການຊ່ວຍເຫລືອຂອງຕ່າງປະເທດ ໃນນັ້ນລວມທັງການຊ່ວຍເຫຼືອດ້ານເຕັກນິກ. ໃນປີ 2005/06 ການຊ່ວຍເຫຼືອຂອງຜູ້ໃຫ້ທຶນກວມ 77 ສ່ວນຮ້ອຍຂອງການລົງທຶນຂອງລັດ (PIP) ແລະ ເງິນຊ່ວຍເຫຼືອຫລ້າກວມປະມານ 14 ສ່ວນຮ້ອຍຂອງລາຍຮັບລວມຂອງລັດ.

ພາກນີ້ຈະໄດ້ເວົ້າເຖິງການຊ່ວຍເຫຼືອດ້ານເຕັກນິກ ແລະ ດ້ານອື່ນໆຂອງຜູ້ໃຫ້ທຶນໃນຂົງເຂດວຽກງານການປະຕິຮູບຂອງລັດຖະບານ. ຂໍ້ມູນຕ່າງໆແມ່ນໄດ້ຮັບການສະໜອງຈາກບັນດາຜູ້ໃຫ້ທຶນ ແລະ ໄດ້ລຽບລຽງໂດຍວາລະສານ "Lao Economic Monitor" ສະບັບນີ້.

## 3.1 ການຊ່ວຍເຫລືອຂອງຜູ້ໃຫ້ທຶນໃນວຽກງານການປະຕິຮູບໃນ ສປປ ລາວ

**ການຄຸ້ມຄອງຂອງພາກລັດ.** ຂົງເຂດວຽກງານການຄຸ້ມຄອງຂອງລັດໄດ້ຮັບການຊ່ວຍຈາກຜູ້ໃຫ້ທຶນເປັນຈຳນວນຫຼວງຫຼາຍໂດຍມີຫຼາຍກ່ວາ 20 ໂຄງການທີ່ການຊ່ວຍເຫລືອຈາກຜູ້ໃຫ້ທຶນສອງຝ່າຍ ແລະ ຫຼາຍຝ່າຍ ໃນນັ້ນລວມມີ: ADB, ອົດສະຕາລີ, EC, ຝະລັ່ງ, ຍີ່ປຸ່ນ, ນິວຊີແລນ, ສິງກະໂປ, SNV, ຊູແອດ, UNDP, ແລະ ທະນາຄານໂລກ. ໂຄງການເຫລົ່ານີ້ກວມວຽກງານດ້ານຕ່າງໆຂອງການຄຸ້ມຄອງພາກລັດ ເຊັ່ນ: ການຄຸ້ມຄອງແລະປົກຄອງຂອງລັດ, ການສ້າງຂີດຄວາມສາມາດ, ການກະຈາຍອຳນາດ, ການຄຸ້ມຄອງການເງິນພາກລັດ, ແລະ ການປະຕິຮູບດ້ານນິຕິກຳ ແລະ ລະບົບຍຸດຕິທຳ. ໃນຊຸມປີຜ່ານມາໂດຍການຊ່ວຍເຫຼືອຂອງຜູ້ໃຫ້ທຶນ ລັດຖະບານໄດ້ມີຜົນຄືບໜ້າໃນດ້ານການຄຸ້ມຄອງພາກລັດ ແລະ ໄດ້ມີແຜນປະຕິຮູບທີ່ຈະແຈ້ງ. ໃນທ້າຍປີ 2006 ລັດຖະບານໄດ້ເຜີຍແຜ່ແຜນຍຸດທະສາດໃໝ່ດ້ານການຄຸ້ມຄອງພາກລັດຕໍ່ບັນດາຜູ້ໃຫ້ທຶນ. ແຜນດັ່ງກ່າວໄດ້ເນັ້ນການປັບປຸງການບໍລິການຂອງພາກລັດ, ເພີ່ມທະວີຄວາມ ໂປ່ງໃສ ແລະ ການມີສ່ວນຮ່ວມຂອງມະຫາຊົນໃນການວາງນະໂຍບາຍ, ຍົກສູງຄວາມສັກສິດຂອງລະບຽບກົດໝາຍ, ແລະ ປັບປຸງການຄຸ້ມຄອງການເງິນຂອງລັດ. ອົງການປົກຄອງ ແລະ ຄຸ້ມຄອງລັດຖະກອນ (PACSA) ໄດ້ອອກແບບໂຄງການໃໝ່ລະດັບຊາດ GPAR-SBSD ຊຶ່ງປະຈຸບັນແມ່ນກຳລັງສຶກສາກົນໄກໃນການ ປັບປຸງພາກລັດຖະກອນຂອງປະເທດ.



**ພາກທະນາຄານ ແລະ ລັດວິສາຫະກິດ.** ອົງການຜູ້ໃຫ້ທຶນຕົ້ນຕໍທີ່ໃຫ້ການສະໜັບສະໜູນການປະຕິຮູບພາກທະນາຄານປະກອບດ້ວຍ ADB, IMF ແລະ ກຸ່ມທະນາຄານໂລກ WBG (WB/IFC). ໄລຍະຜ່ານມາ ລັດຖະບານໄດ້ມີມາດຕະການສຳຄັນຈຳນວນໜຶ່ງໃນການປັບປຸງກອບລະບຽບກົດໝາຍສຳລັບພາກທະນາຄານ ແລະ ການເງິນຈຸລະພາກ. ແຕ່ວ່າຂະບວນການປັບໂຄງສ້າງທະນາຄານທຸລະກິດລັດແມ່ນຍັງຊັກຊ້າ. ໃນໄລຍະສັ້ນ ແລະ ກາງ ເຫັນວ່າມີຄວາມຈຳເປັນດ້ານການຊ່ວຍເຫລືອຈາກພາຍນອກເພື່ອສ້າງຄວາມເຂັ້ມແຂງດ້ານການຄຸ້ມຄອງ ແລະ ຊີ້ນຳກວດກາພາກທະນາຄານ, ສືບຕໍ່ການປັບໂຄງສ້າງທະນາຄານທຸລະກິດລັດ ແລະ ຍົກລະດັບໂຄງລ່າງດ້ານທະນາຄານ-ການເງິນ ຊຶ່ງລວມມີ: ການສ້າງສູນຂໍ້ມູນດ້ານສິນເຊື່ອ, ການຈົດທະບຽນຫຼັກຊັບ, ລະບົບການຊຳລະ ແລະ ອື່ນໆ. ການປະຕິຮູບລັດວິສາຫະກິດທີ່ບໍ່ແມ່ນທະນາຄານແມ່ນໄດ້ຮັບການຊ່ວຍເຫລືອຈາກທະນາຄານໂລກ (WB) ແລະ JBIC ເທົ່ານັ້ນ. ຜົນຄືບໜ້າທີ່ສຳຄັນໃນຂົງເຂດວຽກງານນີ້ບໍ່ສາມາດບັນລຸໄດ້ປາສະຈາກການຮັບຮອງເອົາແຜນຍຸດທະສາດການປະຕິຮູບພາກລັດວິສາຫະກິດຊຶ່ງໄດ້ກຳນົດພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງອົງການຕ່າງໆທີ່ກ່ຽວຂ້ອງຢ່າງຈະແຈ້ງ.

**ການພັດທະນາດ້ານການຄ້າ.** ລັດຖະບານເຫັນໄດ້ວ່າ ການພັດທະນາການຄ້າໃນ ສປປ ລາວ ແມ່ນເປັນເຄື່ອງມືສຳຄັນໃນການຊຸກຍູ້ການເຕີບໂຕດ້ານເສດຖະກິດ ແລະ ລຶບລ້າງຄວາມທຸກຍາກ. ການເຊື່ອມໂຍງເຂົ້າໃນຂົງເຂດພາກພື້ນ ແລະ ການເຂົ້າເປັນສະມາຊິກຂອງອົງການການຄ້າໂລກຈະເປັນແຮງດັນສຳລັບການປະຕິຮູບຢູ່ໃນປະເທດ. ເພື່ອໃຫ້ມີຜົນຄືບໜ້າໃນວຽກງານການຄ້າ ລັດຖະບານໄດ້ສ້າງຕັ້ງຄະນະກຳມະການແຫ່ງຊາດເພື່ອການເຊື່ອມຍົງດ້ານເສດຖະກິດ ຊຶ່ງຊີ້ນຳໂດຍຮອງນາຍົກລັດຖະມົນຕີ, ຄະນະປະຈຳລັດຖະບານ. ຜູ້ໃຫ້ທຶນຈຳນວນໜຶ່ງໄດ້ຕົກລົງໃຫ້ການສະໜັບສະໜູນລັດຖະບານໃນການຈັດຕັ້ງ ປະຕິບັດແຜນງານບູລິມະສິດດ້ານການຄ້າ ( DTIS Action Matrix) ໂດຍການກໍ່ຕັ້ງກອງທຶນຫຼາຍຝ່າຍ – ກອງທຶນພັດທະນາການຄ້າ ຊຶ່ງບໍລິຫານໂດຍ WB. ອົດສະຕາລີ ແລະ EC ໄດ້ໃຫ້ການປະກອບສ່ວນຕໍ່ກອງທຶນດັ່ງກ່າວ. ບັນດາຜູ້ໃຫ້ທຶນທີ່ໃຫ້ການຊ່ວຍເຫລືອໃນຂົງເຂດການຄ້າລວມມີ: ADB, ອົດສະຕາລີ, EC, ITC, SECO, UNCTAD, UNDP, US ແລະ WB.

**ການພັດທະນາພາກເອກະຊົນ, ການທ່ອງທ່ຽວ ແລະ ການປະຕິຮູບທີ່ດິນ.** ອົງການຜູ້ໃຫ້ທຶນຫຼັກໃນຂົງເຂດການພັດທະນາພາກເອກະຊົນ ລວມມີ: ADB, EC, ເຢຍລະມັນ, ຍີ່ປຸ່ນ, ILO, ອິນເດຍ, SNV, UNIDO ແລະ ກຸ່ມທະນາຄານໂລກ (IFC ແລະ WB). ໂດຍການຊ່ວຍເຫລືອຂອງຜູ້ໃຫ້ທຶນ ລັດຖະບານລາວໄດ້ມີການປັບປຸງລະບຽບກົດໝາຍການກໍ່ຕັ້ງທຸລະກິດໃຫ້ກະທັດຮັດ ແລະງ່າຍດາຍຂຶ້ນ. ແຕ່ວ່າເພື່ອເຮັດໃຫ້ ສປປ ລາວ ກາຍເປັນປະເທດທີ່ໜ້າລົງທຶນດ້ານທຸລະກິດຫຼາຍຍິ່ງຂຶ້ນຈຳເປັນຕ້ອງໄດ້ສືບຕໍ່ປັບປຸງດ້ານຕ່າງໆ ເຊັ່ນ: ລະບຽບການອອກອານຸຍາດ, ການຄຸ້ມຄອງອາກອນ (ໂດຍສະເພາະແມ່ນສຳລັບ SME), ກົດໝາຍສັນຍາ ແລະ ການຈັດຕັ້ງປະຕິບັດ, ນະໂຍບາຍການແກ່ງແຍ້ງແຂ່ງຂັນ ແລະ ການແກ້ໄຂຂໍ້ຂັດແຍ່ງດ້ານທຸລະກິດ.

**ການພັດທະນາດ້ານການທ່ອງທ່ຽວ.** ຂົງເຂດວຽກງານນີ້ໄດ້ຮັບການຊ່ວຍເຫຼືອຈາກ ADB, ອົດສະຕາລີ, EC, IFC, ຍີ່ປຸ່ນ, ລຸກແຊມບວກ, ນິວຊີແລນ ແລະ SNV. ການຊ່ວຍເຫຼືອແມ່ນສຸມໃສ່ຫຼາຍຂົງເຂດວຽກງານເຊັ່ນ: ການພັດທະນາຍຸດທະສາດ, ການກໍ່ສ້າງໂຄງລ່າງ, ການພັດທະນາຕະຫຼາດ ແລະ ຍີ່ຫໍ້ສິນຄ້າ, ທ່ອງທ່ຽວອານຸລັກ, ທ່ອງທ່ຽວໂດຍຊາວບ້ານມີສ່ວນຮ່ວມ ແລະ ການຍົກລະດັບຄວາມສາມາດສຳລັບຜູ້ໃຫ້ບໍລິການ.







**ການປະຕິຮູບທີ່ດິນ.** ລັດຖະບານໄດ້ສືບຕໍ່ປະຕິບັດວຽກງານການປະຕິຮູບທີ່ດິນ ໂດຍສະເພາະແມ່ນພາຍໃຕ້ໂຄງການໃບຕາດິນ. ພາຍໃຕ້ການຊ່ວຍເຫຼືອຂອງທະນາຄານໂລກ, ອົດສະຕາລີ ແລະ ເຢຍລະມັນ ລັດຖະບານລາວໄດ້ທຳການສຶກສາດ້ານນະໂຍບາຍທີ່ດິນ, ຮ່າງດຳລັດ ແລະ ລະບຽບກົດໝາຍຕ່າງໆໃນຂັ້ນສູນກາງ ແລະ ຂັ້ນແຂວງ, ຈັດໂຄງການຝຶກອົບຮົມພາຍໃນລັດຖະບານ ແລະ ແກ່ພາກເອກະຊົນ, ກະກຽມໃບຕາດິນເພື່ອສອດຄ່ອງກັບກົດໝາຍໃໝ່, ການນຳໃຊ້ຜົນສຳເລັດຂອງລະບົບສຳເນົາເອກະສານໃນ 5 ແຂວງ, ການສຳເລັດການສຳຫລວດແກ້ໄຂຕາດິນ ຈຳນວນ 331.300 ຕອນ ແລະ ເພີ່ມການອອກໃບຕາດິນຈາກ 58.051 ໃນປີ 2005 ເປັນ 69.504 ໃນປີ 2006. ລັດຖະບານໄດ້ສືບຕໍ່ຂະຫຍາຍການອອກຕາດິນເພີ່ມອີກ 9 ແຂວງ ໂດຍໄດ້ອອກໃບຕາດິນທັງໝົດ 278.352 ໃບ ຮອດປະຈຸບັນ.





## 3.2 ເພີ່ມທະວີໝາກຜົນຂອງການຊ່ວຍເຫລືອ

### ຍົກສູງປະສິດທິພາບຂອງການຊ່ວຍເຫຼືອໂດຍການສົ່ງເສີມການນຳໃຊ້ລະບົບທີ່ມີຢູ່ຂອງປະເທດ

**ແຈ້ງການປາຣີ ແລະ ວຽງຈັນ ໄດ້ຊຸກຍູ້ໃຫ້ບັນດາຜູ້ໃຫ້ທຶນນຳໃຊ້ລະບົບຂອງປະເທດເຈົ້າພາບຫຼາຍຂຶ້ນ** ໃນໂຄງການຊ່ວຍເຫລືອຕ່າງໆ ຊຶ່ງຈະຊ່ວຍໃນການສ້າງຂີດຄວາມສາມາດໃນໄລຍະຍາວ ແລະ ລຶບລ້າງຄວາມຈຳເປັນໃນການສ້າງໜ່ວຍງານໂຄງການແບບຊ້ຳຊ້ອນ ແລະ ເຊື່ອມຍົງການຊ່ວຍເຫລືອຂອງຜູ້ໃຫ້ທຶນໂດຍແນໃສ່ການສ້າງຄວາມເຂັ້ມແຂງຂອງລະບົບໃນປະເທດ. ນອກນັ້ນຍັງຊ່ວຍຫລຸດຜ່ອນຄວາມສິ້ນເປືອງໂດຍບໍ່ມີການນຳໃຊ້ເງື່ອນໄຂຕ່າງໆເພີ່ມເຕີມໃສ່ກັບລະບຽບຕ່າງໆທີ່ມີຢູ່ຂອງລັດຖະບານປະເທດເຈົ້າພາບ ແລະ ຍົກສູງຄວາມເປັນເຈົ້າການຂອງລັດຖະບານ.

**ໃນຫຼາຍກໍລະນີ ຜູ້ໃຫ້ທຶນບໍ່ສາມາດນຳໃຊ້ລະບົບພາຍໃນຂອງປະເທດໄດ້ເພາະຍ້ອນວ່າອ່ອນແອ.** ເມື່ອເປັນເຊັ່ນນັ້ນຈະເຮັດໃຫ້ປະສິດທິພາບຂອງການຊ່ວຍເຫລືອຫລຸດລົງ. ຕົ້ນຕໍແມ່ນກ່ຽວກັບລະບົບການຄຸ້ມຄອງການເງິນ ແລະ ການຈັດຊື້ ຊຶ່ງຜູ້ໃຫ້ທຶນຈຳເປັນຕ້ອງຮັບປະກັນດ້ານຄວາມໂປ່ງໃສ່ຂອງການນຳໃຊ້ທຶນ. ແຈ້ງການວຽງຈັນໄດ້ມີແຜນງານໃນການປັບປຸງລະບົບການຄຸ້ມຄອງການເງິນ ແລະ ການຈັດຊື້ ແລະ ຜູ້ໃຫ້ທຶນໄດ້ຕົກລົງຈະນຳໃຊ້ລະບົບພາຍໃນ (ຊຶ່ງຈະຖືກປັບປຸງໃຫ້ດີຂຶ້ນ) ໃນການ ນຳໃຊ້ເງິນຊ່ວຍເຫລືອຂອງຕົນໃຫ້ຫລາຍຍິ່ງຂຶ້ນຮອດປີ 2010.

**ສປປ ລາວ ຈຳເປັນຕ້ອງປັບປຸງລະບົບຂອງຕົນໃຫ້ເຂັ້ມແຂງ ແລະ ຊຸກຍູ້ໃຫ້ຜູ້ໃຫ້ທຶນນຳໃຊ້ຫຼາຍຂຶ້ນ.** ດັ່ງທີ່ເຫັນໃນຮູບຮູບ 20 ອັດຕາສ່ວນການນຳໃຊ້ທຶນຊ່ວຍເຫຼືອທີ່ໃຊ້ລະບົບຄຸ້ມຄອງການເງິນຂອງປະເທດເຈົ້າພາບແມ່ນຕ່ຳກ່ວາລະດັບສະເລ່ຍຂອງໂລກ ແລະ ການນຳໃຊ້ລະບົບການຈັດຊື້ແມ່ນຕ່ຳ. ໃນນັ້ນເງິນທຶນສ່ວນໃຫຍ່ແມ່ນມາຈາກສະຖາບັນການເງິນສາກົນ ແລະ ມີຜູ້ໃຫ້ທຶນຈຳນວນໜ້ອຍທີ່ໃຊ້ລະບົບພາຍໃນຂອງປະເທດ.

ສປປ ລາວ ແມ່ນຖືກຈັດໃນລະດັບທີ່ຕ່ຳກ່ວາລະດັບສະເລ່ຍຂອງໂລກໃນດ້ານການນຳລະບົບພາຍໃນຂອງປະເທດໂດຍຜູ້ໃຫ້ທຶນ.



ຮູບ 20. ການນຳໃຊ້ທຶນຊ່ວຍເຫຼືອໂດຍໃຊ້ລະບົບຂອງປະເທດໃນເຂດອາຊີ ຕາເວັນອອກສ່ຽງໃຕ້ (%, 2005/06)




*ແຫລ່ງ.* ການສຳຫຼວດສາກົນ ແລະ ໃນສປປ ລາວ (OECD/DAC) ກ່ຽວກັບການຕິດຕາມການຈັດຕັ້ງປະຕິບັດແຈ້ງການປາຣີ (2005/06)

**ການປະຕິຮູບເພື່ອປັບປຸງປະສິດທິພາບຂອງການຊ່ວຍເຫຼືອກຳລັງໄດ້ຮັບການປະຕິບັດພ້ອມກັບແນວຄິດລິເລີ່ມຈຳນວນໜຶ່ງ ແລະ ໃນບາງຂະແໜງການ.** ປະຈຸບັນ ໂຄງການ PFMSP ໄດ້ນຳໃຊ້ລະບຽບການຄຸ້ມຄອງການເງິນ ແລະ ການຈັດຊື້ທັງໝົດທີ່ລະບຸໃນແຈ້ງການວຽງຈັນ. ກະຊວງການເງິນຈະພັດທະນາປຶ້ມຄູ່ມືເພື່ອສ້າງມາດຖານສຳລັບລະບຽບການຄຸ້ມຄອງການເງິນສຳລັບເງິນຊ່ວຍເຫຼືອເພື່ອໃຫ້ຜູ້ໃຫ້ທຶນເອົາໄປນຳໃຊ້ປະຕິບັດ. ພ້ອມດຽວກັນນັ້ນ ຫ້ອງການຕິດຕາມການຈັດຊື້ຈະໄດ້ວາງມາດຖານສຳລັບຂະບວນການຍື່ນຂໍ້ສະເໜີ ແລະ ປະເມີນຕີລາຄາການຮັບທີ່ປຶກສາຕ່າງໆ. ແນວຄວາມຄິດລິເລີ່ມດັ່ງກ່າວຈະໄປຄຽງຄູ່ກັບການສ້າງຂີດຄວາມສາມາດໃນລະດັບສູນກາງ ແລະ ຂັ້ນທ້ອງຖິ່ນ.

ບັນຊີລາຍຊື່ໂຄງການຊ່ວຍເຫຼືອຕ່າງໆແມ່ນຢູ່ໃນເອກະສານຊ້ອນທ້າຍ **Annex 4.**

# ເອກະສານຊ້ອນທ້າຍ

## Annexes

24 / VII
ທາມຈໍາໜ່າຍ

**Annex 1** - ຄໍາສັບຫຍໍ້ 28

**Annex 2** - ຂະແໜງການສົ່ງອອກຕົ້ນຕໍຂອງ ສປປ ລາວ 29

**Annex 3** - ໂຄງການລົງທຶນໃຫຍ່ຕ່າງໆຂອງຕ່າງປະເທດໃນ ສປປ ລາວ 30

**Annex 4** - ໂຄງການຊ່ວຍເຫຼືອຕ່າງໆຂອງຜູ້ໃຫ້ທຶນໃນວຽກງານການປະຕິຮູບໃນ ສປປ ລາວ 32

# ANNEX 1 - ຄຳສັບຫຍໍ້

| | |
|---|---|
| ADB | ທະນາຄານພັດທະນາອາຊີ |
| AFTA | ຕະຫລາດເສລີອາຊຽນ |
| ANZ | ກຸ່ມທະນາຄານອົດສະຕາລີ ແລະ ນິວຊີແລນ |
| APB | ທະນາຄານສົ່ງເສີມກະສິກຳ |
| ASEAN | ອາຊຽນ |
| ATM | ຕູ້ຖອນເງິນ ATM |
| AusAID | ໂຄງການຊ່ວຍເຫລືອຕ່າງປະເທດຂອງອົດສະຕາລີ |
| BCEL | ທະນາຄານການຄ້າຕ່າງປະເທດ |
| BOL | ທະນາຄານແຫ່ງ ສປປ ລາວ |
| BPKP | ບ/ສ ພັດທະນາເຂດພູດອຍ |
| BPO | ຫ້ອງການສົ່ງເສີມທຸລະກິດ |
| CBTA | ສັນຍາຂົນສົ່ງຜ່ານແດນ |
| CEPT | ລາຍການອັດຕາພາສີລວມຂອງອາຟຕາ |
| CIDA | ອົງການພັດທະນາສາກົນຂອງການາດາ |
| COA | ສາລະບານບັນຊີ |
| CPI | ຄະນະກຳມະການແຜນການ ແລະ ການລົງທຶນ |
| CPI | ດັດສະນີລາຄາສິນຄ້າຊົມໃຊ້ |
| CPIA | ການປະເມີນນະໂຍບາຍ ແລະ ອົງການຂອງປະເທດ |
| DIMEX | ກົມນຳເຂົ້າ ແລະ ສົ່ງອອກ |
| DP | ຜູ້ຮ່ວມພັດທະນາ (ຜູ້ໃຫ້ທຶນ) |
| DTIS | ການສຶກສາການເຊື່ອມຍົງດ້ານການຄ້າ |
| EAP | ອາຊີຕາເວັນອອກ ແລະ ປາຊີຟິກ |
| EC | ຄະນະກຳມະທິການເອີລົບ |
| EdL | ບ/ສ ໄຟຟ້າ ລາວ |
| EU | ປະຊາຄົມເອີລົບ |
| FDI | ການລົງທຶນໂດຍກົງຂອງຕ່າງປະເທດ |
| FM | ການຄຸ້ມຄອງການເງິນ |
| FY | ສົກປີງົບປະມານ |
| GDP | ຜະລິດຕະພັນມວນລວມແຫ່ງຊາດ |
| GOL | ລັດຖະບານລາວ |
| GSM | ລະບົບສາກົນດ້ານການສື່ສານໂທລະສັບມືຖື |
| GTZ | ອົງການຮ່ວມມືດ້ານເຕັກນິກເຢຍລະມັນ |
| ICT | ເຕັກໂນໂລຊີດ້ານຂໍ້ມູນ ແລະ ການສື່ສານ |
| IDA | ອົງການພັດທະນາສາກົນ |
| IF | ໂຄງການເຊື່ອມຍົງດ້ານການຄ້າ |
| IFC | ອົງກອນການເງິນສາກົນ |
| ILO | ອົງການແຮງງານສາກົນ |
| IMF | ອົງການກອງທຶນສາກົນ |
| I-NGOs | ອົງການ NGOs ສາກົນ |
| ITC | ຄະນະກຳມະທິການດ້ານການຄ້າສາກົນ |
| JBIC | ທະນາຄານເພື່ອການຮ່ວມມືສາກົນຍີ່ປຸ່ນ |
| JFICT | ກອງທຶນຍີ່ປຸ່ນເພື່ອເຕັກນິກດ້ານຂໍ້ມູນ ແລະ ສື່ສານ |
| JFPR | ກອງທຶນຍີ່ປຸ່ນເພື່ອຫລຸດຜ່ອນຄວາມທຸກຍາກ |
| JICA | ອົງການຮ່ວມມືສາກົນຍີ່ປຸ່ນ |
| KOICA | ອົງການຮ່ວມມືສາກົນເກົາຫລີ |
| LAT | ບ/ສ ໂທລະຄົມລາວ |
| LATA | ສະມາຄົມທ່ອງທ່ຽວລາວ |
| LBF | ກອງປະຊຸມນັກທຸລະກິດລາວ |
| LDB | ທະນາຄານພັດທະນາລາວ |
| LDC | ປະເທດດ້ອຍພັດທະນາ |
| LHSE | ລັດວິສາຫະກິດຫຸ້ນສ່ວນລາວ |
| LNCCI | ສະພາການຄ້າ ແລະ ອຸດສາຫະກຳ |
| LNTA | ອົງການທ່ອງທ່ຽວແຫ່ງຊາດ |
| LPI | ຕົວວັດແທກການບໍລິການດ້ານໂຄງລ່າງ |
| M&E | ການຕິດຕາມ ແລະ ກວດກາ |
| MDGs | ເປົ້າການພັດທະນາສະຫະສະວັດ |
| MFIs | ສະຖາບັນການເງິນຈຸລະພາກ |
| MIH | ກະຊວງອຸດສາຫະກຳ ແລະ ຫັດຖະກຳ |
| MOE | ກະຊວງສຶກສາ |
| MOF | ກະຊວງການເງິນ |
| MOIC | ກະຊວງອຸດສາຫະກຳ ແລະ ການຄ້າ |
| MPDF | ໂຄງການພັດທະນາພາກເອກະຊົນລຸ່ມເມນ້ຳຂອງ |
| MPI | ກະຊວງແຜນການ ແລະ ການລົງທຶນ |
| MPWT | ກະຊວງໂຍທາທິການ ແລະ ຂົນສົ່ງ |
| NA | ສະພາແຫ່ງຊາດ |
| NAPPA | ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ |
| NGPES | ຍຸດທະສາດເພື່ອການເຕີບໂຕ ແລະ ຫລຸດຜ່ອນຄວາມທຸກຍາກ |
| NHDR | ບົດລາຍງານການພັດທະນາມະນຸດ |
| NPEP | ໂຄງການລົບລ້າງຄວາມທຸກຍາກ |
| NPL | ໜີ້ເສຍ (ເງິນກູ້ທີ່ບໍ່ກໍ່ໃຫ້ເກີດລາຍໄດ້) |
| NSC | ສູນສະຖິຕິແຫ່ງຊາດ |
| NSEDP | ແຜນພັດທະນາເສດຖະກິດ ແລະ ສັງຄົມ |
| NT2 | ໂຄງການນ້ຳເທີນ 2 |
| ODA | ການຊ່ວຍເຫລືອທາງການດ້ານພັດທະນາ |
| PACSA | ອົງການປົກຄອງ ແລະ ຄຸ້ມຄອງລັດຖະກອນ |
| PEMSP | ໂຄງການສ້າງຄວາມເຂັ້ມແຂງດ້ານລາຍຈ່າຍພາກລັດ |
| PEMSU | ໜ່ວຍງານສ້າງຄວາມເຂັ້ມແຂງດ້ານລາຍຈ່າຍພາກລັດ |
| PFM | ການຄຸ້ມຄອງການເງິນພາກລັດ |
| PRS | ຍຸດທະສາດຫລຸດຜ່ອນຄວາມທຸກຍາກ |
| PM | ນາຍົກລັດຖະມົນຕີ |
| PSD | ການພັດທະນາພາກເອກະຊົນ |
| SAO | ອົງການກວດສອບບັນແຫ່ງລັດ |
| SCBs | ທະນາຄານທຸລະກິດລັດ |
| SCP | ໂຄງການຮ່ວມມືສິງກະໂປ |
| SDC | ອົງການພັດທະນາ ແລະ ຮ່ວມມື ສະວິສ |
| SECO | ກອງເລຂາແຫ່ງຊາດດ້ານເສດຖະກິດ |
| Sida | ອົງການຊູແອດເພື່ອການພັດທະນາສາກົນ |
| SME | ວິສາຫະກິດຂະໜາດນ້ອຍ ແລະ ກາງ |
| SNV | ອົງການພັດທະນາເນີເທີແລນ |
| SOE | ລັດວິສາຫະກິດ |
| SPS | ອານາໄມພືດ ແລະ ສັດ |
| STEA | ອົງການວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ |
| SWAp | ກົນໄກທົ່ວຂະແໜງການ |
| TA | ການຊ່ວຍເຫຼືອດ້ານເຕັກ |
| TC | ການຮ່ວມມືດ້ານເຕັກນິກ |
| TDF | ກອງທຶນພັດທະນາການຄ້າ |
| UN | ອົງການສະຫະປະຊາຊາດ |
| UNCDF | ກອງທຶນພັດທະນາການລົງທຶນຂອງ UN |
| UNCTAD | ອົງການ UN ເພື່ອການຄ້າ ແລະ ການພັດທະນາ |
| UNDP | ອົງການສະຫະປະຊາຊາດເພື່ອການພັດທະນາ |
| UNIDO | ອົງການສະຫະປະຊາຊາດເພື່ອການພັດທະນາອຸດສາຫະກຳ |
| UNODC | ຫ້ອງການ UN ກ່ຽວກັບຢາເສັບຕິດ ແລະ ການກໍ່ການຮ້າຍ |
| VAT | ອາກອນມູນຄ່າເພີ່ມ |
| WASA | ອົງການນ້ຳສະອາດ ແລະ ອານາໄມ |
| WB | ທະນາຄານໂລກ |
| WBI | ສະຖາບັນຂອງທະນາຄານໂລກ |
| WTO | ອົງການ ການຄ້າໂລກ |

## ANNEX 2 – ຂະແໜງການສົ່ງອອກຕົ້ນຕໍຂອງ ສປປ ລາວ

- *ການສົ່ງອອກເຄື່ອງຕັດຫຍິບ.* ຂະແໜງຕັດຫຍິບຂອງລາວລວມມີປະມານ 100 ກ່ວາບໍລິສັດ ແລະ ມີກຳມະກອນເກືອບ 30 ພັນຄົນ. ການສົ່ງອອກເຄື່ອງຕັດຫຍິບຄາດວ່າເພີ່ມຂຶ້ນ 20 ສ່ວນຮ້ອຍ ໃນປີ 2007 (ຫລືຍອດການສົ່ງອອກປະມານ 150 ລ້ານ US$). ຜູ້ສົ່ງອອກຫລັກປະກອບດ້ວຍບໍລິສັດຕ່າງປະເທດ ແລະ ວິສາຫະກິດປະສົມ ເຊັ່ນ: Trio (Laos) Export, Great Lao Garment, Lanexang Garment ແລະ Wonderful Garment (ແຕ່ລະບໍລິສັດມີຄົນງານ ປະມານ 2000 ຄົນ). ບໍລິສັດອື່ນຍັງມີ Lao Garment (ຄົນງານ 1800 ຄົນ), Alpi Lao International (1400 ຄົນ), Trimax ແລະ KMS (ແຕ່ລະ ບ/ສ ມີຄົນງານປະມານ 800 ຄົນ).

- *ການສົ່ງອອກບໍ່ແຮ່.* ປະຈຸບັນມີສອງບໍລິສັດໃຫຍ່ໃນຂະແໜງບໍ່ແຮ່: Lane Xang Mineral Ltd - LXM (Oxiana Resources) ແລະ Phubia Mining (Pan Australian Resources Ltd). LXM ແມ່ນເປັນ ບ/ສ ທີ່ນຳໜ້າໃນການຂຸດຄົ້ນ ແລະ ສົ່ງອອກບໍ່ແຮ່ໃນ ສປປ ລາວ. ມູນຄ່າການສົ່ງອອກຂອງບໍລິສັດ (ຄຳ ແລະ ທອງ) ແມ່ນມີປະມານ 500 ລ້ານ US$ ໃນປີ 2006 ແລະ ຄາດວ່າເພີ່ມຂຶ້ນເລັກນ້ອຍໃນປີ 2007. ບ/ສ ພູເບັ້ຍ ເປັນບໍລິສັດໃຫຍ່ຂະໜາດສອງໃນປະເທດຂະເລີ່ມຜະລິດຝຸ່ນທອງເພື່ອສົ່ງອອກໃນກາງປີ 2008. ໂຄງການມີແຜນຈະຂະຫຍາຍການສົ່ງອອກຈາກ 20-25 ລ້ານ US$ ເປັນຫລາຍຮ້ອຍລ້ານ US$ ໃນສົກປີ 2008/09. ຕະຫລາດທອງຂອງລາວແມ່ນ ປະເທດໄທ, ຫວຽດນາມ, ມະເລເຊຍ ແລະ ຈີນ.

- *ການສົ່ງອອກກາເຟ.* ໃນປີ 2007 ການສົ່ງອອກກາເຟຂອງ ສປປ ລາວ ໄດ້ເພີ່ມຂຶ້ນ 20 ສ່ວນຮ້ອຍ ຍ້ອນການເກັບກ່ຽວທີ່ດີຂຶ້ນ ແລະ ລາຄາກາເຟໃນຕະຫລາດໂລກທີ່ສູງຂຶ້ນ. ຜູ້ສົ່ງອອກກາເຟລາວຕົ້ນຕໍແມ່ນ ບ/ສ ດາວເຮືອງ ຂາເຂົ້າ-ຂາອອກ, ບ/ສ ພີດາວ, ບ/ສ ກະສິກຳລາວ ຂາເຂົ້າ-ຂາອອກ, ບ/ສ ເພັດຄຳໃສ ການຄ້າ ຂາເຂົ້າ-ຂາອອກ ແລະ ບ/ສ ພັດທະນາຜະລິດຕະພັນກະສິກຳ. ຕະຫລາດກາເຟຕົ້ນຕໍຂອງລາວແມ່ນ ບັນດາປະເທດ EU, ຍີ່ປຸ່ນ, ສະຫາລັດ ແລະ ປະເທດເພື່ອນບ້ານອາຊຽນ.

- *ການສົ່ງອອກໄຟຟ້າ.* ການສົ່ງອອກໄຟຟ້າບໍ່ມີການປ່ຽນແປງຫຼາຍ ປະມານ 100 ລ້ານ US$ ຕໍ່ປີ ໃນຊຸມປີຜ່ານມາ. ສ່ວນແບ່ງຂອງໄຟຟ້າໃນການສົ່ງອອກໄດ້ຫລຸດລົງໃນລະດັບ 10 ສ່ວນຮ້ອຍໃນປີ 2007 ຈາກ 30 ສ່ວນຮ້ອຍໃນປີ 2000. ປະຈຸບັນມີສອງໂຄງການທີ່ສົ່ງອອກໄຟຟ້າໄປໄທ (ເທີນຫີນບູນ ຊຶ່ງ EdL ຖືຫຸ້ນ 60% ແລະ ຫ້ວຍເຫາະ - EdL ຖື 20%). ມີໂຄງການໃໝ່ທີ່ໃຫຍ່ກຳລັງຢູ່ໃນໄລຍະກໍ່ສ້າງຊຶ່ງຈະສຳເລັດ ໃນອານາຄົດໃກ້ນີ້, ໃນນັ້ນລວມມີ ນ້ຳເທີນ 2, ນ້ຳງື່ມ 2 ແລະ ເຊຄະມານ 3. ການສົ່ງອອກໄຟຟ້າຈະເພີ່ມຂຶ້ນຢ່າງຫຼວງຫຼາຍ ນັບແຕ່ປີ 2010 ເປັນຕົ້ນໄປ.

- *ການສົ່ງອອກຜະລິດຕະພັນໄມ້.* ການສົ່ງອອກໄມ້ ແລະ ຜະລິດຕະພັນໄມ້ໃນປີ 2006 ແມ່ນປະມານ 140 ລ້ານ US$ ແລະຄາດວ່າຕ່ຳກ່ວານັ້ນໃນປີ 2007. ຜະລິດຕະພັນສົ່ງອອກຕົ້ນຕໍແມ່ນ: ເຟີນີເຈີ, ໄມ້ປູພື້ນ, ສິ້ນສ່ວນເຄື່ອງປະກອບໄມ້, ໄມ້ອັດ ແລະ ເຄື່ອງສຳເລັດຮູບອື່ນໆ. ຜູ້ສົ່ງອອກຕົ້ນຕໍແມ່ນ: First May Timber Processing, Lao Furniture Industry, Khounta Timber Processing, Khammouane Wood Processing Factory ແລະ Champasak Wood Processing Enterprise. ຫວຽດນາມ ແລະ ໄທ ແມ່ນເປັນຜູ້ນຳເຂົ້າໄມ້ ແລະຜະລິດຕະພັນໄມ້ໃຫຍ່ສຸດຂອງລາວ. ໃນໄລຍະຫລັງລັດຖະບານໄດ້ແຊ່ງຂັດການສົ່ງອອກຜະລິດຕະພັນໄມ້ທີ່ມີມູນຄ່າເພີ່ມຕ່ຳລວມທັງໄມ້ເຄິ່ງສຳເລັດຮູບ ແລະ ສົ່ງເສີມການສົ່ວອອກເຄື່ອງໄມ້ສຳເລັດຮູບ. ແຕ່ວ່າການສົ່ງອອກໄມ້ບໍ່ທັນແປຮູບຍັງປະກົດເຫັນບາງຄັ້ງຄາວ ແລະ ການປະຕິບັດລະບຽບກົດໝາຍຍັງບໍ່ທັນຮັດກຸມ.

- *ການສົ່ງອອກຜະລິດຕະພັນກະສິກຳອື່ນໆ.* ນອກຈາກກາເຟ ສປປ ລາວ ຍັງສົ່ງອອກພືດກະສິກຳໄປຍັງປະເທດອ້ອມຂ້າງ. ການສົ່ງອອກໄປໄທ ແລະ ຈີນ ໄດ້ເພີ່ມຂຶ້ນໃນສອງສາມປີຜ່ານມາ (ຈາກ 25 ລ້ານ US$ ໃນປີ 2005 ເປັນ 40 ລ້ານ US$ ໃນປີ 2006 ແລະ ຄາດວ່າຮອດ 50 ລ້ານ US$ ໃນປີ 2007). ການສົ່ງອອກຕົ້ນໄມ້ອຸດສາຫະກຳ (ຢາງພາລາ, ຕົ້ນວິກ ແລະ ຕົ້ນໄມ້ອື່ນໆ) ຄາດວ່າຈະເພີ່ມຂຶ້ນຊຸມປີຂ້າງໜ້າ. ຜູ້ສົ່ງອອກເຄື່ອງກະສິກຳລວມມີ: ບ/ສ ພັດທະນາປາກຊ່ອງຂາອອກ-ຂາເຂົ້າ, ບ/ສ ຜະລິດກະສິກຳລາວ, ບ/ສ ພັດທະນາກະສິກຳຫຼວງພະບາງ, ບ/ສ ໄຊສະຫວ່າງການຄ້າຂາອອກບຂາເຂົ້າ ແລະ ກະເສດ 2000.



# ANNEX 3 – ໂຄງການລົງທຶນໃຫຍ່ໃນ ສປປ ລາວ

## ກະສິກຳ

ກິດຈະກຳສ່ວນໃຫຍ່ໃນຂະແໜງກະສິກຳແມ່ນການປູກຕົ້ນໄມ້ອຸດສາຫະກຳ ແລະ ພືດທຸລະກິດຕ່າງໆຕາມສັນຍາຮັບຊື້. ຜູ້ລົງທຶນສຳຄັນໃນຂະແໜງນີ້ແມ່ນ ຈີນ, ຫວຽດນາມ, ໄທ, ຍີ່ປຸ່ນ, ອິນເດຍ, ເກົາຫລີ ແລະ ມະເລເຊຍ. ດິນຫລາຍພັນເຮັກຕາໄດ້ຖືກມອບໃຫ້ຜູ້ລົງທຶນສຳປະທານໄລຍະຍາວໃນປີຜ່ານມາ ເພື່ອປູກຢາງພາລາ, ຕົ້ນອ້ອຍ, ເຍື່ອເຈັ້ຍຈາກຕົ້ນວິກ ແລະ ຕົ້ນນ້ຳມັນປາມ. ການຈັດຕັ້ງປະຕິບັດປະສົບບາງຂໍ້ຫຍຸ້ງຍາກດ້ານການຈັດແຈງ ແລະ ຄຸ້ມຄອງທີ່ດິນສຳປະທານ. ຫວ່າງບໍ່ດົນມານີ້ ລັດຖະບານໄດ້ມີມາດຕະການແກ້ບັນຫາດັ່ງກ່າວໂດຍປັບປຸງການມອບດິນສຳປະທານ ແລະ ລະບຽບການທີ່ກ່ຽວຂ້ອງ. ບັນຫານີ້ແມ່ນສຳຄັນເພື່ອຮັບປະກັນໃຫ້ປະຊາຊົນຊາວກະສິກອນເຂດເນີນສູງ ແລະ ຊາວຜູ້ທຸກຍາກທີ່ຢູ່ໃນຊົນນະບົດໄດ້ຮັບປະໂຫຍດຈາກການເຕີບໂຕຂອງເສດຖະກິດ. ນອກນັ້ນ ບັນຫາຄວາມຍືນຍົງດ້ານສິ່ງແວດລ້ອມ ແລະ ສັງຄົມ ຈະຕ້ອງໄດ້ຮັບການຕິດຕາມ ແລະ ຄຸ້ມຄອງຢ່າງຖືກຕ້ອງ.

- **ການປູກຕົ້ນຢາງພາລາ.** ການປູກຕົ້ນຢາງພາລາໃນ ສປປ ລາວ ແມ່ນຄຶກຄັກຫຼາຍໃນຊຸມປີຜ່ານມາ ໂດຍມີມູນຄ່າການລົງທຶນເກີນຮ້ອຍລ້ານໂດລາ. ປະຈຸບັນ ຜູ້ລົງທຶນທີ່ໃຫຍ່ທີ່ສຸດໃນການປູກຕົ້ນຢາງພາລາແມ່ນ ຈີນ, ຫວຽດນາມ ແລະ ໄທ. ການລົງຂອງຈີນສ່ວນໃຫຍ່ແມ່ນຢູ່ທາງພາກເໜືອຂອງລາວ (ຫຼວງນ້ຳທາ, ອຸດົມໄຊ ແລະ ຫຼວງພະບາງ) ຮອດແຂວງວຽງຈັນ. ຜູ້ລົງທຶນຈາກຫວຽດນາມແມ່ນເຕົ້າໂຮມໃນເຂດພາກໃຕ້ (ຈຳປາສັກ, ສາລະວັນ, ເຊກອງ ແລະ ອັດຕະປື). ໂຄງການຕົ້ນຕໍລວມມີ: DAKLAK RUBBER, VIETNAM GENERAL RUBBER, LAO-THAI HUA RUBBER, JUNNAN POWER BIOLOGICAL PRODUCTS GROUP. ໃນປີ 2007 ລັດຖະບານໄດ້ອານຸມັດໂຄງການປູກຕົ້ນຢາງພາລາໃໝ່ ເຊັ່ນ: QUANG MINH RUBBER (15 ລ້ານໂດລາ), LAO-QUASAGERUCO JOINT STOCK (19 ລ້ານໂດລາ) ແລະ DAU TIENG VIET LAO RUBBER JOINT STOCK Co.

- **ການປູກຕົ້ນໄມ້ເຮັດເຈັ້ຍ** (ຕົ້ນວິກ ແລະ ອາກາເຊຍ). ປະຈຸບັນຄາດວ່າມີສອງໂຄງການທີ່ເຄື່ອນໄຫວປູກຕົ້ນໄມ້ດັ່ງກ່າວ: OJI LAO PLANTATION FOREST Co ແລະ ADITYA BIRLA Group (ອິນເດຍ). ໂຄງການ OJI LAO ໄດ້ຂະຫຍາຍການປູກຕົ້ນວິກທີ່ແຂວງ ບໍລິຄຳໄຊ ແລະ ຄຳມ່ວນ ໃນຊຸມປີຜ່ານມາ. ADITYA BIRLA Group (ໂຄງການຄົບວົງຈອນ: ມີໂຮງງານເຈັ້ຍ ແລະ ການປູກຕົ້ນໄມ້ເຮັດເຈັ້ຍໃນເນື້ອທີ່ 50 ພັນ ຮຕ, ຕົ້ນຕໍແມ່ນຕົ້ນວິກ) ໄດ້ເລີ່ມປູກຕົ້ນໄມ້ຫວ່າງບໍ່ດົນມານີ້ ແລະ ໄດ້ສຳເລັດປະມານ 1.600 ຮຕ ໃນປີ 2007. ໃນປີນີ້ ຄາດວ່າຈະປູກໄດ້ປະມານ 5 ພັນ ຮຕ, ແຕ່ວ່າຍັງຂຶ້ນກັບການຈັດແຈງຊອກດິນເປົ່າຫວ່າງຂອງລັດຖະບານ. ໂຄງການຕ້ອງການປະມານ 7.500 ຮຕ ຕໍ່ປີ ເພື່ອໃຫ້ສາມາດປ້ອນໂຮງງານແບບຍືນຍົງ (ຊຶ່ງຄາດວ່າຈະໄດ້ກໍ່ສ້າງໃນປີ 2012).

- **ການປູກຕົ້ນອ້ອຍ.** ບ/ສ Mitr Phol Sugar Corporation (ຜູ້ລົງທຶນຕ່າງປະເທດຕົ້ນຕໍໃນຂະແໜງ) ໄດ້ຂະຫຍາຍແຜນການລົງທຶນໃນ ສປປ ລາວ ເປັນ 70 ລ້ານໂດລາ (2,3 ຕື້ບາດ) ເພີ່ມຂຶ້ນຈາກແຜນເດີມ 26 ລ້ານໂດລາ (900 ລ້ານບາດ). ໂຄງການດັ່ງກ່າວມີແຜນປູກອ້ອຍ (ປະມານ 10 ພັນ ຮຕ) ໃນແຂວງສະຫວັນນະເຂດ ແລະ ເລີ່ມຕົ້ນກະກຽມໂຄງການແຕ່ປີ 2006 ເປັນຕົ້ນມາ. ການຜະລິດນ້ຳຕານແມ່ນຄາດວ່າຈະເລີ່ມໃນທ້າຍປີ 2008 ຫລື ຕົ້ນປີ 2009. ນອກຈາກນັ້ນ ຊາວກະສິກອນລາວໃນພາກເໜືອ ເຊັ່ນ: ຜົ້ງສາລີ, ຫຼວງນ້ຳທາ ແລະ ອຸດົມໄຊ ໄດ້ສືບຕໍ່ປູກຕົ້ນອ້ອຍສົ່ງອອກໄປຍັງ ຈີນ.



- **ການປູກພືດຕ່າງໆ** (ສາລີ, ຖົ່ວຂຽວ, ໝາກງາ, ຊາ, ມັນຕົ້ນ, ຜັກ ແລະ ພືດອື່ນໆ). ໄທ, ຈີນ ແລະ ຫວຽດນາມ ແມ່ນຜູ້ລົງທຶນຕົ້ນຕໍໃນ ສປປ ລາວ ໃນຮູບແບໂຄງການ ແລະ ສັນຍາເກັບຊື້ ໃນບັນດາແຂວງຊາຍແດນ ເຊັ່ນ: ໄຊຍະບູລີ, ບໍ່ແກ້ວ, ຫຼວງນ້ຳທາ, ອຸດົມໄຊ, ຜົ້ງສາລີ, ຫົວພັນ ແລະ ແຂວງຕ່າງໆໃນພາກໃຕ້. ພໍ່ຄ້າຊາຍແດນທ້ອງຖິ່ນກໍມີບົດບາດສຳຄັນໃນການສົ່ງເສີມທຸລະກິດ. ໃນສອງປີທີ່ຜ່ານມາໄດ້ມີການກໍ່ຕັ້ງສອງໂຄງການປູກຝັງຈາກໄທ ເຊັ່ນ:: CP Group (ການຊຸກຍູ້ປູກສາລີທີ່ແຂວງໄຊຍະບູລີ) ແລະ River Kwai International Food Industry (ການປູກຝັງປອດສານເຄມີທີ່ປາກຊ່ອງ, ແຂວງຈຳປາສັກ). ນອກນັ້ນ ຍັງມີໂຄງການຈຳນວນໜຶ່ງຈາກ ຈີນ ແລະ ຫວຽດນາມ ຊຶ່ງໄດ້ອານຸຍາດຈາກລັດຖະບານລາວ ໃນປີ 2007 ສຳລັບການປູກມັນຕົ້ນ, ສາລີ, ຜັກ ແລະ ພືດອື່ນໆ.

## ອຸດສາຫະກຳປຸງແຕ່ງ

ການກໍ່ສ້າງໂຮງງານປຸງແຕ່ງຕ່າງໆແມ່ນສືບຕໍ່ໃນປີ 2007. ໂຮງງານຊີມັງທ່າແຂກ (ໂຮງງານທີ່ໃຫຍ່ທີ່ສຸດໃນລາວ) ໄດ້ກໍ່ສ້າງສຳເລັດ ແລະ ເລີ່ມຕົ້ນຜະລິດຊີມັງໃນຕົ້ນປີ 2007. ການກໍ່ສ້າງໂຮງງານເບຍທີ່ໃຫຍ່ອັນດັບສອງໃນລາວ (Tiger Beer) ໂດຍ ບ/ສ Lao Asia Pacific Brewery ແມ່ນຄາດວ່າຈະສຳເລັດໃນກາງປີ 2008. ການຂະຫຍາຍການຜະລິດຂອງບໍລິສັດເບຍລາວ (ການສ້າງໂຮງງານແຫ່ງທີສອງທີ່ແຂວງຈຳປາສັກ) ຄາດວ່າຈະສຳເລັດພາຍໃນປີນີ້. ການກໍ່ສ້າງໂຮງງານນ້ຳຕານແຫ່ງໃໝ່ (ເພື່ອຜະລິດນ້ຳຕານປະມານ 60 ພັນໂຕນ ຕໍ່ປີ ແລະ ເປັນໂຮງງານທີ່ໃຫຍ່ທີ່ສຸດໃນປະເທດ) ທີ່ແຂວງສະຫວັນນະເຂດ ໂດຍ ບ/ສ Mitr Phol Sugar Corporation (ປະເທດໄທ) ແມ່ນຍັງສືບຕໍ່ ແລະ ຄາດວ່າຈະສຳເລັດໃນທ້າຍປີ 2008. ອຸດສາຫະກຳປຸງແຕ່ງອື່ນໆ ເຊັ່ນ: ຢາງພາລາ ແລະ ເຈ້ຍ ແມ່ນຄາດວ່າຈະໄດ້ກໍ່ຕັ້ງໃນອານາຄົດ.

## ການຄ້າ ແລະ ການບໍລິການ

ຜົນສຳເລັດຕົ້ນຕໍຂອງຜູ້ລົງທຶນຕ່າງປະເທດໃນຂະແໜງບໍລິການໃນໄລຍະສອງປີທີ່ຜ່ານມາແມ່ນປະກອບດ້ວຍ: ການສຳເລັດການສ້າງໂຮງແຮມ ແລະ ສູນບັນເທີງຕ່າງໆຂອງໂຄງການ *Golden Boten City* ທີ່ແຂວງຫຼວງນ້ຳທາ (ຕິດກັບຊາຍແດນ ລາວ-ຈີນ), ຮ້ານຊັບພະສິນຄ້າຕ່າງໆທີ່ນະຄອນຫຼວງວຽງຈັນໂດຍຈີນ ແລະ ສິງກະໂປ; ການສືບຕໍ່ສ້າງສະໜາມກອຟໂດຍເກົາຫລີ. ນອກນັ້ນຍັງມີໂຄງການສ້າງໂຮງແຮມ ແລະ ຣີສອດທີ່ແຂວງຫຼວງພະບາງ, ສະຫວັນນະເຂດ ແລະ ຈຳປາສັກ.



## ຂະແໜງຊັບພະຍາກອນທຳມະຊາດ (ໂຄງການໄຟຟ້າ ແລະ ບໍ່ແຮ່)

ໃນປີ 2007 ການລົງທຶນຕ່າງປະເທດໃນຂະແໜງຊັບພະຍາກອນທຳມະຊາດໄດ້ເພີ່ມຂຶ້ນຢ່າງວ່ອງໄວ ຍ້ອນການສືບຕໍ່ການກໍ່ສ້າງໂຄງການໄຟຟ້າຕ່າງໆ ແລະ ການຂະຫຍາຍກິດຈະການຂອງໂຄງການ Phubia Mining. ຂະແໜງຊັບພະຍາກອນນີ້ກວມເກືອບ 90 ສ່ວນຮ້ອຍຂອງການລົງທຶນຕ່າງປະເທດທັງໝົດໃນປະເທດສຳລັບປີຜ່ານມາ.

- **ໂຄງການໃຫຍ່ດ້ານໄຟຟ້ານ້ຳຕົກ.** ນອກຈາກສອງເຂື່ອນໄຟຟ້າທີ່ມີຢູ່ໃນປະຈຸບັນ (ເທີນຫີນບູນ ແລະ ຫ້ວຍເຫາະ) ຍັງມີສາມໂຄງການໃຫຍ່ທີ່ກຳລັງກໍ່ສ້າງໃນ ສປປ ລາວ: ນ້ຳເທີນ 2, ນ້ຳງື່ມ 2 ແລະ ເຊຄະມານ 3. ການກໍ່ສ້າງໂຄງການດັ່ງກ່າວແມ່ນມີຜົນຄືບໜ້າດີ ແລະ ຄາດວ່າຈະທັນກັບກຳນົດເວລາ. ຕໍ່ໄປຍັງມີໂຄງການອື່ນໆທີ່ອາດຈະລົງມືກໍ່ສ້າງໃນໝໍ່ໆນີ້ ແລະ ໃຫ້ສຳເລັດໃນປີ 2012-2013: ໂຄງການເທີນຫີນບູນທີ່ຂະຫຍາຍ, ນ້ຳງື່ມ 3 (GOL/LHSE ຖືຫຸ້ນ 23%), ນ້ຳງຽບ 1 (GOL/LHSE ຖືຫຸ້ນ 20%) ແລະ ນ້ຳເທີນ 1 (GOL/LHSE ຖືຫຸ້ນ 20%). ນອກນັ້ນ ຍັງມີສອງໂຄງການທີ່ຈະກໍ່ສ້າງໂດຍຈີນບົນພື້ນຖານກໍ່ສ້າງ ແລະ ບໍລິຫານເອງ ໃນປີ 2008 ເພື່ອຂາຍໄຟໃຫ້ແກ່ ບ/ສ ໄຟຟ້າລາວ ເຊັ່ນ: ນ້ຳງື່ມ 5 ແລະ ນ້ຳລຶກ (1-2). ການກໍ່ສ້າງຄາດວ່າຈະສຳເລັດໃນປີ 2012.



- **ໂຄງການບໍ່ແຮ່ຕົ້ນຕໍໃນ ສປປ ລາວ.** ໃນສົກປີ 2006-07 ລັດຖະບານໄດ້ມີການປະເມີນຜົນການລົງທຶນດ້ານບໍ່ແຮ່ (ຄຸນນະພາບການລົງທຶນ) ແລະ ທົບທວນການອອກອານຸຍາດລົງທຶນເພື່ອປັບປຸງລະບຽບ ແລະ ສົ່ງເສີມການລົງທຶນທີ່ມີຄຸນນະພາບໃນຂະແໜງດັ່ງກ່າວ. ອີງໃສ່ຜົນການປະເມີນ ລັດຖະບານໄດ້ຫລຸດຈຳນວນໃບອານຸຍາດສຳປະທານ (ທີ່ອອກໃຫ້ກ່ອນໜ້ານີ້) ລົງເປັນ 112 ຈາກປະມານ 140 ໃນປີ 2006 (ສ່ວນໃຫຍ່ແມ່ນໂຄງການນ້ອຍທີ່ບໍ່ເຄື່ອນໄຫວ). ໃນຈຳນວນໂຄງການທີ່ມີຢູ່, 64 ໂຄງການແມ່ນລົງທຶນໂດຍຕ່າງປະເທດ (ໃນນັ້ນມີ 15 ໂຄງການທີ່ຂຸດຄົ້ນ, 22 ໂຄງການທີ່ກຳລັງຂຸດຄົ້ນວິໄຈ ແລະ 27 ໂຄງການທີ່ກຳລັງສຳຫລວດ). ໃນຈຳນວນທີ່ມີການຂຸດຄົ້ນ ໂຄງການເຊໂປນ ແລະ ພູເບ້ຍ (ລົງທຶນໂດຍບໍລິສັດລະດັບສາກົນຂອງອົດສະຕາລີ) ແມ່ນໂຄງການທີ່ໃຫຍ່ທີ່ສຸດໃນປະເທດ. ຮອດປະຈຸບັນ ມູນຄ່າການລົງທຶນໃນສອງໂຄງການໄດ້ເພີ່ມຂຶ້ນເຖິງ700 ລ້ານໂດລາ. ໂຄງການພູເບ້ຍຈະເລີ່ມຜະລິດ ແລະ ສົ່ງອອກຝຸ່ນທອງໃນປີ 2008. ນອກນັ້ນ ຍັງມີໂຄງການຂະໜາດນ້ອຍ-ກາງຫລາຍໂຄງການທີ່ດຳເນີນການຂຸດຄົ້ນແຮ່ທາດຕ່າງໆໂດຍ ຈີນ, ຫວຽດນາມ, ໄທ, ອົດສະຕາລີ ແລະ ເກົາຫລີ.



# ANNEX 4 – ໂຄງການຊ່ວຍເຫຼືອຕ່າງໆຂອງຜູ້ໃຫ້ທຶນໃນວຽກງານການປະຕິຮູບໃນ ສປປ ລາວ

## 1 – ການຄຸ້ມຄອງພາກລັດ

ADB

- *ການວາງແຜນລາຍຈ່າຍຂອງລັດ ເພື່ອຍຸດທະສາດການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ* (0,7 ລ້ານ US$, 2005-2007). ໂຄງການນີ້ຊ່ວຍຍົກລະດັບຄວາມສາມາດ ແລະ ໃຫ້ການແນະນຳ ເພື່ອ: (i) ປັບປຸງ ແລະ ຍົກລະດັບປະສິດທິພາບການຈັດສັນລາຍຈ່າຍຂອງລັດໂດຍສອດຄ່ອງກັບຈຸດປະສົງນະໂຍບາຍການເຕີບໂຕ ແລະ ຫລຸດຜ່ອນຄວາມທຸກຍາກຂອງ ລັດຖະບານ; ແລະ (ii) ຍົກລະດັບຄຸນນະພາບການວາງແຜນງົບປະມານ.
- *ໂຄງການປັບປຸງລະບົບຄຸ້ມຄອງການເງິນ* (0,85 ລ້ານໂດລາ, 2007-2008). ໂຄງການນີ້ມີຈຸດປະສົງເພື່ອຊ່ວຍປັບປຸງຄຸນນະພາບການຄຸ້ມຄອງການເງິນຂອງລັດໄປສູ່ລະດັບໃໝ່ທີ່ມີປະສິດທິພາບສູງກ່ວາເກົ່າ, ມີຄວາມຮັບຜິດຊອບ ແລະ ມີຄວາມໂປ່ງໃສ. ໂຄງການເຕັກນິກນີ້ຈະຊ່ວຍສະໜັບສະໜູນອົງປະກອບ B: ການປະຕິບັດງົບປະມານ, ການລາຍງານດ້ານບັນຊີ ແລະ ການເງິນ ຊຶ່ງນອນໃນໂຄງການ PEMSP.

ອົດສະຕາລີ/ໂອສເອດ

- *ໂຄງການຕ້ານການຄ້າມະນຸດໃນຂົງເຂດອາຊີ – ARTIP* (21 ລ້ານ A$ ສຳລັບ ສປປ ລາວ, ກຳປູເຈັຍ, ມຽນມາ, ໄທ ແລະ ອິນໂດເນເຊຍ, 2006-2011). ເປົ້າໝາຍຂອງໂຄງການແມ່ນເພື່ອປະກອບສ່ວນເຂົ້າໃນການຕ້ານການຄ້າມະນຸດຂ້າມແດນໃນຂົງເຂດ ອາຊີ. ຈຸດປະສົງຂອງໂຄງການແມ່ນແນໃສ່ສ້າງລະບົບການຕ້ານມະນຸດຂ້າມຊາດທີ່ມີການປະສານງານ ແລະ ມີປະສິດທິພາບ ແກ່ບັນດາ ລັດຖະບານໃນຂົງເຂດອາຊີ.
- *ແຜນງານຮ່ວມມືພັດທະນາອາຊຽນ-ອົດສະຕາລີ – AADCP* (45 ລ້ານ A$, 2002-2008). **ໂຄງການຮ່ວມມືລະດັບພາກພື້ນ**ແມ່ນໃຫ້ການສະໜັບສະໜູນວຽກງານການຄຸ້ມຄອງໃນຂົງເຂດອາກອນ, ທະນາຄານ, ການປະຕິບັດສິດທາງປັນຍາ ແລະ ການອອກແບບແຜນງານ ແລະ ໂຄງການ. ນອກນັ້ນ, ໂຄງການຍັງມີຈຸດສຸມທາງດ້ານການຄຸ້ມຄອງມາດຕະຖານ ແລະ ການປະເມີນຄວາມຖືກຕ້ອງ, ຍົກລະດັບຄວາມສາມາດດ້ານພາສີ, ໂຄງລ່າງກົດໝາຍດ້ານການຄ້າຜ່ານທາງອິນເຕີເນດ, ການເກັບກຳ ແລະ ລາຍງານຂໍ້ມູນການລົງທຶນຕ່າງປະເທດ, ຄວາມສາມາດແຂ່ງຂັນຂອງພາກເອກະຊົນ, ວຽກງານອານາໄມພືດ ແລະ ສັດທີ່ກ່ຽວພັນກັບການຄ້າ.

ຄະນະກຳມະທິການເອີລົບ (EC)

- *ໂຄງການສະໜັບສະໜູນການຫລຸດຜ່ອນຄວາມທຸກຍາກ PRSO3* (ໂຄງການເງິນຊ່ວຍເຫຼືອປີລະງວດ, 3 ລ້ານເອີໂຣ, 2008). ເປົ້າໝາຍໂຄງການແມ່ນປະກອບທຶນເຂົ້າງົບປະມານລັດເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນ NGPES/NSEDP ແລະ ການປະຕິຮູບນະໂຍບາຍຕ່າງໆ. ໂຄງການແມ່ນມີການປະສານກັບທະນາຄານໂລກ ແລະ ຍີ່ປຸ່ນ.

ຝະລັ່ງ

- *ການສ້າງຄວາມເຂັ້ມແຂງດ້ານຂີດຄວາມສາມາດແກ່ກະຊວງການເງິນ* (0,78 ລ້ານ US$ ແລະ ຊ່ຽວຊານ 1 ຄົນ, 2005-2008). ເປົ້າໝາຍຂອງໂຄງການແມ່ນແນໃສ່ປັບປຸງກົນໄກງົບປະມານ, ນຳໃຊ້ລະບົບຄອມພິວເຕີໃນວຽກງານພາສີ (ASYCUDA/Sydonia), ປັບປຸງການຕິດຕາມ ແລະ ກວດກາດ້ານງົບປະມານ ລວມທັງການຝຶກອົບຮົມພະນັກງານ ໃນກົມຕ່າງໆຂອງກະຊວງ, ການຝຶກອົບຮົມຄູຝຶກ ແລະ ສ້າງສູນຝຶກອົບຮົມພາຍໃນກະຊວງ.
- *ການສ້າງຂີດຄວາມສາມາດໃນການປະຕິບັດກົດໝາຍ ແລະ ພິວພັນສາກົນ* (1,6 ລ້ານ US$ ແລະ ຊ່ຽວຊານ 1 ຄົນ, 2003-2007). ຈຸດປະສົງຂອງໂຄງການແມ່ນເພື່ອສ້າງເຂັ້ມແຂງໃຫ້ແກ່ກະຊວງຍຸດຕິທຳ (MoJ), ກະຊວງການຕ່າງປະເທດ (MoFA) ແລະ ຫ້ອງການອາທິໄອຍະການ ໃນດ້ານການຄຸ້ມຄອງບໍລິຫານ ແລະ ການປະຕິບັດລະບຽບກົດໝາຍ.
- *ການປ້ອງກັນການຄ້າມະນຸດຂ້າມແດນໃນ ສປປ ລາວ* (0,0975 ລ້ານ US$, 2006-2007). ໂດຍຜ່ານການຈັດສຳມະນາ ແລະ ຝຶກອົບຮົມຕ່າງໆ ໂຄງການມີຈຸດປະສົງຍົກສູງຄວາມເຂົ້າໃຈແກ່ບັນດາເຈົ້າໜ້າທີ່ຕຳຫຼວດ ແລະ ທັດແໜ້ນການຮ່ວມມືລະຫວ່າງປະເທດດ້ານການຄ້າມະນຸດຂ້າມແດນ.
- *ສ້າງຄວາມເຂັ້ມແຂງດ້ານຄວາມສາມາດແກ່ ຄະນະກຳມະການແມ່ນ້ຳຂອງ-MRC* (0,975 ລ້ານ US$, 2007–2011). ໂຄງການໄດ້ປະກອບສ່ວນທີ່ປຶກສາ 2 ຄົນ ແກ່ກອງເລຂາຂອງ MRC ເພື່ອໃຫ້ຄຳປຶກສາແກ່ເຂົາເຈົ້າໃນການປະຕິບັດໂຄງການຕ່າງໆຂອງຕົນ.

ຍີ່ປຸ່ນ

- *ໂຄງການຍົກລະດັບຄວາມສາມາດ ຄຸ້ມຄອງແຜນງານລົງທຶນຂອງລັດ* (3 ລ້ານ US$, JICA – TCP 2004-2007). ໂຄງການແນໃສ່ປັບປຸງການຄຸ້ມຄອງການລົງທຶນຂອງລັດ (PIP) ໂດຍຮ່ວມມືກັບກະຊວງແຜນການ ແລະ ການລົງທຶນ (MPI).
- *ການສະໜັບສະໜູນຍົກລະດັບຄວາມສາມາດປົກຄອງຂອງທ້ອງຖິ່ນແກ່ PACSA* (0,3 ລ້ານ US$, JICA – ທີ່ປຶກສາ ແລະ ການຝຶກອົບຮົມ (2007-2008). ໂຄງການນີ້ແມ່ນແນໃສ່ຊ່ວຍການທົບທວນການພົວພັນລະຫວ່າງສູນກາງ ແລະ ທ້ອງຖິ່ນ ເພື່ອປັບປຸງດ້ານໂຄງສ້າງການປົກຄອງທ້ອງຖິ່ນ.
- *ການສຶກສາການປັບໂຄງສ້າງ SOE ໄລຍະ 3* (0.03 ລ້ານ US$, JBIC: 2007-2008). ໂຄງການ TA ນີ້ແມ່ນເພື່ອຊ່ວຍລັດຖະບານໃນການສັງລວມ ແລະ ກຳນົດທິດທາງການປັບໂຄງສ້າງ 4 ລັດວິສາຫະກິດ (SOE ໄລຍະ 3) ແລະ ປະກອບສ່ວນເຂົ້າໃນວຽກງານປະຕິຮູບນະໂຍບາຍຂອງລັດຖະບານພາຍໃຕ້ໂຄງການ PRSO.

ນິວຊີແລນ

- *ໂຄງການຝຶກອົບຮົມພາສາອັງກິດໃຫ້ເຈົ້າໜ້າທີ່ລັດ* (0,284 ລ້ານ US$, ກຳລັງປະຕິບັດ). ELTO ເປັນໂຄງການໄລຍະຍາວທີ່ໃຫ້ການຝຶກອົບຮົມແກ່ເຈົ້າໜ້າທີ່ລະດັບກາງດ້ານພາສາອັງກິດ. ໂຄງການໄດ້ກ້າວເຂົ້າໄລຍະໃໝ່ໃນຕົ້ນປີ 2003

ສິງກະໂປ

- *ໂຄງການສ້າງຄວາມສາມາດດ້ານຊັບພະຍາກອນມະນຸດ* (10,3 ລ້ານ US$, ສືບຕໍ່ແຕ່ປີ 1992). ສປປ ລາວ ແມ່ນປະເທດໜຶ່ງທີ່ເຂົ້າຮ່ວມໂຄງການຮ່ວມມືສິງກະໂປ (SCP). ຮອດເດືອນ ກັນຍາ 2007, ມີພະນັກງານຂອງລາວຈຳນວນ 5.100 ຄົນ ໄດ້ຮັບການຝຶກອົບຮົມຜ່ານໂຄງການດັ່ງກ່າວໃນ ຂົງເຂດຕ່າງໆ ເຊັ່ນ: ພາສາອັງກິດ, IT, ການສົ່ງເສີມດ້ານຄ້າ ແລະ ການຮັບຕ້ອນ.

- ***ສູນຝຶກອົບຮົມ ລາວ-ສິງກະໂປ*** (2 ລ້ານ US$, 2001-2008) ແມ່ນສ້າງຕັ້ງຂຶ້ນ ເພື່ອໃຫ້ການຝຶກອົບຮົມພາຍໃນແກ່ພະນັກງານລັດຂອງລາວໃນຂົງເຂດ IT, ສາທາລະນະສຸກ, ການວາງແຜນນະໂຍບາຍດ້ານເສດຖະກິດ ແລະ ການເງິນ, ການສອນພາສາອັງກິດ, ການຄຸ້ມຄອງດ້ານໄຂ້ຫວັດນົກ, ເຄື່ອງມືດ້ານຜະລິດຕະພາບ, ປະສິດທິພາບໃນການເຈລະຈາ, ຄວາມປອດໄພດ້ານ IT, ການສາງເຄືອຄ່າຍຄອມພິວເຕີ ແລະ ບຳລຸງຮັກສາ. ການຝຶກອົບຮົມຄູຝຶກກໍໄດ້ຈັດແກ່ຜູ້ບໍລິຫານ IT ແລະ ຄູສອນ.
- ***ໂຄງການຮ່ວມມື ສິງກະໂປ*** (ສືບຕໍ່ມາແຕ່ປີ 1992). ພາຍໃຕ້ໂຄງການຊ່ວຍເຫລືອດ້ານເຕັກນິກນີ້ ໄດ້ມີເຈົ້າໜ້າທີ່ລັດຖະບານຫລາຍກ່ວາ 49 ພັນຄົນ ຈາກ 166 ປະເທດກຳລັງພັດທະນາ ໄດ້ເຂົ້າຮ່ວມຫລັກສູດຕ່າງໆຂອງໂຄງການໃນຫລາຍຂົງເຂດ ເຊັ່ນ: IT, ການອຳນວຍຄວາມສະດວກດ້ານການຄ້າ, ສາທາລະນະສຸກ, ການຄຸ້ມຄອງທ່າເຮືອ, ການບິນພົນລະເຮືອນ, ການຄຸ້ມຄອງໄພທາຍະນະຕ່າງໆ.

ຊູແອດ/ຊີດາ

- ***ໂຄງການຍົກລະດັບຄວາມສາມາດຂອງສູນສະຖິຕິແຫ່ງຊາດ*** (3,2 ລ້ານ US$, 2005-2008). ໂຄງການແນໃສ່ສະໜອງຂໍ້ມູນສະຖິຕິທີ່ແນ່ນອນ ແລະ ມີຄຸນນະພາບແກ່ຜູ້ນຳໃຊ້. ໝາກຜົນໂຄງການແມ່ນເພື່ອໃຫ້ສູນສະຖິຕິມີ: 1) ແຜນງານສ້າງຕົວເລກສະຖິຕິຢ່າງເປັນລະບົບ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ, 2) ໂຄງສ້າງການຈັດຕັ້ງ ແລະ ວິທີເຮັດວຽກທີ່ມີປະສິດທິຜົນ ເພື່ອຄຸ້ມຄອງການສ້າງຕົວ ເລກສະຖິຕິຢ່າງປະຈຳ, 3) ຄວາມ ສາມາດດ້ານວິຊາສະເພາະພຽງພໍເພື່ອຜະລິດຕົວເລກສະຖິຕິຕາມລະດັບຄຸນນະພາບທີ່ກຳນົດໄວ້, 4) ການຈັດຕັ້ງເພື່ອຄຸ້ມຄອງການເງິນຢ່າງມີປະສິດທິຜົນ, 5) ເປັນຜູ້ປະສານລະບົບສະຖິຕິແຫ່ງຊາດໂດຍຕົ້ນຕໍ.
- ***ໂຄງການວິທະຍຸຂັ້ນແຂວງ*** (1,6 ລ້ານ US$, 2005-2009). ເປົ້າໝາຍໂຄງການລວມມີ: 1) ຍົກສູງຄວາມສາມາດຂອງຜູ້ບໍລິຫານ ແລະ ພະນັກງານຂອງວິທະຍຸກະຈາຍສຽງແຫ່ງຊາດ ແລະ ສະຖານີວິທະຍຸຂັ້ນແຂວງ 5 ແຫ່ງ ເພື່ອໃຫ້ການບໍລິການວິທະຍຸກະຈາຍສຽງທີ່ມີຄຸນນະພາບແກ່ປະຊາຊົນ, 2) ສ້າງຄວາມສາມາດຝຶກອົບຮົມແບບຍາວນານແກ່ວິທະຍຸກະຈາຍສຽງແຫ່ງຊາດ ແລະ ສະຖານີແຂວງເພື່ອສາມາດສືບຕໍ່ໃຫ້ການບໍລິການກະຈາຍສຽງຢ່າງຕໍ່ເນື່ອງ, ແລະ 3) ປັບປຸງອົງກອນ ສຳລັບຂະແໜງຂ່າວສານ ໃນ ສປປ ລາວ ໂດຍຜ່ານການແລກປ່ຽນທັດສະນະກ່ຽວກັບບົດບາດຂອງສື່ໃນສັງຄົມລະຫວ່າງ ສປປ ລາວ ກັບ ຊູແອດ.
- ***ຄະນະນິຕິກຳ*** (4,5 ລ້ານ US$, 2003-2009). ອົງການຊີດາ ໄດ້ໃຫ້ການຊ່ວຍເຫລືອແກ່ຄະນະນິຕິກຳຂອງມະຫາວິທະຍາໄລແຫ່ງ ຊາດ ເລີ່ມປີ 2000 ເປັນຕົ້ນມາ. ເປົ້າໝາຍລວມຂອງການຊ່ວຍເຫລືອ ແມ່ນເພື່ອຍົກລະດັບຄຸນນະພາບຂອງນັກຮຽນ. ເປົ້າໝາຍແມ່ນເພື່ອປັບປຸງຄວາມຮູ້ດ້ານເຕັກນິກ ແລະ ການສິດສອນແກ່ບັນດາຄູອາຈານຂອງຄະນະດັ່ງກ່າວ, ຍົກສູງຄວາມສາມາດໃນການຄຸ້ມຄອງບໍລິຫານ ແລະ ສ້າງສິ່ງຈູງໃຈແກ່ນັກຮຽນ.
- ***ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ ແຫ່ງຊາດ - NAFRI*** (12 ລ້ານ US$, 2007-2012). ເປົ້າໝາຍແມ່ນເພື່ອພັດທະນາເຕັກນິກທີ່ມີຜະລິດຕະພາບ ແລະ ຍືນຍົງ ແລະ ຂໍ້ແນະນຳດ້ານການຄຸ້ມຄອງທີ່ດິນເພື່ອຫລຸດຜ່ອນຄວາມທຸກຈົນ ແລະ ສ້າງຄວາມຮູ້ດ້ານເສດຖະກິດສັງຄົມສຳລັບການວາງນະໂຍບາຍລະດັບຊາດ; ເສີມຄວາມສາມາດແກ່ NAFRI ເພື່ອສາມາດປະຕິບັດພາລະບົດບາດຂອງຕົນໂດຍພັດທະນາຄວາມາສາມາດ ແລະ ອົງກອນ; ປັບປຸງການຄຸ້ມຄອງ, ແລກປ່ຽນ ແລະ ເຜີຍແຜ່ຂໍ້ມູນແກ່ຜູ້ຄົ້ນຄ້ວາ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໂດຍສະເພາະໃຫ້ແກ່ການ ບໍລິການດ້ານກະສິກຳ ແລະ ປ່າໄມ້ແຫ່ງຊາດ (NAFES).
- ***ສ້າງຄວາມເຂັ້ມແຂງດ້ານການຄຸ້ມຄອງສິ່ງແວດລ້ອມ (SEM)*** (8,7 ລ້ານ US$, ໄລຍະ II: 2005-2010). ເປົ້າໝາຍການຊ່ວຍເຫຼືອແມ່ນເພື່ອສ້າງຄວາມເຂັ້ມແຂງແກ່ອົງການ STEA ໃນການປະຕິບັດພາລະບົດບາດຂອງຕົນໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການຕ່າງໆ ໂດຍສະເພາະແມ່ນການປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ. ໂຄງການຍັງໄດ້ລົງເລິກກ່ຽວກັບການ ປະຕິບັດ ແລະ ການບັງຄັບໃຊ້ໃນຂັ້ນສູນກາງ ແລະ ແຂວງ ກ່ຽວກັບການປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ກິດຈະກຳການສຶກສາ ແລະ ສ້າງຈິດສຳນຶກກ່ຽວກັບສິ່ງແວດລ້ອມ.
- ***ໂຄງການສົ່ງເສີມການຈັດຕັ້ງປະຕິບັດແຜນຍຸດທະສາດດ້ານປ່າໄມ້ 2020, FSIP*** (ຊ່ວຍເຫລືອໂດຍ ອົງການ Sida ແລະ JICA, 2006-2011. ທຶນ Sida: 1,2 ລ້ານ US$). ການຊ່ວຍເຫລືອແມ່ນແນໃສ່ຍົກສູງຄວາມສາມາດຂອງກະຊວງກະສິກຳ-ປ່າໄມ້ ໃນການດຳເນີນ ແລະ ປະສານການຈັດຕັ້ງປະຕິບັດຍຸດທະສາດ 2020 ກັບບັນດາພາກສ່ວນຕ່າງໆທີ່ກ່ຽວຂ້ອງ (ກະຊວງຕ່າງໆ, ບັນດາຜູ້ໃຫ້ທຶນ, ຜູ້ລົງທຶນ, ອຳນາດການປົກຄອງຂັ້ນແຂວງ ແລະ ເມືອງ ແລະ ອົງການຈັດຕັ້ງມະຫາຊົນອື່ນໆ).

ອົງການພັດທະນາແນເທີແລນ (SNV)

- SNV ໃຫ້ການສະໜັບສະໜູນໂຄງການ " ເພີ່ມບົດບາດແມ່ຍິງໃນວຽກງານການຫລຸດຜ່ອນຄວາມທຸກຍາກ" ຂອງ UNDP ໃນການຍົກລະດັບເພື່ອປະຕິບັດນະໂຍບາຍ. ໂຄງການມີເປົ້າໝາຍໄລຍະກາງໃນການສົ່ງເສີມດ້ານບົດບາດຍິງ-ຊາຍ ແລະ ຊ່ວຍເຫລືອຜູ້ທຸກຈົນ, ຍົກສູງຄວາມຮູ້ດ້ານການວາງແຜນ ແລະ ການຈັດແຈງຊັບພະກອນພາຍໃນລັດຖະບານ ເພື່ອຊ່ວຍຂະບວນການຕັດສິນ ແລະ ການວາງນະໂຍບາຍ ແລະ ການວາງແຜນ.

ສະວິດເຊີແລນ (SDC)

- ***ການສ້າງແຜນທີ່ດ້ານເສດຖະກິດ-ສັງຄົມ ແລະ ຄວາມທຸກຍາກ*** (0,297 ລ້ານ US$, 2006-2008). ສະໜັບສະໜູນຄະນະກຳມະການອົງການແມ່ນ້ຳຂອງ (LNMCS) ແລະ ສູນສະຖິຕິແຫ່ງຊາດ (NSC) ໃນການສ້າງແຜນທີ່ດ້ານເສດຖະກິດ-ສັງຄົມ ແລະ ຄວາມທຸກຍາກໂດຍອີງໃສ່ຂໍ້ມູນດ້ານເສດຖະກິດບສັງຄົມ ແລະ ສິ່ງແວດລ້ອມທີ່ມີໃນໄລຍະຜ່ານມາ.
- ***ສະໜັບສະໜູນການກໍ່ຕັ້ງອົງການຄຸ້ມຄອງການເກັບກູ້ລະເບີດແຫ່ງຊາດ (NRA) ແລະ ການຈັດຕັ້ງປະຕິບັດແຜນງານເກັບກູ້ລະເບີດໃນ ສປປ ລາວ*** (3,9 ລ້ານ US$, 2006-2009). ໃຫ້ການຊ່ວຍເຫລືອອົງການ NRA ໃນການປັບປຸງການປະສານງານ ແລະ ຄຸ້ມຄອງວຽກງານການເກັບກູ້ລະເບີດ ແລະ ເອື້ອອຳນວຍຜູ້ເກັບກູ້ລະເບີດຂອງ ສປປ ລາວ ໃນການຂະຫຍາຍກິດຈະກຳ ແລະ ຍົກສູງປະສິດທິຜົນ ແລະ ຜະລິດຕະພາບຂອງອົງກອນ.

UNDP ແລະ ຜູ້ຮ່ວມໃຫ້ທຶນອື່ນໆ (EC, ແຟງລັງ, ລຸກແຊມບວກ, SDC, Sida ແລະ SNV)

- *ໂຄງການປະຕິຮູບການຄຸ້ມຄອງບໍລິຫານ ແລະ ປົກຄອງຂອງລັດ* : **ສະໜັບສະໜູນເພື່ອານບໍລິການທີ່ດີກ່ວາເກົ່າ (GPAR: SBSD ) -** (ມູນຄ່າ 10,343 ລ້ານ US$: UNDP-0,99 ລ້ານ US$; UNCDF – 0,7 ລ້ານ US$; SDC - 3,5 ລ້ານ US$; ລຸກແຊມບວກ - 4 ລ້ານ US$, ທຶນທີ່ຍັງບໍ່ພໍ –1,153 ລ້ານ US$). ໂຄງການແມ່ນຈັດຕັ້ງປະຕິບັດກອງທຶນຫລາຍຝ່າຍ ແລະ ແນໃສ່ຍົກສູງຄວາມສາມາດໃນການວາງແຜນຍຸດທະສາດ, ການສະໜອງທຶນ, ການຄຸ້ມຄອງ ແລະ ຕິດຕາມວຽກງານການປະຕິຮູບດ້ານການຄຸ້ມຄອງເພື່ອໃຫ້ບໍລິການທີ່ມີປະສິດທິພາບ, ມີຄວາມຮັບຜິດຊອບ ແລະ ໂປ່ງໃສ.
- *GPAR: ໂຄງການທົດລອງ ໄລຍະ II ຢູ່ ແຂວງຫລວງພະບາງ* (ມູນຄ່າລວມ 3,098 ລ້ານ US$: UNDP-0,59 ລ້ານ US$; SIDA-2,5 ລ້ານ US$, 2005-2009). ຈຸດປະສົງຄື ຊ່ວຍອຳນາດການປົກຄອງ ແຂວງຫລວງພະບາງ ອອກແບບ ແລະ ຈັດຕັ້ງປະຕິບັດລະບົບການຄຸ້ມຄອງຂັ້ນທ້ອງຖິ່ນທີ່ດີ

ເພື່ອສະໜອງການບໍລິການທີ່ກຸ້ມຄ່າໃຫ້ປະຊາຊົນ. ໂຄງການນີ້ ແມ່ນໃຫ້ການຊ່ວຍເຫລືອດ້ານການອອກແບບ ແລະ ປະຕິບັດການປັບປຸງດ້ານການປົກຄອງ ແລະ ການຄຸ້ມຄອງຂອງບັນດາກົມກອງຕ່າງໆ ເພື່ອປັບປຸງຄຸນນະພາບການບໍລິການຂອງເຂົາເຈົ້າທີ່ມີຕໍ່ປະຊາຊົນທ້ອງຖິ່ນ (ໂດຍສະເພາະດ້ານສຶກສາ ແລະ ສາທາ) ແລະ ຊຸກຍູ້ການປະກອບກິດຈະການ ແລະ ການພັດທະນາ ທຸລະກິດສຳລັບຜູ້ທຸກຍາກ.

- *GPAR: ໂຄງການທົດລອງ ຢູ່ ແຂວງຊຽງຂວາງ* (ມູນຄ່າລວມ 2,0 ລ້ານ US$: SDC-1,5 ລ້ານ US$, UNDP-0,5 ລ້ານ US$, 2005-2008). ໂຄງການຈະທົດລອງປັບປຸງການບໍລິຫານຄຸ້ມຄອງ ແລະ ການປົກຄອງຂອງລັດ ໂດຍເນັ້ນໜັກການເພີ່ມທະວີການບໍລິການແບບມີສ່ວນຮ່ວມຢ່າງມີປະສິດທິພາບໃນຂະແໜງກະສິກຳ ແລະ ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງ ແລະ ຄວາມໂປ່ງໃສດ້ານການເງິນ. ໂຄງການຈະອຳນວຍການປັບປຸງໂຄງສ້າງການຈັດຕັ້ງເພື່ອສ້າງສະພາບແວດລ້ອມເອື້ອອຳນວຍໂດຍສະເພາະສຳລັບຊາວນາ ແລະ ຜູ້ປະກອບກິດຈະການໃນທ້ອງຖິ່ນ ໂດຍເພີ່ມທະວີການມີສ່ວນຮ່ວມ ແລະ ຄວາມເປັນເຈົ້າການຂອງປະຊາຊາຊົນ.
- **ໂຄງການ GPAR ຢູ່ແຂວງສາລະວັນ – ໂຄງການປັບປຸງການບໍລິຫານຄຸ້ມຄອງ, ການປົກຄອງຂອງລັດ ແລະ ການສະໜອງການບໍລິການແບບແບ່ງຂັ້ນ.** (ມູນຄ່າລວມ 2,8 ລ້ານ US$; UNCDF- 1,9 ລ້ານ US$, UNDP- 0,2 ລ້ານ US$, EU- 0,6 ລ້ານ US$, 2005-2009). ໂຄງການນີ້ ໃຫ້ການສະໜັບສະໜູນໃນທິກຊີ້ເຂດວຽກງານຕົ້ນຕໍ ຄື: (i) ການສ້າງແຜນງານ ແລະ ງົບປະມານຢູ່ຂັ້ນທ້ອງຖິ່ນເພື່ອຜູ້ທຸກຍາກ; (ii) ການກໍ່ສ້າງໂຄງລ່າງ ພື້ນຖານ ແລະ ສະໜອງການບໍລິການຢ່າງມີປະສິດທິພາບ ແລະ ໂປ່ງໃສ; (iii) ການປະກອບທຶນ ແລະ ຄຸ້ມຄອງການເງິນ ໃນວຽກງານການໃຫ້ບໍລິການຂອງລັດໃນຂັ້ນທ້ອງຖິ່ນ; (iv) ປັບປຸງການຈັດຕັ້ງຂັ້ນແຂວງ, ເມືອງ ແລະ ຕາແສງ; (v) ຄຸ້ມຄອງຊັບພະຍາກອນມະນຸດ ແລະ ພັດທະນາຄວາມສາມາດ; ແລະ (vi) ສະໜອງຂໍ້ມູນເພື່ອວາງນະໂຍບາຍລະດັບຊາດ ບົນພື້ນຖານປະສົບການຂອງໂຄງການຢູ່ ແຂວງສາລະວັນ.
- *ໂຄງການ GPAR ເຊກອງ* (ລວມ 1,7 ລ້ານ US$, 2007-2010: UNDP - 0.7 ລ້ານ ແລະ ແຫລ່ງອື່ນ -1 ລ້ານ). ໂຄງການນີ້ແມ່ນສຸມໃສ່ການປັບປຸງການເຂົ້າຫາການບໍລິການຂອງລັດແກ່ປະຊາຊົນບັນດາຊົນເຜົ່າໃນແຂວງ. ໂດຍຜ່ານກອງທຶນພັດທະນາເມືອງ (DDF) ຈະໄດ້ມີການພັດທະນາລະບົບການຄຸ້ມຄອງ ແລະ ເປັນເຈົ້າຕົນເອງໃນລະດັບເມືອງ ແລະ ບ້ານ.
- *ໂຄງການຊ່ວຍເຫລືອວິທະຍຸກະຈາຍສຽງ - Khoun Radio* (ລວມ 0.2 ລ້ານ ໂດລາ, 2006-2007). ໂຄງການ ແມ່ນແນໃສ່ເພີ່ມຂະຫຍາຍການເຂົ້າເຖິງຂໍ້ມູນຂ່າວສານ ໂດຍສະເພາະແກ່ປະຊາຊົນບັນດາເຜົ່າໃນຊົນເຂດຊົນນະບົດ. ພ້ອມນັ້ນກໍເພີ່ມກະບອກສຽງ ແລະ ການມີສ່ວນຮ່ວມຂອງຊຸມຊົນທ້ອງຖິ່ນໃນການຜະລິດຂໍ້ມູນທີ່ກ່ຽວຂ້ອງຕ່າງໆສຳລັບເຂົາເຈົ້າເອງ.
- *ໂຄງການສ້າງຄວາມເຂັ້ມແຂງໃຫ້ສະພາແຫ່ງຊາດຂອງ ສປປ ລາວ* (1,5 ລ້ານ US$: EU – 1,12 ລ້ານ US$ ແລະ UNDP – 0,41 ລ້ານUS$, 2004 - 2007). ໂຄງການນີ້ສຶກສາຍຸດທະສາດໄລຍະຍາວກ່ຽວກັບຂົງເຂດວຽກງານທີ່ຕ້ອງການດ້ານການຊ່ວຍເຫລືອເພື່ອອຳນວຍໃຫ້ສະພາແຫ່ງຊາດໃນການປະຕິບັດໜ້າທີ່ໄດ້ກຳນົດໃນລັດຖະທຳມະນູນ.
- *ໂຄງການປັບປຸງເອກະສານກົດໝາຍສາກົນຢູ່ ສປປ ລາວ-ໄລຍະ II* (1,26 ລ້ານ US$: ແຟງລັງ – 0,65 ລ້ານ, EU-0,39 ລ້ານ ແລະ UNDP–0,08 ລ້ານ US$, 2005-2008). ໂຄງການນີ້ແມ່ນແນໃສ່ຍົກລະດັບຄວາມສາມາດຂອງກົມສົນທິສັນຍາ ແລະ ກົດໝາຍ ຂອງກະຊວງການຕ່າງປະເທດ ໃນການປັບປຸງກົນໄກເຜີຍແຜ່, ການປະຕິບັດ ແລະ ລາຍງານກ່ຽວກັບພັນທະຂອງປະເທດຕໍ່ສາກົນ.
- *ເພີ່ມທະວີການຮ່ວມມືຂອງລັດຖະບານກັບອົງການຈັດຕັ້ງສັງຄົມຕ່າງໆເພື່ອຫລຸດຜ່ອນຄວາມທຸກຍາກ* (UNDP: 1,1 ລ້ານ US$). ໂຄງການມີຈຸດປະສົງຊຸກຍູ້ໃຫ້ໃຫ້ປະຊາຊົນມີສ່ວນຮ່ວມໃນດ້ານນະໂຍບາຍຂອງລັດ, ການພັດທະນາທ້ອງຖິ່ນ ແລະ ປະເທດຊາດ ໂດຍສ້າງຄວາມເຂັ້ມແຂງດ້ານການຮ່ວມມືລະຫວ່າງລັດ ແລະ ອົງການສັງຄົມໃນການໃຫ້ການບໍລິການເພື່ອຜົນປະໂຫຍດຂອງມະຫາຊົນ ແລະ ການຫລຸດຜ່ອນຄວາມທຸກຍາກ.
- *ເພີ່ມປະສິດທິຜົນຂອງກອງປະຊຸມໂຕະມົນເພື່ອຍົກສູງປະສິດທິພາບຂອງການຊ່ວຍເຫລືອ ແລະ ໝາກຜົນຂອງການພັດທະນາ* (ລວມ 2,5 ລ້ານ US$: ADB - 0,5 ລ້ານ US$; ລຸກແຊມບວກ - 0,5 ລ້ານ US$; UNDP - 1,5 ລ້ານ US$). ໂຄງການມີຈຸດປະສົງຊ່ວຍເຫລືອລັດຖະບານໃນການຊີ້ນຳ ແລະ ປະສານງານດ້ານການຊ່ວຍເຫລືອໃຫ້ມີປະສິດທິພາບໂດຍສະເພາະໃນລະດັບມະຫາພາກ, ຂະແໜງການຕ່າງໆ ແລະ ເພື່ອໃຫ້ການຊ່ວຍເຫລືອມີຄວາມໂປ່ງໃສ ແລະ ຄາດຄະເນໄດ້; ເຊື່ອມໂຍງເຂົ້າກັບຂະບວນການວາງແຜນແຫ່ງຊາດ ແລະ ການສ້າງແຜນງົບປະມານ; ປະກອບສ່ວນຢ່າງມີປະສິດທິພາບຕໍ່ການບັນລຸໝາກຜົນຂອງການພັດທະນາ.
- *ໂຄງການເສີມຂະຫຍາຍຍຸຕິທຳ* (1,8 ລ້ານ US$, 2006–2010). ໂຄງການທະນາຍຄວາມ LBA ໄລຍະສອງ "ຂະຫຍາຍການເຂົ້າຫາຄວາມຍຸຕິທຳໂດຍຜ່ານສະມາຄົມທະນາຍຄວາມລາວ" ແມ່ນສືບຕໍ່ຜົນສຳເລັດຂອງໂຄງການທີ່ຜ່ານມາ ແລະ ສຸມໃສ່ສາມຂົງເຂດວຽກງານລຸ່ມນີ້: ການຍົກລະດັບອົງກອນ, ການຊ່ວຍເຫລືອດ້ານການສຶກສາ ແລະ ກົດໝາຍ.
- *ການສະໜັບສະໜູນ ການຈັດຕັ້ງປະຕິບັດແຜນການ 5 ປີ ຄັ້ງທີ 6 (2006-2010)* (2.4 ລ້ານ US$: UNDP: 0,8 ລ້ານ US$, 2006–2010). ໂຄງການມີຈຸດປະສົງສະໜັບສະໜູນການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ 6 (2006–2010) ລວມທັງຍຸດທະສາດການຫລຸດຜ່ອນຄວາມທຸກຍາກ ແລະ ເປົ້າສະຫັດສະວັດ (MDGs) ແລະ ການຕິດຕາມ ແລະ ປະເມີນຜົນ.
- *ການໃຫ້ອຳນາດແກ່ແມ່ຍິງເພື່ອຫລຸດຜ່ອນຄວາມທຸກຍາກ (GEPR)* ($1.7 ລ້ານ: UNDP – $0,28 ລ້ານ, 2006-2009). ໂຄງການມີເປົ້າໝາຍ 1) ສ້າງຄວາມສະເໝີພາບລະຫວ່າງເພດ, ຄວາມຮູ້ດ້ານດ້ານການວາງແຜນ ແລະ ຈັດແບ່ງຊັບພະຍາກອນ ແກ່ສະຫະພັນແມ່ຍິງ ແລະ ກຳມະທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ກະຊວງແຜນການ ແລະ ການລົງທຶນ ແລະ ສະພາແຫ່ງຊາດ; 2) ເພື່ອສະໜັບສະໜູນຂະບວນການຕັດສິນ, ການວາງນະໂຍບາຍ ແລະ ວາງແຜນຕ່າງໆ, ການວິເຄາະນະໂຍບາຍດ້ານບົດບາດຍິງ-ຊາຍ ສຳລັບລັດຖະບານ; 3) ສ້າງຂີດຄວາມສາມາດໄລຍະຍາວແກ່ NCAW ແລະ GRID; ແລະ ສ້າງການຮ່ວມມືດ້ານຄວາມສະເໝີພາບຍິງ-ຊາຍ.
- *ສ້າງຄວາມເຂັ້ມແຂງດ້ານການລາຍງານການພັດທະນາມະນຸດແຫ່ງຊາດ* [NHDR]: (UNDP: 0,778 ລ້ານ US$; 2004-2009). ໂຄງການມີຈຸດປະສົງ: 1) ຊ່ວຍການພັດທະນາຂີດຄວາມສາມາດຂອງສູນສະຖິຕິແຫ່ງຊາດໃນການເກັບກຳ ແລະ ວິເຄາະຂໍ້ມູນດ້ານເສດຖະກິດ-ສັງຄົມ; 2) ສ້າງບົດລາຍງານສະບັບທີສີ່ກ່ຽວກັບການຈ້າງງານ ແລະ ວິຖີຊີວິດໃນ ສປປ ລາວ ຈາກແງ່ຂອງການພັດທະນາມະນຸດ, ໃຫ້ຂໍ້ແນະນຳດ້ານນະໂຍບາຍສຳລັບແຜນການຫ້າປີຄັ້ງທີ 7; ແລະ 3) ສ້າງຍຸດທະສາດການເຜີຍແຜ່ບົນຫລັກການຄວາມເປັນເຈົ້າການຂອງປະເທດ.

*ທະນາຄານໂລກ (WB)*

- *ການສະໜັບສະໜູນໂຄງການ PEMSP ແລະ ການຈັດຕັ້ງປະຕິບັດກົດໝາຍງົບປະມານ* (ໂດຍຜ່ານໂຄງການສ້າງຂີດຄວາມສາມາດດ້ານການຄຸ້ມຄອງການເງິນ FMCBP, ລວມ 11 ລ້ານ US$, 2002-2011). ໂຄງການດັ່ງກ່າວແມ່ນສະໜັບສະໜູນການປະຕິຮູບໃນສາມຂົງເຂດໃຫຍ່: ຂະແໜງທະນາຄານ-ການເງິນ, ພາກລັດວິສາຫະກິດ ແລະ ການສ້າງຂີດຄວາມສາມາດດ້ານການຄຸ້ມຄອງການເງິນພາກລັດ. ໂຄງການໄດ້ໃຫ້ການຊ່ວຍເຫລືອ

ໃນການຈັດຕັ້ງປະຕິບັດກົດໝາຍງົບປະມານໃໝ່ໃນຂົງເຂດ: 1) ການສ້າງກອບກົນໄກການແບ່ງລາຍຮັບ; 2) ການຈັດ ຕັ້ງປະຕິບັດ ສາລະບານບັນຊີ ແລະ ສາລະບານງົບປະມານ; 3) ການລວມສູນຄັງເງິນ; 4) ການສ້າງຄວາມເຂັ້ມແຂງຂອງການກວດສອບ ພາຍນອກ.

- *ໂຄງການສະໜັບສະໜູນການຫລຸດຜ່ອນຄວາມທຸກຈົນ PRSO* (ໂຄງການໄລຍະສອງ ສຳລັບປີ 2008-2011 (PRSO4, 5, 6 ແລະ 7) ໂດຍມີທຶນຊ່ວຍເຫລືອຈາກທະນາຄານໂລກປະມານປີລະ 10 ລ້ານ US$ ແລະ ຄາດວ່າຜູ້ໃຫ້ທຶນອື່ນໆ ເຊັ່ນ: EC, ຍີ່ປຸ່ນ ແລະ ອິດສະຕາລີ). ເປົ້າໝາຍຫລັກຂອງໂຄງການແມ່ນເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນ NGPES/NSEDP ແລະ ປະກອບສ່ວນທຶນຮອນເພີ່ມເຕີມເຂົ້າງົບປະມານຂອງລັດ ແລະ ການປະຕິຮູບດ້ານນະໂຍບາຍໃນຂົງເຂດ: ການຄຸ້ມຄອງການເງິນພາກລັດ, ຂະແໜງທະນາຄານ ແລະ ການເງິນ, ການປະຕິຮູບພາກລັດວິສາຫະກິດ, ສາທາ, ສຶກສາ, ໂຄງລ່າງ ແລະ ການຄຸ້ມຄອງລາຍຮັບ.

## 2– ການປະຕິຮູບພາກລັດວິສາຫະກິດ ແລະ ທະນາຄານ-ການເງິນ

ADB

- *ໂຄງການປັບປຸງລະບົບທະນາຄານ* (15 ລ້ານ US$ 2002-2007). ແຜນງານມີຈຸດປະສົງສະໜັບສະໜູນລັດຖະບານ (ທະນາຄານ ສປປ ລາວ, ກະຊວງການເງິນ) ໃນການຊຸກຍູ້ສົ່ງເສີມການຮັບ ແລະ ນຳໃຊ້ເງິນຝາກໃຫ້ມີປະສິດທິຜົນ ແລະ ຮັບປະກັນສ້າງລະບົບທະນາຄານໃຫ້ເຂັ້ມແຂງ ແລະ ສາມາດສະໜັບສະໜູນການຂະຫຍາຍຕົວຂອງ ພາກເອກະຊົນ ແລະ ຂະຫຍາຍເຄືອຄ່າຍໄປສູ່ເຂດຊົນນະບົດ.
- *ໂຄງການປັບປຸງການຄຸ້ມຄອງບໍລິຫານທະນາຄານ SOCBs II* (0,9 ລ້ານ US$, 2002-2007). **ໂຄງການ** TA ນີ້ ແມ່ນເພື່ອຊ່ວຍລັດຖະບານໃນການເພີ່ມທະວີການຕິດຕາມກວດກາການປັບໂຄງສ້າງທະນາຄານ ລວມມີ: 1) ສ້າງຍຸດທະ ສາດ; 2) ພັດທະນາຊັບພະຍາກອນມະນຸດ (HR); 3) ແກ້ໄຂ NPL ແຕ່ລະກໍລະນີ; ແລະ 4) ວາງກອບລະບຽບກົດໝາຍ ເພື່ອແກ້ໄຂ NPL ລວມທັງ ຈັດຕັ້ງພະແນກຄະດີການຄ້າຢູ່ສານ ແລະ ປັບປຸງກອບກົດໝາຍດ້ານການດຳເນີນທຸລະກິດ.
- *ການສ້າງຄວາມທັນສະໃໝແກ່ພາກທະນາຄານເພື່ອສະໜັບສະໜູນການຂະຫຍາຍການບໍລິການ, ເພີ່ມປະສິດທິຜົນ ແລະ ການຄຸ້ມຄອງບໍລິຫານ* (0.65 ລ້ານ US$, 2005-2007). ເປົ້າໝາຍຂອງການຊ່ວຍເຫລືອຫລັາແມ່ນເພື່ອສົ່ງເສີມການຫລຸດຜ່ອນຄວາມທຸກຈົນໃນປະເທດ ໂດຍການຫລຸດຜ່ອນຄວາມແຕກຕ່າງລະຫວ່າງ ສປປ ລາວ ກັບປະເທດໃກ້ຄຽງ ໃນການນຳໃຊ້ເຕັກໂນໂລຊີ ໃນພາກທະນາຄານ ໂດຍສະເພາະແມ່ນເຕັກໂນໂລຊີດ້ານຂໍ້ມູນ ແລະ ສື່ສານ (ICT).
- *ໂຄງການພັດທະນາຂະແໜງການເງິນຊົນນະບົດ* (7.7 ລ້ານ US$, 2006-2009). ໂຄງການແມ່ນສະໜັບສະໜູນ: (i) ສ້າງກອບ ນະໂຍບາຍທີ່ເອື້ອອຳນວຍແກ່ການບໍລິການດ້ານການເງິນຊົນນະບົດ ແລະ ຈຸນລະພາກ ໂດຍພາກລັດ ແລະ ເອກະຊົນ; (ii) ສ້າງສະພາບແວດລ້ອມດ້ານການຄຸ້ມຄອງ ແລະ ຊີ້ນຳແກ່ບັນດາສະຖາບັນການເງິນຊົນນະບົດ ແລະ ຈຸລະພາກ ທັງພາກລັດ ແລະ ເອກະຊົນ; (iii) ຫັນທະນາຄານສົ່ງເສີມກະສິກຳໃຫ້ເປັນສະຖາບັນການເງິນຊົນນະບົດທີ່ສາມາດກຸ້ມຕົນເອງດ້ານການເງິນ ແລະ ເຄື່ອນໄຫວ ທຸລະກິດໂດຍອີງໃສ່ຕະຫລາດ; (iv) ສ້າງສະພາບແວດລ້ອມທີ່ເອື້ອອຳນວຍແກ່ຂະແໜງການເງິນຊົນນະບົດ ແລະ ຈຸລະພາກ.
- *ໂຄງການການພັດທະນາຂະແໜງການເງິນຊົນນະບົດ* (2,3 ລ້ານ US$, 2006-2009). ຈຸດປະສົງ ຄື: (i) ຍົກລະດັບຄວາມສາມາດຄຸ້ມຄອງສະຖາບັນການເງິນຈຸລະພາກຂອງທະນາຄານ ສປປ ລາວ; (ii) ຊ່ວຍທະນາຄານ APB ໃນການຈັດຕັ້ງ ປະຕິບັດ ການຄຸ້ມຄອງຄວາມສ່ຽງ, ການບັນຊີ ແລະ ວຽກງານ MIS ຕາມແຜນປັບໂຄງສ້າງ; ແລະ (iii) ຍົກລະດັບລະບົບ ICT ຂອງ ທະນາຄານສົ່ງເສີມກະສິກຳ.
- *ການສ້າງຄວາມເຂັ້ມແຂງດ້ານອົງກອນແກ່ຂະແໜງການເງິນຊົນນະບົດ* (ໂຄງການ TA: 0.7 ລ້ານ ໂດລາ, 2007-2009). ເປົ້າໝາຍຂອງໂຄງການແມ່ນເພື່ອຊ່ວຍ ເຫລືອລັດຖະບານໃນການ (i) ປະສານ ແລະ ເຊື່ອມການປະຕິຮູບນະໂຍບາຍດ້ານການເງິນຊົນນະບົດ ແລະ ຈຸລະພາກ ແລະ ການປະຕິບັດໂຄງການ, (ii) ປະຕິບັດແຜນຂ້າມຜ່ານການປ່ອຍເງິນກູ້ນະໂຍບາຍ ແລະ ການເພີ່ມທຶນໂດຍອີງໃສ່ຜົນການເຄື່ອນໄຫວຂອງທະນາຄານ APB ເພື່ອຮັບປະກັນການຂ້າມຜ່ານໄປສູ່ກົນໄກທຸລະກິດພາຍໃນ ສາມປີ; (iii) ວາງກົນໄກທີ່ງ່າຍດາຍ, ນະໂຍບາຍ ແລະ ລະບຽບການຕ່າງໆ ສຳລັບການປ່ອຍເງິນກູ້ນະໂຍບາຍທີ່ຍັງເຫລືອ; ແລະ (iv) ຊ່ວຍ APB ໃນການສ້າງຂີດຄວາມສາມາດໃນການຄຸ້ມຄອງ ຊັບພະຍາກອນມະນຸດ.
- *ຍົກລະດັບລະບົບ ICT ແລະ MIS ຂອງທະນາຄານ APB* (0,472 ລ້ານ US$, 2007-2009). ໂຄງການຈະຊ່ວຍທະນາຄານ APB ໃນການ: 1) ວາງແຜນ ແລະ ຈັດຕັ້ງປະຕິບັດການປະມູນ, ການຄັດເລືອກ ແລະ ການເຮັດສັນຍາກັບຜູ້ຮັບເໝົາ ແລະ ຜູ້ໃຫ້ບໍລິການດ້ານໂຄງລ່າງການສື່ສານທີ່ຈ່າຍໂດຍໂຄງການ; 2) ຍົກລະດັບຂີດຄວາມສາມາດແກ່ພະນັກງານດ້ານ ICT ເພື່ອໃຫ້ສາມາດບໍລິຫານການຍົກລະດັບລະບົບ ICT; ແລະ 3) ວາງແຜນ ແລະ ປະຕິບັດການນຳໃຊ້ລະບົບດັ່ງກ່າວໃນທຸກສາຂາຂອງ APB.
- *ສະໜັບສະໜູນການເງິນຈຸລະພາກເພື່ອຄົນທຸກຍາກ* (1,98 ລ້ານ US$, 2007-2010). ໂຄງການ JFPR TA ຈະຊ່ວຍພັດທະນາເຄືອຄ່າຍສະຖາບັນການເງິນຈຸລະພາກໃນ ສປປ ລາວ. ໂຄງການຈະ (1) ສ້າງກອງທຶນການເງິນຈຸລະພາກ (MFF) ເພື່ອໃຫ້ປະກອບສ່ວນທຶນຊ່ວຍເຫລືອຫລັາແກ່ສະຖາບັນການເງິນຈຸລະພາກ (MFI) ທີ່ເອົາໃຈໃສ່ດ້ານການນຳໃຊ້ປະສົບການທີ່ດີ, ຄວາມຍືນຍົງ ແລະ ການຫລຸດຜ່ອນຄວາມທຸກຍາກ ຊຶ່ງຖ້າປາສະຈາກການຊ່ວຍເຫລືອຂອງກອງທຶນແມ່ນບໍ່ອາດສຳເລັດຜົນ; ຊ່ວຍທະນາຄານແຫ່ງ ສປປ ລາວ ໃນການຍົກລະດັບຂີດຄວາມສາມາດດ້ານການຊີ້ນຳກວດກາການເຄື່ອນໄຫວຂອງ MFI, 3) ເຜີຍແຜ່ປະສົບການຕ່າງໆທີ່ດີແກ່ບັນດາຜູ້ປະກອບການດ້ານການເງິນຈຸລະພາກ ແລະ ເຈົ້າໜ້າລັດຖະການ.

*ອົງການກອງທຶນສາກົນ (IMF)*

- ຄະນະຕິດຕາມກວດກາປະຈຳປີ (Article IV) ແລະ ການປະເມີນສະພາບເສດຖະກິດມະຫາພາກປະຈຳທຶກເດືອນ (ໜັງສືການປະເມີນ).
- ການຊ່ວຍເຫລືອດ້ານເຕັກນິກດ້ານການຄຸ້ມຄອງການເງິນ (ໂດຍສະເພາະດ້ານວຽກງານພາສີ), ວຽກງານທະນາຄານກາງ ແລະ ຂໍ້ມູນສະຖິຕິຕ່າງໆ.
- ການຝຶກອົບຮົມ. ການຈັດຫລັກສູດໄລຍະສັ້ນສຳລັບພະນັກງານລັດໃນດ້ານເສດຖະກິດ ແລະ ການເງິນ ທີ່ສະຖາບັນ IMF (ຢູ່ວໍຊິງຕັນດີຊີ) ແລະ ສະຖາບັນຝຶກອົບຮົມໃນພູມີພາກຕ່າງໆ (ສິງກະໂປ, ວຽນນາ), ແລະ ທຶນການສຶກສາ ທີ່ ໂອສະຕາລີ ແລະ ຍີ່ປຸ່ນ.

*ຍີ່ປຸ່ນ*

- *ໂຄງການສະໜັບສະໜູນການຫລຸດຜ່ອນຄວາມທຸກຈົນ PRSO3* (4,6 ລ້ານ US$, 2008). ເປົ້າໝາຍຫລັກຂອງໂຄງການແມ່ນເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນ NGPES/NSEDP ແລະ ປະກອບ ສ່ວນທຶນຮອນເພີ່ມເຕີມເຂົ້າງົບປະມານຂອງລັດໂດຍການເຂົ້າຮ່ວມໂຄງການ PRSO3 ກັບທະນາຄານໂລກ ແລະ ປ່ອຍເງິນກູ້ເປັນ ເງິນເຍັນແກ່ລັດຖະບານລາວ. ສັນຍາເງິນກູ້ ໄດ້ເຊັນກັນໃນເດືອນ ກຸມພາ 2008.

- ***ການຊ່ວຍເຫລືອດ້ານນະໂຍບາຍ ແລະ ສະຖິຕິການເງິນ*** (0,5 ລ້ານ US$, JICA; 2005-2008). ໂຄງການຮ່ວມມືນີ້ ໄດ້ສະໜອງ ທີ່ປຶກສາ 1 ທ່ານ ປະຈຳທີ່ ກົມນະໂຍບາຍການເງິນຂອງກະຊວງການເງິນ ແລະ ຈັດການຝຶກອົບຮົມຫລາຍຊຸດຢູ່ຍີ່ປຸ່ນ ເພື່ອຊ່ວຍປັບປຸງຂໍ້ມູນສະຖິຕິ ແລະ ນະໂຍບາຍການເງິນຂອງລັດຖະບານ.
- ***ການສ້າງຂີດຄວາມສາມາດສຳລັບໂຄງການ PEMSP*** (JICA: 2008-2011). ເປົ້າໝາຍໂຄງການແມ່ນເພື່ອໃຫ້ການຊ່ວຍເຫລືອໃນການສ້າງກອບແຜນການພັດທະນາຊັບພະຍາກອນມະນຸດໃນກະຊວງການເງິນພາຍໃຕ້ໂຄງການ PEMSP ແລະ ຈັດການຝຶກອົບຮົມຕ່າງໆອີງໃສ່ແຜນດັ່ງກ່າວ.

ລຸກແຊມບວກ

- ***ການຝຶກອົບຮົມດ້ານການທະນາຄານ ແລະ ການເງິນ*** (2 ລ້ານເອີໂຣ, 2008–2010). ໂຄງການມີຈຸດປະສົງຍົກລະດັບປະສິດທິຜົນໂດຍລວມຂອງພາກທະນາຄານ ໃນ ສປປ ລາວ ໂດຍສອດຄ່ອງກັບເປົ້າໝາຍທີ່ຕັ້ງໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມ (2006 – 2010). ໃນນັ້ນມີການຍົກລະດັບຄວາມສາມາດດ້ານໂຄງລ່າງ, ການບໍລິຫານ ແລະ ການສິດສອນຂອງໂຮງຮຽນສະຖາບັນທະນາຄານ. ຫລັກສູດການທະນາຄານຂັ້ນສູງຈະໄດ້ຮັບການພັດທະນາເພື່ອຍົກສູງຄວາມສາມາດຂອງພະນັກງານດ້ານການທະນາຄານ.

*ອົງການຊີດາ*

- ***ໂຄງການປັບປຸງການຄຸ້ມຄອງການເງິນ*** (3,20 ລ້ານ US$, 2004-2008). ຈຸດປະສົງລວມແມ່ນເພື່ອປະກອບສ່ວນຫລຸດຜ່ອນຄວາມທຸກຍາກໂດຍຍົກລະດັບຄວາມສາມາດຂອງ ສປປ ລາວ ເພື່ອເພີ່ມທະວີການເກັບລາຍຮັບ. ໂຄງການປະກອບດ້ວຍນະໂຍບາຍ ແລະ ການບໍລິຫານອາກອນ, ພັດທະນາຊັບພະຍາກອນມະນຸດ, ການຈັດຕັ້ງ ແລະ ຄຸ້ມຄອງ ແລະ ພັດທະນາ ICT.

ກຸ່ມທະນາຄານໂລກ - WBG (WB, IFC-MPDF)

- ***ໂຄງການສະໜັບສະໜູນການຫລຸດຜ່ອນຄວາມທຸກຍາກ PRSO*** (ລາຍລະອຽດຂອງໂຄງການໃນຂໍ້ 3.1 ຂ້າງເທິງກ່ຽວກັບທະນາຄານໂລກ).
- ***ໂຄງການສ້າງຂີດຄວາມາສາມາດດ້ານການຄຸ້ມຄອງການເງິນ – FMCBP*** (ລາຍລະອຽດຂອງໂຄງການໃນຂໍ້ 3.1 ຂ້າງເທິງກ່ຽວກັບທະນາຄານໂລກ)
- ***ໂຄງການຍົກລະດັບຄວາມຮັບຜິດຊອບດ້ານການເງິນ*** (ທຶນຊ່ວຍເຫລືອລ້າ IDF 0,30 ລ້ານ US$). ໂຄງການນີ້ແມ່ນແນໃສ່ຍົກສູງຄວາມຮັບຜິດຊອບດ້ານບັນຊີການເງິນຂອງລັດວິສາຫະກິດ ແລະ ພາກເອກະຊົນ ໂດຍການຍົກລະດັບຄວາມສາມາດ ແລະ ນຳໃຊ້ມາດຖານການບັນຊີ ແລະ ການກວດສອບບັນຊີສາກົນ ພ້ອມທັງຈັດການຝຶກອົບຮົມຕ່າງໆທີ່ກ່ຽວຂ້ອງ. ໂຄງການຍັງຊ່ວຍສ້າງຄວາມເຂັ້ມແຂງໃຫ້ LICPA ແລະ ປັບປຸງລະບຽບກົດໝາຍກ່ຽວກັບການບັນຊີ ແລະ ກວດສອບບັນຊີ.
- ***IFC-MPDF: ການພັດທະນາພາກທະນາຄານ*** (0,3 ລ້ານ US$, 2007-2008). ໂຄງການຂອງ IFC-MPDF ມີຈຸດປະສົງໃນການ (1) ສ້າງຕະຫລາດທະນາຄານທີ່ເຂັ້ມແຂງ ແລະ ມີຄວາມຫລາກຫລາຍໂດຍມີສະຖາບັນການເງິນປະເພດຕ່າງໆ, ແລະ (2) ສ້າງໂຄງລ່າງດ້ານກົດໝາຍ ທີ່ຈຳເປັນເພື່ອຮັບປະກັນຄວາມສຳເລັດຂອງສະຖາບັນການເງິນ. ໂຄງການນີ້ຍັງຊ່ວຍລັດຖະບານໃນການຮ່າງດຳລັດການຈັດຕັ້ງປະຕິບັດກົດໝາຍທະນາຄານສະບັບໃໝ່.

## 3– ການປະຕິຮູບດ້ານການຄ້າ

ADB

- ***ໂຄງການຊ່ວຍເຫລືອດ້ານເຕັກນິກ (TA) ສຳລັບພາກພື້ນ ເພື່ອຈັດຕັ້ງປະຕິບັດ ສັນຍາ GMS ກ່ຽວກັບການອຳນວຍຄວາມສະດວກດ້ານການຂົນສົ່ງສິນຄ້າ ແລະ ຜູ້ໂດຍສານ*** (1,8 ລ້ານ US$, 2006-2008): ໂຄງການມີຈຸດປະສົງຊ່ວຍສຳເລັດການຮ່າງສັນຍາ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງດ້ານການຂົນສົ່ງຜ່ານແດນ (CBTA) ໃນກອບຂອງໂຄງການ GMS ລວມທັງ ເອກະສານຄັດຕິດ ແລະ ພິທີການອື່ນໆ.ໂຄງການຊ່ວຍເຫລືອດ້ານເຕັກນິກດັ່ງກ່າວຈະເນັ້ນການຊ່ວຍແກ່ບັນດາປະເທດໃນ GMS ໃນການປະຕິບັດຂໍ້ຕົກລົງ CBTA.
- ***ໂຄງການ TA ສຳລັບພາກພື້ນ ເພື່ອສະໜັບສະໜູນດ້ານການເອື້ອອຳນວຍດ້ານການຄ້າ ແລະ ຍົກລະດັບຂີດຄວາມສາມາດໃນບັນດາປະເທດ GMS*** (1.5 ລ້ານ US$, 2006-2008). ໂຄງການຈະໃຫ້ການຊ່ວຍເຫລືອເບື້ອງຕົ້ນໃນການປະຕິບັດກອບແຜນຍຸດທະສາດດ້ານການເອື້ອອຳນວຍການຄ້າ, ຊຶ່ງລວມມີ ການສ້າງຂີດຄວາມສາມາດສຳລັບອົງການປະສານງານຕ່າງໆດ້ານການເອື້ອອຳນວຍການຄ້າ ແລະ ໜ່ວຍງານຫລັກໃນລະດັບສູນກາງ. ໂຄງການຍັງໃຫ້ການຊ່ວຍເຫລືອໜ່ວຍງານດ້ານການເອື້ອອຳນວຍການຄ້າຂອງ GMS (TFWG) ໃນການປະຕິບັດພາລະບົດບາດຂອງເຂົາເຈົ້າ.

*ອົດສະຕາລີ/ອົດສເອດ*

- ***ການສະໜັບສະໜູນພາລະບົດບາດຂອງຜູ້ປະສານອົງການຜູ້ໃຫ້ທຶນພາຍໃຕ້ໂຄງການ IF*** (1,5 ລ້ານ A$, 2006-2008). ອົດສະຕາລີ ໄດ້ໃຫ້ທຶນໃນການຈ້າງຊ່ຽວຊານເພື່ອຊ່ວຍລັດຖະບານໃນການຈັດຕັ້ງປະຕິບັດແຜນງານການປະຕິຮູບການຄ້າຂອງ ສປປ ລາວ (IF/DTIS Action Matrix) ແລະ ສືບຕໍ່ເຮັດວຽກກັບກອງເລຂາ ແລະ ໜ່ວຍງານ IF ຂອງລັດຖະບານ ແລະ ອົງການຜູ້ໃຫ້ທຶນອື່ນໆ (ທະນາຄານໂລກ, EC, UNDP) ພາຍໃຕ້ກອບ IF.
- *ໂຄງການວິເຄາະ ແລະ ປະຕິຮູບການຄ້າ (5 ລ້ານ A$, 2005-2008)*. ໂຄງການຈະສຸມໃສ່ຍົກລະດັບຄວາມສາມາດດ້ານການວິເຄາະ ແລະ ຄົ້ນຄ້ວາເພື່ອຍົກລະດັບຄວາມສາມາດໃນການວິເຄາະນະໂຍບາຍການຄ້າ.
- ***ໂຄງການສ້າງຂີດຄວາມສາມາດດ້ານອະນາໄມ ແລະ ປ້ອງກັນສຸຂະພາບພືດ ແລະ ສັດ - SPS CBP*** (3,9 ລ້ານ A$, 2004-2007). ໂຄງການແມ່ນແນໃສ່ຍົກລະດັບຄວາມສາມາດຂອງບັນດາປະເທດອາຊຽນຈຸດສຸມເພື່ອໃຫ້ໄດ້ຕາມມາດຕະຖານ SPS ສາກົນ ແລະ ຂໍ້ຮຽກຮ້ອງຂອງປະເທດນຳເຂົ້າສິນຄ້າໂດຍສອດຄ່ອງກັບຂໍ້ຕົກລົງ SPS ຂອງອົງການ ການຄ້າໂລກ ແລະ ສຸມໃສ່ 3 ອົງປະກອບ: ການຕິດພັນດ້ານການຄ້າຂອງ SPS, ສຸຂະພາບພືດ ແລະ ສຸຂະພາບສັດ.

*ສະຫະພາບເອີລົບ (EU)*

- ***ໂຄງການ (Orchis) ສຳລັບການຄ້າດ້ານການປູກຝັງໂດຍມີລະບົບການກຳນົດປະເພດແນວພັນ*** (0,3 ລ້ານ ເອີໂຣ, 2006-2009). ໂຄງການມີຈຸດປະສົງຍົກສູງຄວາມສາມາດໃນການສົ່ງອອກຂອງລາວກ່ຽວກັບດອກໄມ້ພືດພັນທີ່ມີຄ່າຂອງປະເທດ ໂດຍການສົ່ງເສີມການນຳໃຊ້ປະສົບການດ້ານການຄ້າທີ່ດີ ຊຶ່ງນຳໃຊ້ລະບົບເຄື່ອງມື IT&C ໄປຄຽງຄູ່ກັບການເຊື່ອມຕໍ່ ຂອງປະເທດເຂົ້າໃນຍຸກຂອງໂລກແຫ່ງຂໍ້ມູນ. ໂຄງການຍັງຊ່ວຍສ້າງຄວາມເຂັ້ມແຂງດ້ານອົງກອນຂອງປະເທດ ເພື່ອສາມາດປະຕິບັດ ພັນທະສາກົນທີ່ໄດ້ຕົກລົງກັນ ເຊັ່ນ CITES.

- *ໂຄງການຮ່ວມມືກ່ຽວກັບສິດທິດ້ານຊັບສິນທາງປັນຍາ EC-ອາຊ່ຽນ ALA/96/25* (0,5 ລ້ານ ເອີໂຣ, 2005-2007). ໂຄງການແມ່ນແນໃສ່ສ້າງລະບົບຊັບສິນທາງປັນຍາທີ່ທັນສະໄໝ ຢູ່ ສປປ ລາວ ແລະ ລວມທັງການຊ່ວຍເຫລືອດ້ານເຕັກນິກ ເພື່ອຮ່າງລະບຽບກົດໝາຍໃໝ່ກ່ຽວກັບປະຕັງ, ລິຂະສິດ ແລະ ການອອກແບບດ້ານອຸດສາຫະກຳ, ໂດຍເອົາໃຈໃສ່ຢ່າງພິເສດໃສ່ການປະຕິບັດ TRIPS ລະບົບສານ ແລະ ການບັງຄັບໃຊ້.
- *ໂຄງການ ORCATAD ກ່ຽວກັບການອານຸລັກກະສິກຳເພື່ອການພັດທະນາການຄ້າ* (0,3 ລ້ານ ເອີໂຣ, 2007-2009). ໂຄງການມີຈຸດປະສົງຊຸກຍູ້ການເຊື່ອມຍົງເຂົ້າສູ່ລະບົບຂໍ້ມູນສາກົນຂອງ ສປປ ລາວ ໂດຍການເພີ່ມທະວີຄວາມສາມາດສົ່ງອອກດ້ານພືດກະສິກຳທີ່ປອດສານເຄມີ, ສົ່ງເສີມປະສິບການທີ່ດີໃນການອານຸລັກກະສິກຳໂດຍນຳໃຊ້ລະບົບ ICT ທີ່ທັນສະໄໝ. ນອກນັ້ນໂຄງການຍັງມີການສ້າງຂີດຄວາມສາມາດແກ່ອົງກອນທຸລະກິດສື່ກາງຕ່າງໆ ເຊັ່ນ: ສະພາການຄ້າ ແລະ ອຸດສາຫະກຳ ໂດຍລົງເລິກຕະຫລາດຊ່ອງຫວ່າງ ແລະ ໂອກາດດ້ານທຸລະກິດສຳລັບຜະລິດຕະພັນກະສິກຳທີ່ປອດສານເຄມີໃນຕະຫລາດໂລກ.
- ***ກອງທຶນພັດທະນາການຄ້າ** - TDF* (4,2 ລ້ານ ເອີໂຣ, 2007-2010). ໂດຍການປະສານກັບທະນາຄານໂລກ ແລະ ອິດສະຕາລີເພື່ອຈັດຕັ້ງໂຄງສ້າງ ແລະ ກົນໄກ ສຳລັບກອງທຶນຫລາຍຝ່າຍເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນງານການຄ້າ (DTIS Action Matrix). ກິດຈະກຳຕ່າງໆຈະໄດ້ຖືກກຳນົດໂດຍການປຶກສາຫາລືກັບລັດຖະບານ ແລະ ຜູ້ໃຫ້ທຶນອື່ນໆ. EC ຍັງໃຫ້ທຶນສຳລັບການສຶກສາສອງຄັ້ງກ່ຽວກັບການທົບທວນລະບຽບການນຳເຂົ້າ-ສົ່ງອອກ ແລະ ການປະເມີນຄວາມຕ້ອງການດ້ານການຍົກລະດັບເພື່ອຈັດຕັ້ງປະຕິບັດແຜນງານ DTIS AM ເພື່ອກະກຽມກໍ່ຕັ້ງກອງທຶນນີ້.

ຝະລັ່ງ

- *ໂຄງການຝຶກອົບຮົມເພື່ອການຄ້າ (TrainForTrade):* ການຝຶກອົບຮົມ ແລະ ຍົກລະດັບຄວາມສາມາດ ກ່ຽວກັບການຄ້າສາກົນ, FSP 2002-95 (2,3 ລ້ານ US$ ສຳລັບ ສປປ ລາວ ແລະ ກຳປູເຈັຍ, 2003-2008). ວຽກງານຕົ້ນຕໍມີຄື: (1) ຝຶກອົບຮົມຄູຝຶກ (ToT), (2) ນຳໃຊ້ການສຶກສາ ທາງໄກ, ແລະ (3) ການຮ່ວມມືລະຫວ່າງມະຫາວິທະຍາໄລຂອງບັນດາປະເທດດ້ອຍພັດທະນາ. ການປັບປຸງພາກປະຕິບັດຈະດຳເນີນຢູ່ຂະແໜງເສດຖະກິດທີ່ຜູ້ວາງນະໂຍບາຍ ແລະ ເຈົ້າໜ້າທີ່ປະເທດກ່ຽວຂ້ອງໄດ້ກຳນົດ. ອົງການ UNCTAD ເປັນຜູ້ປະຕິບັດໂຄງການຮ່ວມກັບກະຊວງອຸດສາຫະກຳ ແລະ ການຄ້າ.

ຍີ່ປຸ່ນ

- *ການສະໜັບສະໜູນການສົ່ງເສີມການລົງທຶນແກ່ກະຊວງແຜນການ ແລະ ການລົງທຶນ* (0,4 ລ້ານ US$, JICA: ທີ່ປຶກສາ ແລະ ການຝຶກອົບຮົມ, 2007-2009). ໂຄງການແມ່ນເພື່ອສົ່ງເສີມການລົງທຶນ ແລະ ໃຫ້ຄຳປຶກສາທີ່ເໝາະສົມກ່ຽວກັບສະພາບການລົງທຶນໃນ ສປປ ລາວ.
- *ໂຄງການກໍ່ສ້າງຂົວແມ່ນ້ຳຂອງແຫ່ງທີສອງ* ( 34 ລ້ານ US$, JBIC: 2000-2008). ການສ້າງຂົວຂອງໂຄງການນີ້ໄດ້ເລີ່ມແຕ່ເດືອນມັງກອນ 2007. ການກໍ່ສ້າງເຂດກວດກາລວມ (CCA), ສະຖານທີ່ກວດກາຜ່ານປະຕູດຽວໂດຍເຈົ້າໜ້າທີ່ຝ່າຍລາວ ແລະ ໄທ ແມ່ນກຳລັງດຳເນີນໃນປະຈຸບັນ. ການກໍ່ສ້າງສະຖານທີ່ແບບດຽວກັນກໍຈະໄດ້ດຳເນີນຢູ່ຝັ່ງໄທ.
- *ໂຄງການສົ່ງເສີມການຄ້າ* (1,5 ລ້ານ US$, JICA: ໂຄງການຮ່ວມມືດ້ານເຕັກນິກ, 2008-2011). ນີ້ແມ່ນໂຄງການສ້າງຂີດຄວາມສາມາດຊຶ່ງຊ່ວຍກົມຜະລິດ ແລະ ສົ່ງເສີມການຄ້າ (DPTP) ຂອງກະຊວງອຸດສາຫະກຳ ແລະ ການຄ້າໃນການສົ່ງເສີມການຄ້າ ແລະ ຫລຸດຜ່ອນອຸປະສັກທີ່ກີດກັ້ນການຄ້າ.

ສິງກະໂປ

- *ຫລັກສູດດ້ານການຄ້າ* (1,4 ລ້ານ US$, ສືບຕໍ່ແຕ່ປີ 1992). ໃນໄລຍະຜ່ານມາໄດ້ຈັດຫລັກສູດດ້ານການຄ້າ ແລະ ເສດຖະກິດທີ່ສູນຝຶກອົບຮົມລາວ-ສິງກະໂປ ໃນຫົວຂໍ້ການສື່ສານດ້ານທຸລະກິດ, ການສະໜອງທຶນດ້ານການຄ້າສາກົນ, ການປົກປ້ອງຜູ້ຊົມໃຊ້ ແລະ ຍຸດທະສາດເພີ່ມຄວາມສາມາດແຂ່ງຂັນ. ເຈົ້າໜ້າທີ່ລາວໄດ້ເຂົ້າຮ່ວມຫລັກສູດຕ່າງໆທີ່ກ່ຽວພັນກັບການຄ້າທີ່ຈັດຂຶ້ນທີ່ສິງກະໂປເຊັ່ນ: ການສົ່ງເສີມການຄ້າ ແລະ ການລົງທຶນ, ການເຈລະຈາດ້ານການຄ້າ, ລະບົບການຊຳລະ ແລະ ແກ້ໄຂຂໍ້ຂັດແຍ່ງໃນປະເທດ, ການບັນຊີຂອງທະນາຄານກາງ.

ສະວິດເຊີແລນ (SECO)

- *ໂຄງການສະໜັບສະໜູນ ການສົ່ງເສີມການຄ້າ ແລະ ພັດທະນາການສົ່ງອອກ* (1,704 ລ້ານ US$, 2004-2007. ຈັດຕັ້ງປະຕິບັດໂດຍ ITC). ຈຸດປະສົງຂອງໂຄງການແມ່ນຍົກລະດັບຄວາມສາມາດສົ່ງເສີມການສົ່ງອອກຂອງລັດຖະບານ, ສະຖາບັນການຄ້າ ແລະ ວິສາຫະກິດຕ່າງໆໂດຍສ້າງ: 1) ຍຸດທະສາດການສົ່ງອອກ; 2) ເຄືອຄ່າຍສະໜັບສະໜູນການຄ້າ ; 3) ສະຖາບັນຕ່າງໆເພື່ອຝຶກອົບຮົມວິສາຫະກິດທີ່ສົ່ງອອກສິນຄ້າ; 4) ສູນຂໍ້ມູນການຄ້າແຫ່ງຊາດ. ຈຸດສຸມໃນປີ 2008 ແມ່ນເໜັ້ນຜົນຜະລິດກະສິກຳທີ່ປອດສານເຄມີ, ການທ່ອງທ່ຽວທີ່ຊາວບ້ານມີສ່ວນຮ່ວມ ແລະ ການຝຶກອົບຮົມຜູ້ໃຫ້ຄຳປຶກສາ.
- *ໂຄງການສະໜັບສະໜູນການເຂົ້າ WTO ຂອງ ສປປ ລາວ* (0,34 ລ້ານ US$, 2007-2010) ແມ່ນເພື່ອເອື້ອອຳນວຍການເຂົ້າເປັນສະມາຊິກອົງການການຄ້າໂລກໃຫ້ທັນຕາມກຳນົດເວລາ ໂດຍໃຫ້ຄຳປຶກສາລະດັບສາກົນດ້ານນະໂຍບາຍຊຶ່ງສອດຄ່ອງກັບນະໂຍບາຍພັດທະນາຂອງປະເທດ ແລະ ສັນຍາຜ່ອນຜັນດ້ານການຄ້າ.

UNDP

- *ການເອື້ອອຳນວຍການເຊື່ອມຍົງຢ່າງມີປະສິດທິພາບຂອງ ສປປ ລາວ ເຂົ້າໃນອາຊຽນ* - ໄລຍະສອງ (UNDP: 0.57 ລ້ານ US$, 2006–2009).

  ໂຄງການມີເປົ້າໝາຍ: 1) ເພີ່ມຄວາມເອົາໃຈໃສ່ໃນຂະບວນການເຊື່ອມຍົງເຂົ້າໃນອາຊ່ຽນ; 2) ຍົກລະດັບຂີດຄວາມສາມາດໃນການປະສານວຽກງານດ້ານອາຊ່ຽນພາຍໃນລັດຖະບານລາວ; ແລະ 3) ຍົກສູງຄວາມສາມາດຂອງປະເທດໃນການວິເຄາະຜົນກະທົບຈາກການເຊື່ອມຍົງກັບພາກພື້ນ.
- *ການສ້າງຂີດຄວາມສາມາດ ແລະ ການຊ່ວຍເຫລືອດ້ານເຕັກນິກແກ່ ສປປ ລາວ ສຳລັບການເຈລະຈາເຂົ້າເປັນສະມາຊິກຂອງ WTO* (ທຶນ IF Window II: 0,3 ລ້ານ US$, 2007-2009). ເປົ້າໝາຍໂຄງການແມ່ນ: 1) ຍົກລະດັບຄວາມສາມາດຂອງລັດຖະບານໃນການກະກຽມ ແລະ ເຈລະຈາຂໍ້ຕົກລົງການເຂົ້າ WTO ທີ່ເອື້ອອຳນວຍແກ່ການຫລຸດຜ່ອນຄວາມທຸກຍາກ ແລະ ຊຸກຍູ້ການເຕີບໂຕ; 2) ລວມທັງຄວາມສາມາດໃນການເຈລະຈາດ້ານຕະຫຼາດສິນຄ້າ ແລະ ການບໍລິການ; ແລະ 3) ເຜີຍແຜ່ວຽກງານການເຈລະຈາການເຂົ້າ WTO ໃຫ້ທົ່ວເຖິງໃນລະດັບສູນກາງ ແລະ ທ້ອງຖິ່ນ.
- *ການສ້າງຄວາມເຂັ້ມແຂງດ້ານໂຄງສ້າງການປະສານງານ ແລະ ຈັດຕັ້ງປະຕິບັດວຽກງານຂອງ IF* (ທຶນ IF Window II: 0,22 ລ້ານ US$, 2007-2008). ເປົ້າໝາຍໂຄງການແມ່ນເພື່ອຍົກສູງ: 1) ຂີດຄວາມສາມາດຂອງອົງກອນໃນການປະສານງານ ແລະ ຈັດຕັ້ງປະຕິບັດນະໂຍບາຍ ແລະ ໂຄງການຕ່າງໆດ້ານການຄ້າ; 2) ຄວາມສາມາດໃນການຄຸ້ມຄອງການປະສານງານກັບບັນດາກະຊວງທີ່ກ່ຽວຂ້ອງກັບ IF; 3) ຄວາມສາມາດຂອງປະເທດໃນການປະເມີນຜົນກະທົບດ້ານນະໂຍບາຍຂອງການຄ້າຕໍ່ການເຕີບໂຕ, ການພັດທະນາເສດຖະກິດ ແລະ ການລຶບລ້າງຄວາມທຸກຍາກ.
- *ການຍົກລະດັບຂີດຄວາມສາມາດແກ່ກົມນຳເຂົ້າ ແລະ ສົ່ງອອກ (DIMEX) ຂອງກະຊວງອຸດສາຫະກຳ ແລະ ການຄ້າໃນດ້ານແຫລ່ງສິນຄ້າ (ROO), ລະບຽບສະເພາະດ້ານຜະລິດຕະພັນ (PSR) ແລະ ລະບຽບການຢັ້ງຢືນການດຳເນີນງານ (OCP)* (ທຶນ IF Window II: 0,15 ລ້ານ US$, 2007-09).

ໂຄງການແມ່ນເໜັ້ນການຍົກລະດັບຂອງກົມ DIMEX ແລະ ຄວາມສາມາດດ້ານເຕັກນິກດ້ານລະບຽບການສົ່ງອອກໂດຍສະເພາະແມ່ນກ່ຽວກັບ ROO, PSR and OCP.

- *ສະໜັບສະໜູນອຸດສາຫະກຳຕັດຫຍິບໃນການຂ້າມຜ່ານຈາກການຜະລິດແບບສັນຍາຈ້າງມາເປັນຜູ້ສົ່ງອອກໂດຍກົງ (ໄລຍະ 1)* (ທຶນ IF Window II: 0,32 ລ້ານ US$, 2007-2008). ໂຄງການແມ່ນຊ່ວຍອຸດສາຫະກຳຕັດຫຍິບໃນການແກ້ໄຂບັນຫາທ້າທາຍທີ່ປະເຊີນໃນຕະຫລາດ ແລະ ຂ້າມຜ່ານຈາກການຜະລິດແບບສັນຍາຈ້າງມາເປັນຜູ້ສົ່ງອອກໂດຍກົງ.

ທະນາຄານໂລກ (WB)

- *ກອງທຶນພັດທະນາການຄ້າ (TDF) ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນງານບູລິມະສິດດ້ານການຄ້າ (DTIS Action Matrix).* ນີ້ແມ່ນກອງທຶນຫລາຍຝ່າຍທີ່ກໍ່ຕັ້ງຂຶ້ນເພື່ອສະໜັບສະໜູນການຈັດຕັ້ງປະຕິບັດວຽກງານປະຕິຮູບຕ່າງໆໃນໄລຍະກາງທີ່ກ່ຽວພັນກັບການຄ້າພາຍໃຕ້ແຜນງານ DTIS Action Matrix. ກອງທຶນ TDF ແມ່ນບໍລິຫານໂດຍ WB ແລະ ອອກທຶນຮ່ວມກັນໂດຍ EC ແລະ ອິດສະຕາລີ. ຜູ້ໃຫ້ທຶນອື່ນໆຄາດວ່າຈະເຂົ້າຮ່ວມເຊັ່ນກັນ. ກອງທຶນໄດ້ຮັບການກໍ່ຕັ້ງ ແລະ ໜ່ວຍງານໂຄງການແຫ່ງຊາດກຳລັງວາງແຜນປະຕິບັດກິດຈະກຳສຳລັບປີທຳອິດ.
- *ໂຄງການເອື້ອອຳນວຍດ້ານພາສີ ແລະ ການຄ້າ* (4 ລ້ານ ໂດລາ, 2007-2011). ໂຄງການກຳລັງຢູ່ໃນໄລຍະການກະກຽມ ແລະ ຈະສະໜັບສະໜູນຂະແໜງພາສີໃນການເອື້ອອຳນວຍຄວາມສະດວກແກ່ການຄ້າລະຫວ່າງປະເທດ, ສ້າງຄວາມທັນສະໃໝ ແລະ ຫລຸດຜ່ອນລະບຽບຂັ້ນຕອນດ້ານພາສີໂດຍການນຳໃຊ້ລະບົບຄອມພິວເຕີ ASYCUDA, ການຊ່ວຍເຫລືອດ້ານເຕັກນິກໄລຍະຍາວ, ປັບປຸງລະບົບການຄຸ້ມຄອງ ແລະ ຊ່ວຍວຽກງານຕ່າງໆດ້ານພາສີທີ່ກ່ຽວພັນກັບການເຂົ້າ WTO.

## 4– ການພັດທະນາພາກເອກະຊົນ, ການທ່ອງທ່ຽວ ແລະ ການປະຕິຮູບທີ່ດິນ

### ການພັດທະນາພາກເອກະຊົນ

ADB

- *ການສ້າງຂີດຄວາມສາມາດແກ່ວິສາຫະກິດຂະນາດນ້ອຍ ແລະ ກາງ - SME (0,4 ລ້ານ US$, 2007–2008*). ໂຄງການ TA ນີ້ແມ່ນເພື່ອຊ່ວຍລັດຖະບານໃນການປະຕິບັດວຽກງານການປະຕິຮູບໃນພາກເອກະຊົນ, ໂດຍສະເພາະແມ່ນການຈັດຕັ້ງປະຕິບັດໂຄງການເງິນກູ້ໃໝ່ຂອງ ADB ສຳລັບການພັດທະນາພາກເອກະຊົນ ແລະ SME. ພ້ອມນັ້ນຍັງຈັດການຝຶກອົບຮົມ ແລະ ໃຫ້ຂໍ້ມູນແກ່ເຈົ້າໜ້າທີ່ຂອງອົງການລັດທີ່ຈັດຕັ້ງປະຕິບັດໂຄງການ.
- *ໂຄງການພັດທະນາພັດທະນາພາກເອກະຊົນ ແລະ SME (ໂຄງການຍ່ອຍທີ 1)* (ທຶນຊ່ວຍເຫລືອຫລ້າ: 5 ລ້ານ US$, 2007-2008). ໂຄງການນີ້ມີສອງໂຄງການຍ່ອຍກ່ຽວກັບການປະຕິຮູບດ້ານການພັດທະນາອົງກອນສຳລັບການວາງ ແລະ ຈັດຕັ້ງປະຕິບັດນະໂຍບາຍ SME, ການເຂົ້າຫາແຫລ່ງທຶນ, ສະພາບແວດລ້ອມດ້ານການລົງທຶນ, ນະໂຍບາຍການຄ້າ ແລະ ການສ້າງຂີດຄວາມສາມາດ, ແລະ ຄວາມໝັ້ນຄົງດ້ານເສດຖະກິດມະຫາພາກ. ໂຄງການຈະຊ່ວຍກະຊວງ MOIC, MOF ແລະ MPI ໃນການປະຕິບັດ ແລະ ຕິດຕາມຜົນກະທົບຂອງການປະຕິຮູບນະໂຍບາຍ, ເປີດກ້ວາງທຸລະກິດ SME, ການລົງທຶນ, ການປະຕິຮູບນະໂຍບາຍການຄ້າ; ແລະ ຊ່ວຍຍົກສູງຂີດຄວາມສາມາດໃນການສ້າງນະໂຍບາຍຂະແໜງການ ແລະ ການເຂົ້າຮ່ວມ WTO.

ສະຫະພາບເອີລົບ (EU)

- *ລະບຽບກົດໝາຍ ແລະ ປະສົບການດ້ານການແກ້ໄຂຂໍ້ຂັດແຍ່ງຂອງເອີລົບ* (ADR) *: ຄວາມເປັນໄປໄດ້ໃນການນຳໃຊ້ໃນ ສປປ ລາວ ແລະ ກຳປູເຈຍ* (0,31 ລ້ານ ເອີໂຣ, 2007-2009). ການຊ່ວຍເຫລືອນີ້ແມ່ນເພື່ອພັດທະນາຄວາມຮູ້ ແລະ ການນຳໃຊ້ທາງເລືອກຕ່າງໆດ້ານລະບຽບການແກ້ໄຂຂໍ້ຖົກຖຽງ (Alternative Disputes Resolution) ໃນ ສປປ ລາວ ແລະ ກຳປູເຈັຍ ໂດຍສະເພາະແມ່ນກ່ຽວກັບ SME, ເພື່ອແກ້ໄຂຂໍ້ຂັດແຍ່ງຕ່າງໆດ້ານທຸລະກິດທີ່ອາດເກີດຂຶ້ນໃນລະດັບສາກົນໃຫ້ວ່ອງໄວ ໂດຍໄດ້ມີການຈັດການຝຶກອົບຮົມ, ສຳມະນາ ແລະ ທັດສະນະສຶກສາ.
- *ໂຄງການພັດທະນາພັດທະນາ SME* (3 ລ້ານ ເອີໂຣ, 2007-2010). ໂຄງການມີຈຸດປະສົງຊ່ວຍຍົກລະດັບຄວາມສາມາດຂອງປະເທດໃນການຈັດຕັ້ງປະຕິບັດຍຸດທະສາດການພັດທະນາ SME ແລະ ສະໜັບສະໜູນລັດຖະບານໃນການຈັດຕັ້ງປະຕິບັດວຽກງານການປະຕິຮູບພາຍໃຕ້ໂຄງການ ພັດທະນາພັດທະນາພາກເອກະຊົນ ແລະ SME ຂອງ ADB, ໂດຍສະເພາະແມ່ນດ້ານລະບຽບການຈົດທະບຽນທຸລະກິດ ແລະ ການອອກອານຸຍາດ, ການລົງທຶນ, ການຄ້າ ແລະ ການເງິນ.

ເຢຍລະມັນ (GTZ)

- *ໂຄງການພັດທະນາຊັບພະຍາກອນມະນຸດສຳລັບເສດຖະກິດຕະຫຼາດ (HRDME) - ໄລຍະ 2* (7.1 ລ້ານ US$, 2007–2011) ແມ່ນຊ່ວຍສະໜັບສະໜູນກະຊວງ MPI, MoE, SMEPDO/MoIC ແລະ LNCCI ໃນການປັບປຸງສະພາບເງື່ອນໄຂດ້ານກົດມາຍ, ອົງກອນ ແລະ ຊັບພະຍາກອນມະນຸດສຳລັບການພັດທະນາພາກເອກະຊົນ ໂດຍຜ່ານການຝຶກອົບຮົມວິຊາຊີບ, ການສົ່ງເສີມ SME, ການສ້າງຄວາມເປັນເອກະພາບດ້ານລະບຽບການລົງທຶນ, ການຄົ້ນຄ້ວາວິໄຈ ແລະ ການພົບປະປຶກສາຫາລືລະຫວ່າງພາກລັດ-ເອກະຊົນ ໃນ 4 ແຂວງຂອງປະເທດ.

ລຸກແຊມບວກ

- *ການສ້າງຄວາມເຂັ້ມແຂງດ້ານຊັບພະຍາກອນມະນຸດໃນຂະແໜງອຸດສາຫະກຳການຮັບຕ້ອນ ແລະ ທ່ອງທ່ຽວໃນ ສປປ ລາວ* (5,5 ລ້ານ ເອີໂຣ, 2008–2012). ໂຄງການມີເປົ້າໝາຍສ້າງຄວາມເຂັ້ມແຂງດ້ານຊັບພະຍາກອນມະນຸດໃນຂະແໜງອຸດສາຫະກຳການຮັບຕ້ອນ ແລະ ທ່ອງທ່ຽວໃນ ສປປ ລາວ ແລະ ຊ່ວຍອົງການທ່ອງທ່ຽວແຫ່ງຊາດໃນການພັດທະນາ ແລະ ປະຕິບັດແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດໄລຍະຍາວ ເພື່ອຕອບສະໜອງຄວາມຕ້ອງການດ້ານການຈ້າງງານໃນປະຈຸບັນ ແລະ ອານາຄົດ.

ຍີ່ປຸ່ນ

- *ສູນການຮ່ວມມືດ້ານຊັບພະຍາກອນມະນຸດ ລາວ-ຍີ່ປຸ່ນ* (4 ລ້ານ US$, JICA: 2005-2010). ໂດຍຮ່ວມມືກັບມະຫາວິທະຍາໄລແຫ່ງຊາດ ໂຄງການໄດ້ແນໃສ່ຕອບສະໜອງຊັບພະຍາກອນມະນຸດສຳລັບເສດຖະກິດຕະຫລາດ. ຫລັກສູດ ແລະ ກິດຈະກຳຕົ້ນຕໍຂອງສູນ ລວມມີ: 1) ການບໍລິຫານທຸລະກິດ; 2) ພາສາຍີ່ປຸ່ນ; 3) ການແລກປ່ຽນຂໍ້ມູນ ແລະ ວັດທະນະທຳ ລະຫວ່າງ ລາວ ແລະ ຍີ່ປຸ່ນ; 4) ຫລັກສູດພື້ນຖານດ້ານຄອມພິວເຕີ.

- *ໂຄງການພັດທະນາການທ່ອງທ່ຽວໃນເຂດສາຍທາງປະຫຼູ ຕາເວັນອອກ-ຕາເວັນຕົກ* (1,5 ລ້ານ US$, JICA: 2008-2010). ໂດຍຮ່ວມມືກັບອົງການທ່ອງທ່ຽວແຫ່ງຊາດ ແລະ ແຂວງສະຫວັນນະເຂດ ໂຄງການນີ້ມີຈຸດປະສົງເອື້ອອໍານວຍການພັດທະນາການທ່ອງທ່ຽວໂດຍສ້າງຂີດຄວາມສາມາດເພື່ອປະກອບສ່ວນສ້າງຄວາມຍືນຍົງໃນເຂດດັ່ງກ່າວ.
- *ໂຄງການ ODOP (1 ເມືອງ 1 ຜະລິດຕະພັນ)* (2 ລ້ານ US$2, JICA: 2008-2011). ໂດຍຮ່ວມມືກັບກະຊວງອຸດສາຫະກໍາ ແລະ ການຄ້າ, ໂຄງການມີຈຸດປະສົງໃນການເຜີຍແຜ່ສ້າງຄວາມເຂົ້າໃຈ ແລະ ເຫັນໄດ້ເຖິງຄວາມສໍາຄັນຂອງແນວຄວາມຄິດ 1 ເມືອງ 1 ຜະລິດຕະພັນ ແລະ ຄັດເລືອກຜະລິດຕະພັນທີ່ເດັ່ນເປັນຕົວແບບ ແລະ ສ້າງວິທີ-ປະສົບການທີ່ດີໃນການດໍາເນີນວຽກງານດັ່ງກ່າວ.

ອົງການພັດທະນາແນເທີແລນ SNV

- *ແຜນງານການພັດທະນາພາກເອກະຊົນ.* SNV ແນໃສ່ຂະຫຍາຍຕະຫລາດເພື່ອເປີດໂອກາດດ້ານເສດຖະກິດແກ່ຜູ້ທຸກຍາກຢູ່ເຂດຊົນນະບົດ. ໂຄງການມີສາມອົງປະກອບ ຄື 1) ຂະຫຍາຍການບໍລິການດ້ານການເງິນ, 2) ພັດທະນາຕ່ອງໂສ້ຄຸນຄ່າ (ເຊັ່ນການ ທ່ອງທ່ຽວດ້ານນິເວດ, ຜະລິດຕະພັນປ່າໄມ້ທີ່ບໍ່ແມ່ນໄມ້ ແລະ ຫັດຖະກໍາ) ແລະ 3) ສ້າງສະພາບແວດລ້ອມ ທີ່ເອື້ອອໍານວຍແກ່ການພັດທະນາທຸລະກິດ.
- *ຜະລິດຕະພັນເຄື່ອງປ່າຂອງດົງ:* ການບໍລິການ ແນະນໍາກ່ຽວກັບເຄື່ອງປ່າຂອງດົງ (NTFP) ສຸມໃສ່ການວາງຫລັກການພາກປະຕິບັດຕົວຈິງເພື່ອຮັບປະກັນການຜະລິດ ແລະນໍາໃຊ້ເຄື່ອງປ່າຂອງດົງແບບຍືນຍົງ, ພັດທະນາຕະຫລາດສໍາລັບເຄື່ອງປ່າຂອງດົງ (ລວມທັງລະບົບຂໍ້ມູນຕະຫລາດ), ພັດທະນາຊັບພະຍາກອນມະນຸດ ແລະ ສະໜັບສະໜູນ ແລະ ຈັດຕັ້ງລະບົບແລກປ່ຽນຂໍ້ມູນຂ່າວສານ.

ສະວິດເຊີແລນ (SDC)

- *ການອານຸລັກຊີວະນາງພັນກະສິກໍາໃນ ສປປ ລາວ* (ໄລຍະລິເລີ່ມ: 0,764 ລ້ານ US$, 2007-2008). ຈຸດປະສົງຂອງໂຄງການແມ່ນເພື່ອຊ່ວຍລັດຖະບານໃນການອານຸລັກຊັບພະຍາກອນຊີວະນາງພັນກະສິກໍາ ຄຽງຄູ່ກັບການຮັກສາຜະລິດຕະພາບກະສະກໍາ ແລະ ວິຖີຊີວິດຂອງປະຊາຊົນໂດຍປັບປຸງການຄຸ້ມຄອງ ແລະ ນໍາໃຊ້ຊັບພະຍາກອນດັ່ງກ່າວໃຫ້ມີປະສິດທິຜົນໂດຍສະເພາະໃນເຂດເນີນສູງ.
- *ໂຄງການບໍລິການດ້ານກະສິກໍາໃນ ສປປ ລາວ* (ໄລຍະເຊື່ອມໂຄງການ: 0,65 ລ້ານ US$, 2008). ເປົ້າໝາຍລວມແມ່ນເພື່ອຊ່ວຍກະຊວງກະສິກໍາ ແລະ ປ່າໄມ້ (MAF) ແລະ NAFES ໃນການສ້າງແຜນຍຸດທະສາດການບໍລິການດ້ານກະສະກໍາແຫ່ງຊາດແບບຍືນຍົງ ແລະ ຊ່ວຍຍົກລະດັບອົງກອນແກ່ NAFES ໃນທຸກໆຂັ້ນ. "ວິທີການບໍລິການແບບລາວ" ໄດ້ຖືກນໍາໃຊ້ໂດຍ MAF ໃນ 17 ແຂວງທັງໝົດ (ໃນ 2 ເມືອງ). ໃນ 6 ເດືອນຕົ້ນປີ 2008, ໂຄງການຈະເຊື່ອມການຊ່ວຍເຫລືອຂອງຕົນໃຫ້ເຂົ້າກັບໂຄງສ້າງຂອງກະຊວງກະສິກໍາ ແລະ ປ່າໄມ້.

ສະວິດເຊີແລນ (SECO)

- *ການສົ່ງເສີມການຜະລິດອຸດສາຫະກໍາທີ່ປອດສານພິດໃນ ສປປ ລາວ* (0,72 ລ້ານ US$, 2003-2008). ໂຄງການມີຈຸດປະສົງສະໜັບສະໜູນລັດຖະບານໃນການລຶບລ້າງຄວາມທຸກຈົນ ແລະ ຮັກສາສິ່ງແວດລ້ອມໃຫ້ຍືນຍົງ ໂດຍປັບປຸງຜະລິດຕະພາບ ແລະ ຄວາມສາມາດແຂ່ງຂັນຂອງຂະແໜງອຸດສາຫະກໍາການຜະລິດທີ່ກໍາລັງເຕີບໂຕ ລວມທັງການເຂົ້າຫາຕະຫລາດສາກົນແລະ ພາຍໃນໂດຍການນໍາໃຊ້ເຕັກນິກ ແລະ ເຕັກໂນໂລຊີທີ່ປອດສານພິດ.

UNDP – UNIDO

- *ສົ່ງເສີມການພັດທະນາພາກເອກະຊົນໂດຍສ້າງຄວາມເຂັ້ມແຂງໃຫ້ແກ່ສະພາການຄ້າ ແລະ ກຸ່ມທຸລະກິດ* (2,33 ລ້ານ US$, 2006-2010). ໂຄງການມີຈຸດປະສົງສະໜັບສະໜູນການພັດທະນາພາກເອກະຊົນໃນລາວໂດຍສະເພາະແມ່ນທຸລະກິດຂະໜາດນ້ອຍ ແລະ ກາງ (SMEs) ໂດຍ: 1) ເພີ່ມທະວີການນໍາໃຊ້ຜົນການສຶກສາຄົ້ນຄ້ວາ ແລະ ຂໍ້ແນະນໍາຕ່າງໆ ໃນຂົງເຂດ ການພັດທະນາພາກເອກະຊົນ ແລະ ປັບປຸງສະພາບແວດລ້ອມດ້ານທຸລະກິດ; 2) ຍົກລະດັບຄວາມສາມາດຂອງສະພາການຄ້າ ແລະ ກຸ່ມທຸລະກິດເພື່ອໃຫ້ເຂົາເຈົ້າສາມາດເປັນເອກະລາດ, ອາໃສຕົນເອງ ແລະ ກຸ່ມຕົນເອງດ້ານການເງິນ.

UNIDO

- ແຜນງານຄົບຊຸດ ລາວ-ຢູນີໂດ *(5,6 ລ້ານ US$, 2004-2008). ແຜນງານຄົບຊຸດ ສໍາລັບ ສປປ ລາວ (ໄລຍະ II) ລວມມີໜ້າວຽກຕົ້ນຕໍ ຕໍ່ໄປນີ້:*
  - *ການບໍລິຫານຄຸ້ມຄອງອຸດສາຫະກໍາ ແລະ ສະພາບແວດລ້ອມ ທີ່ເອື້ອອໍານວຍ (0,9 ລ້ານ $)*
  - ການພັດທະນາພາກເອກະຊົນ ແລະ ສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ (0.9 ລ້ານ $)
  - ການເສີມຂະຫຍາຍ ການຜະລິດ ແລະ ການຮັກສາສິ່ງແວດລ້ອມ (2,5 ລ້ານ $)
  - ການຂະຫຍາຍຕະຫລາດ, ອໍານວຍການລົງທຶນ ແລະ ການຄ້າ (1,25 ລ້ານ US$)

ກຸ່ມທະນາຄານໂລກ - WBG (WB, IFC-MPDF)

- *ໂຄງການສະໜັບສະໜູນການຫລຸດຜ່ອນຄວາມທຸກຍາກ PRSO* (ລາຍລະອຽດໃນຂໍ້ 3.1 ຂ້າງເທິງກ່ຽວກັບທະນາຄານໂລກ).
- IFC-MPDF*: ກິດຈະກໍາການພັດທະນາພາກເອກະຊົນ.* (0,5 ລ້ານ US$, 2007-2009). ຫລັງຈາກການຊ່ວຍຮ່າງກົດໝາຍວິສາຫະກິດໃໝ່, IFC-MPDF ໄດ້ສືບຕໍ່ສະໜັບສະໜູນການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ ໂດຍສະເພາະໃນດ້ານການຈົດທະບຽນວິສາຫະກິດ ແລະ ການອອກອານຸຍາດ. ຫວ່າງບໍ່ດົນມານີ້ IFC-MPDF ໄດ້ຕົກລົງໃຫ້ການຊ່ວຍເຫລືອດ້ານເຕັກນິກແກ່ກະຊວງແຜນການ ແລະ ການລົງທຶນ ໃນການຮ່າງກົດໝາຍລົງທຶນສະບັບລວມ ແລະ ຈາກນັ້ນແມ່ນດໍາລັດການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ.
- IFC-MPDF: *ກອງປະຊຸມນັກທຸລະກິດລາວ-LBF* (0,6 ລ້ານ US$, 2005-2010). ກອງປະຊຸມ LBF ແມ່ນກົນໄກທີ່ມີປະສິດທິພາບໃນການຊ່ວຍໃຫ້ພາກເອກະຊົນຍົກບັນຫາຕ່າງໆຂອງຕົນຕໍ່ກັບລັດຖະບານ. IFC-MPDF ຊ່ວຍລັດຖະບານໃນການອໍານວຍຄວາມສະດວກໃນການຈັດກອງປະຊຸມໂດຍມີກອງເລຂາຮັບໃຊ້ກອງປະຊຸມໂດຍສະເພາະ. ເນື່ອງຈາກມີການຕັ້ງຄໍາຖາມໃນກອງປະຊຸມ, IFC-MPDF ຍັງໃຫ້ການຊ່ວຍເຫລືອດ້ານເຕັກນິກໃນການພັດທະນາບັນຫາທີ່ຈະຍົກຂຶ້ນປຶກສາຫາລື ແລະ ວິທີການແກ້ໄຂ. ພ້ອມນັ້ນຍັງຊ່ວຍດ້ານການຮ່າງກົດໝາຍບໍ່ແຮ່ ແລະ ດໍາລັດການຈັດຕັ້ງປະຕິບັດກົດໝາຍທ່ອງທ່ຽວ. ກອງປະຊຸມນັກທຸລະກິດລາວ ຄັ້ງທີ 4 ຈະຈັດຂຶ້ນໃນເດືອນມິຖຸນາ 2008.

## ການທ່ອງທ່ຽວ

### ADB

- *GMS: ໂຄງການພັດທະນາການທ່ອງທ່ຽວເຂດອ່າງແມ່ນ້ຳຂອງຕອນລຸ່ມ* (10,9 ລ້ານ US$, 2002-2007). ໂຄງການແມ່ນສະໜັບສະໜູນການພັດທະ ນາການທ່ອງທ່ຽວຢູ່ເຂດອ່າງແມ່ນ້ຳຂອງຕອນລຸ່ມ. ຢູ່ໃນ ສປປ ລາວ ໂຄງການນີ້ໄດ້ຊ່ວຍຍົກລະດັບໂຄງລ່າງພື້ນຖານສຳລັບການທ່ອງທ່ຽວ, ຊຸກຍູ້ກິດຈະ ກຳທ່ອງທ່ຽວແບບຊາວບ້ານມີສ່ວນຮ່ວມ, ສົ່ງເສີມການປະກອບສ່ວນຂອງພາກເອກະຊົນໃນຂົງເຂດການໂຄສະນາສົ່ງເສີມການທ່ອງທ່ຽວ, ຈັດຕັ້ງກົນໄກ ການຮ່ວມມືໃນລະດັບອະນຸພາກພື້ນ ແລະ ເອື້ອອຳນວຍການເດີນທາງຜ່ານແດນຂອງນັກທ່ອງທ່ຽວ. ໂຄງການໄລຍະ 1 ໄດ້ສິ້ນສຸດລົງ ແລະ ໄລຍະ 2 ຈະເລີ່ມຕົ້ນໃນທ້າຍປີ 2008.

### ອົດສະຕາລີ/ໂອສເອດ

- *ການປ້ອງກັນເດັກ: ຕ້ານການທ່ອງທ່ຽວເດັກທາງເພດໃນອາຊີຕາເວັນອອກສ່ຽງໃຕ້* (0,5 ລ້ານ A$, 2007-2009). ຈຸດປະສົງໂຄງການນີ້ແມ່ນເພື່ອວາງ ແຜນການ 5 ປີ ໃນການແກ້ໄຂບັນຫາການທ່ອງທ່ຽວເດັກທາງເພດແບບຍືນຍົງໃນເຂດອາຊີຕາເວັນອອກສ່ຽງໃຕ້. ແຜນດັ່ງກ່າວຈະກຳນົດຄວາມຕ້ອງການ ດ້ານການຝຶກອົບຮົມສຳລັບອົງການທ່ອງທ່ຽວແຫ່ງຊາດ ແລະ ພາກເອກະຊົນປະເທດຕ່າງໆ, ສ້າງຄວາມເຂັ້ມແຂງແກ່ຄະນະກຳມະການການທ່ອງທ່ຽວ ອາຊຽນໃນການເຮັດໜ້າທີ່ຕິດຕາມຊີ້ນຳການຕ້ານການທ່ອງທ່ຽວເດັກທາງເພດ ແລະ ສ້າງກົນໄກການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ.

### ຄະນະກຳມະທິການເອີລົບ (EC)

- *ໂຄງການ Asia Invest-Marketing Responsible Tourism ໃນ ສປປ ລາວ* (0.3 ລ້ານ ເອີໂຣ, 2006-2009; ຮ່ວມທຶນກັບ SNV). ໂຄງການແມ່ນ ເພື່ອຊຸກຍູ້ສະມາຄົມທ່ອງທ່ຽວລາວ ແລະ ບັນດາສະມາຊິກໃນການພັດທະນາ ແລະ ເພີ່ມບໍລິມາດ ແລະ ຄຸນນະພາບຂອງການຂາຍສຳລັບຕະຫລາດ ເອີລົບ ແລະ ມີສ່ວນຮ່ວມໃນການຄຸ້ມຄອງນະໂຍບາຍການທ່ອງທ່ຽວແບບຍືນຍົງ ແລະ ການພັດທະນາອົງກອນ.

### ນິວຊີແລນ/NZAID

- *ອົງການທ່ອງທ່ຽວແຫ່ງຊາດ ສປປ ລາວ – ຢູແນສໂກ: ໂຄງການທ່ອງທ່ຽວນິເວດນ້ຳຮາ* (0,338 ລ້ານ US$, 2004-2007). ໄລຍະ II ຂອງໂຄງການ ນ້ຳຮາ ມີຈຸດປະສົງຊ່ວຍການທ່ອງທ່ຽວແຂວງຫລວງນ້ຳທາ ແລະ ຜູ້ບໍລິຫານເຂດອານຸລັກໃຫ້ມີຄວາມສາມາດ ແລະ ມີປະສິດທິພາບໃນການຄຸ້ມຄອງ ອຸດສາຫະກຳທ່ອງທ່ຽວອານຸລັກທີ່ເກີດໃໝ່. ນອກນັ້ນຍັງຍົກລະດັບຈຳນວນ ແລະ ຄຸນນະພາບຂອງນັກວິຊາການ ທີ່ໂຄງການນ້ຳຮາໄດ້ຝຶກອົບຮົມ.

### ອົງການພັດທະນາເນເທີແລນ ( SNV)

- ໃນຂົງເຂດການທ່ອງທ່ຽວແບບຍືນຍົງ ແລະ ເພື່ອຜູ້ທຸກຍາກ ໄດ້ມີ ທີ່ປຶກສາ ຈຳນວນ 11 ທ່ານ ຄອຍໃຫ້ຄຳປຶກສາດ້ານນະໂຍບາຍ, ຍຸດທະສາດ, ການ ບໍລິຫານ ແລະ ພັດທະນາຜະລິດຕະພັນ ໃຫ້ແກ່ບັນດາລູກຄ້າຕ່າງໆ. ໃນລະດັບຊາດ ໄດ້ໃຫ້ຄຳປຶກສາແກ່ ອົງການທ່ອງທ່ຽວແຫ່ງຊາດ (LNTA), ມະຫາ ວິທະຍາໄລແຫ່ງຊາດ ແລະ ສະມາຄົມການນຳທ່ຽວ (LATA). ໃນຂັ້ນທ້ອງຖິ່ນ ໄດ້ໃຫ້ການຊ່ວຍເຫລືອແກ່ ຫ້ອງການທ່ອງທ່ຽວແຂວງ ແລະ ເມືອງຕ່າງໆ. ເປົ້າໝາຍສຸດທ້າຍແມ່ນເພື່ອສົ່ງເສີມການທ່ອງທ່ຽວທີ່ໃຫ້ປະໂຫຍດດ້ານຊີວິດການເປັນຢູ່ ແລະ ຊ່ວຍເຫລືອຜູ້ທຸກຍາກ.

## ການປະຕິຮູບທີ່ດິນ

### ທະນາຄານໂລກ ແລະ ອົດສະຕາລີ

- *ໂຄງການອອກໃບຕາດິນໄລຍະສອງ - LTP* (23,92 ລ້ານ US$: WB-14,82 ລ້ານ US$, AusAID-8,85 ລ້ານ US$ ແລະ ລັດຖະບານລາວ–2,27 ລ້ານ US$, 2003-2008). ໂຄງການ LTP ໄລຍະສອງ ແມ່ນແນໃສ່ພັດທະນາຄວາມສາມາດບໍລິຫານທີ່ດິນເພື່ອສະໜັບສະໜູນການພັດທະນາເສດ ຖະກິດ ແລະ ຫລຸດຜ່ອນຄວາມທຸກຍາກ. ຈຸດປະສົງ: 1) ຮັບປະກັນການຄອບຄອງທີ່ດິນຢ່າງຖືກຕ້ອງ; 2) ຈັດຕັ້ງສະຖາບັນຄຸ້ມຄອງທີ່ດິນທີ່ໂປ່ງໃສ; 3) ຍົກລະດັບຄວາມສາມາດຂອງລັດຖະບານເພື່ອສະໜອງການບໍລິການດ້ານເສດຖະກິດ-ສັງຄົມໂດຍເພີ່ມແຫລ່ງລາຍຮັບຈາກຄ່າທຳນຽມ ແລະ ພາສີທີ່ດິນ.

### ເຢຍລະມັນ (GTZ)

- *ໂຄງການພັດທະນານະໂຍບາຍທີ່ດິນ* (1,75 ລ້ານ US$, 2005-2008). ໂຄງການນີ້ມີຈຸດປະສົງໃນການປັບປຸງແຜນນະໂຍບາຍ ແລະ ກົດໝາຍດ້ານ ການຄຸ້ມຄອງ ແລະ ການເຊົ່າທີ່ດິນ ໃນ ສປປ ລາວ. ເປົ້າໝາຍລວມ ແມ່ນເພີ່ມຄວາມຮັບປະກັນດ້ານການເຊົ່າ ຫລື ຊື້ທີ່ດິນ ຂອງບຸກຄົນ, ກຸ່ມຄົນຕ່າງໆ ແລະ ອຳນາດການປົກຄອງລັດ. ໂຄງການນີ້ເປັນການປະກອບສ່ວນຂອງປະເທດເຢຍລະມັນເຂົ້າໃນໂຄງການໃບຕາດິນ ໄລຍະ II (ຂ້າງເທິງ).

### ກຸ່ມທະນາຄານໂລກ (IFC-MPDF)

- *IFC-MPDF: ການທ່ອງທ່ຽວ*. (0,5 ລ້ານ US$, 2005-08). ຈຸດປະສົງລວມແມ່ນເພື່ອ: 1) ດຶງດູດນັກທ່ອງທ່ຽວໃຫ້ໄດ້ຫຼາຍໂດຍສະເພາະແມ່ນປະເພດ ມູນຄ່າສູງ; 2) ຊຸກຍູ້ໃຫ້ນັກທ່ອງທ່ຽວຢູ່ດົນ; 3) ສົ່ງເສີມໃຫ້ນັກທ່ອງທ່ຽວຈ່າຍຫຼາຍຂຶ້ນ; 4) ເພີ່ມການໃຊ້ຈ່າຍພາຍໃນ. IFC-MPDF ໄດ້ສືບຕໍ່ກິດຈະກຳ ຂອງຕົນໃນນັ້ນລວມທັງການສ້າງປຶ້ມໂຄສະນາ “ຢູ່ອີກໜຶ່ງວັນ”, ຊຶ່ງສະບັບລຽບລຽງຄັ້ງທີສອງໄດ້ຖືກເຜີຍແຜ່ໃນເດືອນກຸມພາທີ່ຜ່ານມາ; ຊ່ວຍ LNTA ໃນການດັດແກ້ກົດໝາຍທີ່ກ່ຽວຂ້ອງ ແລະ ພັດທະນາຍີ່ຫໍ້ສຳລັບການທ່ອງທ່ຽວລາວ, ຈັດຝຶກອົບຮົມດ້ານບໍລິຫານການທ່ອງທ່ຽວສຳລັບຜູ້ໃຫ້ບໍລິການ.

# ຄຳຂອບໃຈ

ຂໍ້ມູນຕ່າງໆທີ່ນຳສະເໜີໃນບົດວາລະສານ "ລາວ ເອກາໂນມິກ ໂມນິເຕີ" ສະບັບນີ້ແມ່ນກ່ຽວກັບສະພາບເສດຖະກິດຂອງ ສປປ ລາວ ໃນໄລຍະຫົກເດືອນ ທີ່ຜ່ານມາ (ຕຸລາ-ມີນາ 2008). ທີມງານທະນາຄານໂລກປະຈຳລາວໄດ້ຈັດພິມບົດລາຍງານຫຍໍ້ນີ້ເປັນພາສາລາວ ແລະ ພາສາອັງກິດ ສອງຄັ້ງຕໍ່ປີ (ໃນໄຕມາດສອງ ແລະ ໄຕມາດສີ່ຂອງປີ) ຊຶ່ງໃນນັ້ນມີການສະຫລຸບຫຍໍ້ກ່ຽວກັບການພັດທະນາເສດຖະກິດທີ່ຜ່ານມາ (ພາກ I), ຄວາມຄືບໜ້າດ້ານການປະຕິຮູບໂຄງສ້າງຂອງລັດຖະບານ (ພາກ II), ແລະ ການຊ່ວຍເຫລືອຂອງບັນດາອົງການຜູ້ໃຫ້ທຶນໃນຂົງເຂດວຽກງານການປະຕິຮູບ (ພາກ III).

ບົດລາຍງານສະບັບນີ້ຂຽນໂດຍ ທ່ານ ສົມນຶກ ດາວະດົງ (ຫົວໜ້າທີມງານ) ພາຍໃຕ້ການຊີ້ນຳຂອງ ທ່ານ ເອກາເຈຣີນາ ວາສໂຊມູ່ໂຕວາ (ນັກເສດຖະສາດອາວຸໂສປະຈຳລາວ), ມາທິວ ເວີກິສ (ຫົວໜ້າຜູ້ຊີ້ນຳວຽກງານເສດຖະກິດປະຈຳອາຊີຕາເວັນອອກສ່ຽງໃຕ້) ແລະ ທ່ານ ປາຈາມູຕູ ອີລັນໂກວັນ (ຫົວໜ້າຫ້ອງການທະນາຄານໂລກປະຈຳລາວ). ການຂຽນບົດໄດ້ຮັບການປະກອບສ່ວນຈາກ ທ່ານ ເຣເລ ບູເຈບ (ທີ່ປຶກສາ), ຈາໂກໂບ ລຸຍສ ເດີ ວິລາ ກາໂຈ (ນັກວິໄຈ), ຄາເຢຕາໂນ ກາສາໂດ (ນັກວິໄຈ), ໂມຫັນເດີ ກຸລາຕິ (ຊ່ຽວຊານຊີ້ນຳດ້ານພະລັງງານ), ໂມເຕີນ ລາສັນ(ທີ່ປຶກສາ), ຊາບີ ໂມທັບ (ນັກເສດຖະສາດ), ແສງໄຊ ພູສິງຮວາ (ຊ່ຽວຊານດ້ານພາກເອກະຊົນ), ໂທມາສ ໂຣສ (ທີ່ປຶກສາ), ໂທມາສ ເມດເລ (ທີ່ປຶກສາ), ປີເຕີ ສິລາສກີ (ນັກເສດຖະສາດ), ສຸດາລັດ ສີລາເພັດ (ວິຊາການ), ວຽງສະໄໝ ວົງຄຳຊາວ (ຫົວໜ້າທີມງານ WSP), ເຄິ່ງທອງ ວົງໄຊຍາ (ນັກວິໄຈ), ໄຊຊະນິດ ວົງວຽງຄຳ (ທີ່ປຶກສາ) ແລະ ຂໍ້ຄິດເຫັນຂອງບັນດາຊ່ຽວຊານອື່ນໆຂອງທະນາຄານໂລກ.

ທະນາຄານໂລກຂໍສະແດງຄວາມຮູ້ບຸນຄຸນຕໍ່ລັດຖະບານ ແລະ ອົງການຜູ້ໃຫ້ທຶນຕ່າງໆທີ່ປະກອບສ່ວນໃຫ້ຂໍ້ມູນ ແລະ ຄຳເຫັນແກ່ຄະນະທີມງານ. ພວກເຮົາຂໍຂອບໃຈ ທ່ານ ສາຣາ ເມີເຣ ທີ່ຊ່ວຍລຽບລຽງວາລະສານ ແລະ ທ່ານ ມາຣີອາ ເຟີນັນດາ ມີຣາເລ ກາສປາຣີນີ (ວິຊາການດ້ານການສື່ສານ), ວຽງສະໄໝ ສີຣິທິຣາດ (ວິຊາການດ້ານການສື່ສານ) ແລະ ທາລາວັນ ວົງສອນເພັດ ທີ່ຊ່ວຍອອກແບບ ແລະ ຈັດວາລະສານໃໝ່. ຂໍຂອບໃຈພິເສດຕໍ່ ທ່ານ ເຮືອງຮອງ ທອງອຳໄພ (ພະນັກງານຊ່ວຍທີມງານປະຈຳຫ້ອງການທະນາຄານໂລກທີ່ບາງກອກ) ທີ່ຊ່ວຍຈັດພິມ ແລະ ພະນັກງານຫ້ອງການທະນາຄານໂລກປະຈຳລາວ ທີ່ຊ່ວຍແຈກຢາຍວາລະສານສະບັບນີ້.







ທີມງານທະນາຄານໂລກປະຈຳລາວ ຍິນດີຮັບຄຳເຫັນຕ່າງໆກ່ຽວກັບໂຄງຮ່າງ ແລະ ເນື້ອໃນ ຂອງວາລະສານ " ລາວ ເອກາໂນມິກ ໂມນິເຕີ " ສະບັບນີ້.




## THE WORLD BANK OFFICE, VIENTIANE

**Patou Xay Nehru Road**
**Vientiane, Lao PDR**
**Tel: (856-21) 414209, 450010-11**
**Fax: (856-21) 414210**
**www.worldbank.org/lao**










## THE WORLD BANK OFFICE

**1818 H Street, N.W.**
**Washington, D.C. 20433**
**U.S.A**
**Tel: (202) 473-1653**
**Fax: (202) 522-1560/1557**
**www.worldbank.org**





# LAO PDR ECONOMIC MONITOR